# ເອກະສານອົບຮົມສະມາຊິກພັກ
# (60 ຄໍາຖາມ-ຄໍາຕອບ)

**ຄໍາຖາມ 1: ພັກການເມືອງແມ່ນຫຍັງ, ເປັນຫຍັງຈຶ່ງມີພັກການເມືອງ?.**

**ຕອບ:** ພັກການເມືອງແມ່ນ ອົງການຈັດຕັ້ງນໍາພາສູງສຸດຂອງອົງການໃດໜຶ່ງ, ຂອງຊົນຊັ້ນໃດໜຶ່ງ ຫຼື ກຸ່ມຄົນໃດໜຶ່ງ ຢູ່ໃນສັງຄົມທີ່ຈັດຕັ້ງຂຶ້ນເພື່ອນໍາພາ, ປົກປ້ອງ ແລະ ຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນ ຫຼື ກຸ່ມຄົນໃດໜຶ່ງ.

✱ ມີພັກການເມືອງຍ້ອນວ່າ:

1. ເພື່ອນໍາພາຂະບວນການໃຫ້ໄປເຖິງຈຸດປະສົງທີ່ພັກການເມືອງນັ້ນກໍານົດໄວ້.

2. ເພື່ອປົກປ້ອງ ແລະ ຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນ.

3. ເພື່ອນໍາພາປະຊາຊົນ ຫຼື ສັງຄົມເດີນຕາມເສັ້ນທາງທີ່ພັກໄດ້ກໍານົດໄວ້.

ຕົວຢ່າງ: ພັກປະຊາຊົນປະຕິວັດລາວ ແມ່ນອົງການຈັດຕັ້ງການເມືອງສູງສຸດ ຂອງຊົນຊັ້ນກໍາມະກອນລາວ, ເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງປະຊາຊົນລາວ ຊາວຜູ້ອອກແຮງງານບັນດາເຜົ່າທີ່ຮັກຊາດ ແລະ ກ້າວໜ້າ, ທັງເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງຊາດອີກດ້ວຍ. ພັກຈັດຕັ້ງຂຶ້ນເພື່ອນໍາພາປວງຊົນລາວທັງຊາດຕໍ່ສູ້ຍາດເອົາເອກະລາດ ອະທິປະໄຕຂອງຊາດ ແລະ ສິດເປັນເຈົ້າຂອງປະຊາຊົນ, ນໍາພາການສ້າງສາປະເທດຊາດ ໃຫ້ວັດທະນະຖາວອນ.

**ຄໍາຖາມ 2: ພັກປະຕິວັດມາກ-ເລນິນ ແມ່ນພັກແບບໃດ ແລະ ແຕກຕ່າງກັບພັກການເມືອງອື່ນໆຢູ່ບ່ອນໃດ?.**

**ຕອບ:** ພັກປະຕິວັດມາກ-ເລນິນ ແມ່ນອົງການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກໍາມະກອນ, ພັກມາກ-ເລນິນ ແມ່ນພາກສ່ວນໜຶ່ງ ທີ່ບໍ່ຕັດແຍກອອກຈາກຊົນຊັ້ນກໍາມະກອນ; ຈຸດປະສົງ ແລະ ຜົນປະໂຫຍດຂອງພັກ ກໍແມ່ນຈຸດປະສົງ ແລະ ຜົນປະໂຫຍດຂອງຊົນຊັ້ນກໍາມະກອນ; ພັກມາກ-ເລນິນ ແມ່ນພັກທີ່ເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງປະຊາຊົນຊາວຜູ້ອອກແຮງງານ ແລະ ຂອງຊາດ. ພັກມາກ-ເລນິນ ແມ່ນກອງນໍາໜ້າຂອງຊົນຊັ້ນກໍາມະກອນ, ແມ່ນຜູ້ນໍາທາງການເມືອງ, ເປັນກອງເສນາທິການສູ້ຮົບຂອງຊົນຊັ້ນກໍາມະກອນ.

ພັກມາກ-ເລນິນ ຖືເອົາລັດທິມາກ-ເລນິນເປັນພື້ນຖານແນວຄິດ-ທິດສະດີຂອງຕົນ, ເປັນເຂັມຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວຂອງພັກ, ຍ້ອນແນວນັ້ນ ຈຶ່ງເອີ້ນວ່າ ພັກມາກ-ເລນິນ.

✱ ພັກມາກ-ເລນິນ ແຕກຕ່າງກັບພັກການເມືອງອື່ນໆ ຢູ່ບ່ອນຈຸດປະສົງ ແລະ ຜົນປະໂຫຍດ:

- ພັກຂອງນາຍທຶນ.

+ ຈຸດປະສົງ ແລະ ຜົນປະໂຫຍດ ແມ່ນເປັນຂອງກຸ່ມຄົນໃດໜຶ່ງໃນສັງຄົມ ໂດຍສະເພາະແມ່ນ ກຸ່ມຂອງນາຍທຶນເອງ.

+ ພັກການເມືອງຂອງນາຍທຶນ ຖືເອົາລັດທິກຳມະສິດເອກະຊົນ ເປັນພື້ນຖານແນວຄິດທິດ-ສະດີ, ປະຕິບັດລະບອບຂູດຮີດແຮງງານຮັບຈ້າງ, ເອົາຄຸນຄ່າສ່ວນເກີນ (ຜົນກຳໄລ) ເປັນປັດໄຈຄົງຕົວ ແລະ ຂະຫຍາຍຕົວຂອງຕົນ.

- ພັກມາກ-ເລນິນ.

+ ຈຸດປະສົງ ແລະ ຜົນປະໂຫຍດ ແມ່ນເພື່ອຊົນຊັ້ນກຳມະກອນ, ເພື່ອຊາວຜູ້ອອກແຮງງານໝົດທຸກຄົນ.

+ ພັກມາກ-ເລນິນຖືເອົາລັດທິມາກ-ເລນິນ ເປັນພື້ນຖານແນວຄິດທິດສະດີ, ເປັນເຂັມຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວຂອງພັກ.

**ຄຳຖາມ 3: ເວົ້າວ່າພັກກອມມູນິດອິນດູຈີນ ແມ່ນຕົ້ນກຳເນີດຂອງພັກປະຊາຊົນປະຕິວັດລາວນັ້ນ, ມີຄວາມໝາຍແນວໃດ?.**

**ຕອບ:** ພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 3 ກຸມພາ ປີ 1930 ພາຍໃຕ້ການຊີ້ນຳ-ນຳພາ ໂດຍກົງຂອງປະທານໂຮ່ຈີມິນ, ເປັນພັກເອກະພາບອັນໜຶ່ງອັນດຽວຢູ່ໃນອິນດູຈີນ ພັກໄດ້ວາງແນວທາງຍຸດທະສາດ, ຍຸດໂທບາຍຂອງການປະຕິວັດອິນດູຈີນອອກຢ່າງລະອຽດ ໃນແຕ່ລະໄລຍະ ເພື່ອນຳພາຂະບວນການຕໍ່ສູ້ຂອງປະຊາຊົນ 3 ປະເທດ ລາວ, ຫວຽດນາມ ແລະ ກຳປູເຈຍ ຕ້ານພວກລ່າເມືອງຂຶ້ນຝຣັ່ງ.

25 ປີ ແຫ່ງການຕໍ່ສູ້ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ໄດ້ເຮັດໃຫ້ການປະຕິວັດໃນອິນດູຈີນ ເວົ້າລວມ, ເວົ້າສະເພາະແມ່ນການປະຕິວັດຢູ່ລາວ ໄດ້ມີບາດກ້າວຂະຫຍາຍຕົວເຕີບໃຫຍ່ຂຶ້ນ ແລະ ມີປັດໄຈໃໝ່ກຳເນີດຂຶ້ນຄື: ເດືອນ 9 ປີ 1934 ອົງຄະນະພັກແຄວ້ນລາວ ໄດ້ຮັບການສ້າງຕັ້ງຂຶ້ນ ພັກໄດ້ຊຸກຍູ້ວຽກງານປຸກລະດົມຂົນຂວາຍຢູ່ເຂດຊົນນະບົດ ແລະ ເຂດຊົນເຜົ່າ ຖືຊາວໄຮ່ນາເປັນກຳລັງພື້ນຖານຂອງການປະຕິວັດ. ສະນັ້ນ ຈຶ່ງເຮັດໃຫ້ຂະບວນການຕໍ່ສູ້ລະເບີດຂຶ້ນແຕ່ຕ່ຳຫາສູງໃນທົ່ວປະເທດ ດ້ວຍຫຼາຍຮູບການທີ່ ເໝາະສົມ ແລະ ອຸດົມຮັ່ງມີຂຶ້ນ ຢ່າງບໍ່ຢຸດຢັ້ງ.

ປີ 1945 ກອງທັບແດງໂຊວຽດໄດ້ຕີເອົາຊະນະພວກຟາດຊິດເຢຍລະມັນ, ອີຕາລີ ແລະ ຟາດຊິດຍີ່ປຸ່ນໃນສົງຄາມໂລກຄັ້ງທີ II; ຢູ່ອິນດູຈີນ ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ການປະຕິວັດເດືອນສິງຫາຢູ່ຫວຽດນາມໄດ້ຮັບຜົນສຳເລັດ ແລະ ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ຂຶ້ນໃນວັນທີ 2 ກັນຍາ 1945; ຢູ່ລາວຄະນະພັກແຄວ້ນລາວ ໄດ້ເດັດດ່ຽວປຸກລະດົມປະຊາຊົນລຸກຮືຂຶ້ນຍຶດອຳນາດການປົກຄອງຈາກກຳມືຂອງພວກຍີ່ປຸ່ນ ໃນວັນທີ 23 ສິງຫາ 1945 ແລະ ໃນວັນທີ 12 ຕຸລາ 1945 ໄດ້ປະກາດຄວາມເປັນເອກະລາດ ຂອງປະເທດຕໍ່ໂລກຢ່າງເປັນທາງການ.

ປີ 1946 ຈັກກະພັດລ່າເມືອງຂຶ້ນຝຣັ່ງ ໄດ້ກັບຄືນມາຮູກຮານປະເທດອິນດູຈີນເປັນຄັ້ງ ທີສອງ; ພັກກອມມູນິດອິນດູຈີນ ໄດ້ນຳພາປະຊາຊົນອິນດູຈີນ ຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງເດັດດ່ຽວພິລະອາດຫານ ແລະ ສາມາດຍາດໄດ້ໄຊຊະນະໃນທຸກບັ້ນຮົບຢູ່ອິນດູຈີນ, ບັ້ນຮົບທີ່ຕັດສິນການປະລາໄຊຂອງພວກລ່າເມືອງຂຶ້ນຝຣັ່ງແມ່ນບັ້ນຮົບດຽນບຽນຟູ ຊຶ່ງໄດ້ບັງຄັບໃຫ້ພວກລ່າເມືອງຂຶ້ນຝຣັ່ງຕ້ອງຍອມເຊັນສັນຍາເຊີແນວ ໃນວັນທີ 21 ກໍລະກົດ 1954 ກ່ຽວກັບອິນດູຈີນ, ຮັບຮູ້ເອກະລາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງຫວຽດນາມ, ລາວ ແລະ ກຳປູເຈຍ; ສັນຍາເຊີແນວຮັບຮູ້ເອກະລາດ, ອະທິປະໄຕ ແລະ ຜືນ

ແຜ່ນ ດິນອັນຄົບຖ້ວນຂອງປະເທດລາວ, ຝ່າຍປະເທດລາວເປັນກໍາລັງເມືອງເອກະລາດຖືກກົດໝາຍ, ມີກອງທະ ຫານ, ມີເຂດເຕົ້າໂຮມຂອງຕົນຄື: ແຂວງຫົວພັນ ແລະ ຜົ້ງສາລີ.

ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກກອມມູນິດອິນດູຈີນ (ປີ 1951) ໄດ້ສັງເກດຕີລາຄາວ່າ: ຂະບວນການປະຕິວັດຂອງແຕ່ລະປະເທດໄດ້ເຕີບໃຫຍ່ຂະຫຍາຍຕົວ, ແຕ່ລະປະເທດສາມາດຈັດຕັ້ງພັກການເມືອງປະ ຕິວັດທີ່ມີໂຄງການການເມືອງ ແລະ ກົດລະບຽບທີ່ສອດຄ່ອງກັບສະພາບການຂອງໃຜລາວ. ແນວທາງ ແລະ ແຜນນະໂຍບາຍກ່ຽວກັບການສ້າງພັກມາກ-ເລນິນ ຢູ່ ແຕ່ລະປະເທດທີ່ກອງປະຊຸມໃຫຍ່ວາງອອກນັ້ນ ແມ່ນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການພາວະວິໄສ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງການປະຕິວັດໃນແຕ່ລະປະເທດ.

ຕໍ່ໜ້າຄວາມຮຽກຮ້ອງຕ້ອງການໃໝ່ຂອງການປະຕິວັດ ແລະ ປະຕິບັດຕາມມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງພັກກອມມູນິດອິນດູຈີນ, ບັນດານັກກອມມູນິດອິນດູຈີນທີ່ເປັນຄົນລາວພາຍຫຼັງທີ່ໄດ້ກະກຽມມາໄລຍະໜຶ່ງ ກໍໄດ້ເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດສ້າງຕັ້ງພັກຂອງຕົນຂຶ້ນ ໃນວັນທີ 22 ມີນາ ທີ່ບ້ານນາແມວ, ເມືອງວຽງໄຊ ແຂວງຫົວພັນ ເອີ້ນຊື່ວ່າ: “ພັກປະຊາຊົນລາວ” ຊຶ່ງແມ່ນພັກປະຊາຊົນປະຕິວັດລາວໃນປັດຈຸບັນ ໂດຍແມ່ນປະທານ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່ຂອງຄະນະບໍລິຫານງານສູນກາງພັກ.

ສະຫຼຸບແລ້ວ ພັກກອມມູນິດອິນດູຈີນຄືກັບພໍ່-ແມ່ທີ່ໃຫ້ກໍາເນີດແກ່ພັກປະຊາຊົນປະຕິວັດລາວເຮົາ; ເປັນຜູ້ອົບຮົມສັ່ງສອນ, ເປັນຜູ້ຊີ້ບອກເສັ້ນທາງເດີນ, ເປັນຜູ້ເບິ່ງແຍງລ້ຽງດູຈົນເຕີບໃຫຍ່ ເຂັ້ມແຂງສາມາດຜາບແພ້ສັດຕູທຸກໂຕໄດ້.

**ຄໍາຖາມ 4: ສະພາບການກໍາເນີດຂອງພັກປະຊາຊົນປະຕິວັດລາວ, ໂຄງການການເມືອງສະບັບທໍາອິດຂອງພັກມີແນວໃດ?.**

**ຕອບ:** ພັກປະຊາຊົນປະຕິວັດລາວ ສ້າງຕັ້ງຂຶ້ນ ໃນວັນທີ 22 ມີນາ 1955, ເປັນພັກທີ່ກໍາເນີດຂຶ້ນໃນປະເທດກະສິກໍາຫຼ້າຫຼັງ, ປະຊາຊົນລາວສ່ວນຫຼວງຫຼາຍແມ່ນຊາວໄຮ່ນາ, ແຕ່ກໍແມ່ນພັກທີ່ເດີນຕາມລັດທິມາກ-ເລນິນ, ເປັນພັກທີ່ສືບທອດພາລະກິດຂອງພັກກອມມູນິດອິນດູຈີນ, ເປັນພັກທີ່ເປັນຕົວແທນຂອງຊົນຊັ້ນກໍາມະກອນ ແລະ ຊາວຜູ້ອອກແຮງງານລາວທີ່ແທ້ຈິງ; ເດັດດ່ຽວປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆໃນທົ່ວປະເທດ. ພັກຖືເອົາການຮັບໃຊ້ຊາດ, ຮັບໃຊ້ປະຊາຊົນເປັນທິດນໍາພື້ນຖານໃນການເຄື່ອນໄຫວຂອງຕົນ.

ເພື່ອເຮັດສໍາເລັດໜ້າທີ່ ທີ່ມີກຽດສະຫງ່ານັ້ນ. ພັກໄດ້ວາງໂຄງການການເມືອງອອກມີ 12 ຂໍ້ຄື:

1. ຕ້ານຈັກກະພັດອາເມລິກາ ແລະ ລ່າເມືອງຂຶ້ນຝຣັ່ງ ທີ່ທໍາລາຍສັນຍາຢຸດຣົບ ແລະ ພວກລູກແຫຼ້ງຕົນມືຂອງເຂົາ ທີ່ພວມພິປອງທໍາລາຍສັນຕິພາບ, ແບ່ງແຍກຊາດເຮົາ, ແກ່ດຶງເອົາປະເທດ ເຮົາເຂົ້າກຸ່ມຮຸກຮານ ແລະ ຫວັງແກ່ຍາວພາວະກົດຂີ່ມປະເທດເຮົາ.

2. ຕໍ່ສູ້ທວງໃຫ້ລັດຖະບານລາຊະອານາຈັກຕ້ອງຈິງໃຈຮ່ວມມືກັບກໍາລັງປະເທດລາວ ເພື່ອປະຕິບັດສັນຍາຢຸດຣົບ, ປົບປຸງສັນຕິພາບ, ປະຕິບັດສິດເສລີພາບ ປະຊາທິປະໄຕ, ດໍາເນີນການເລືອກຕັ້ງທົ່ວໄປຢ່າງເສລີ ເພື່ອເຕົ້າໂຮມປະເທດຊາດເປັນເອກະພາບ, ສ້າງຕັ້ງລັດຖະບານປະສົມ ແລະ ສໍາເລັດພາລະກິດເອກະລາດແຫ່ງຊາດ.

3. ມະຫາສາມັກຄີທົ່ວປວງຊົນ, ສ້າງຕັ້ງແນວໂຮມເອກະພາບແຫ່ງຊາດຢ່າງກ້ວາງຂວາງ ໂດຍຕັ້ງຢູ່ບົນພື້ນຖານພັນທະພາບກຳມະກອນ-ຊາວນາ.

4. ກໍ່ສ້າງ ແລະ ປັບປຸງກຳລັງປະກອບອາວຸດ ແລະ ເຄິ່ງປະກອບອາວຸດໃຫ້ກາຍເປັນກອງທັບປະຊາຊົນ ເພື່ອປົກປັກຮັກສາເຂດທີ່ໝັ້ນ, ໜູນຫຼັງໃຫ້ແກ່ການຕໍ່ສູ້ທາງດ້ານການເມືອງ, ທັງເປັນເສົາຄ້ຳແຫ່ງການປົກປັກຮັກສາສັນຕິພາບ.

5. ປັວແປງຊີວິດການເປັນຢູ່ຂອງປະຊາຊົນທຸກຊັ້ນຄົນ: ຕໍ່ກຳມະກອນ, ຕ້ອງຮັບປະກັນໃຫ້ມີວຽກເຮັດງານທຳ ແລະ ຕ້ອງໄດ້ຮັບການດູແລ, ເບິ່ງແຍງເປັນຢ່າງດີ; ຕໍ່ຊາວໄຮ່ນາຕ້ອງມີດິນໄຮ່ດິນນາ ເພື່ອຂະຫຍາຍກະສິກຳ ແລະ ມີຢູ່, ມີກິນ; ຕໍ່ຊາວຜູ້ອອກແຮງງານດ້ວຍມັນສະໝອງຕ້ອງ ມີການໃຊ້ເຂົາເຈົ້າຢ່າງສົມກຽດ ແລະ ຊ່ວຍເຫຼືອເຂົາເຈົ້າ ເພື່ອຂະຫຍາຍຄວາມຮູ້ຄວາມສາມາດ; ຕໍ່ນາຍທຶນອຸດສາຫະກຳ-ການຄ້າ ຕ້ອງມີການສົ່ງເສີມໃຫ້ເຂົ້າເຈົ້າດຳເນີນການຜະລິດ-ທຸລະກິດ ເພື່ອພັດທະນາອຸດສາຫະກຳ-ການຄ້າ; ຕໍ່ຜູ້ຊົງຄຸນວຸດທິທີ່ຮັກຊາດ, ເຈົ້າກົກ, ເຈົ້າເຫຼົ່າ ຕ້ອງມີນະໂຍບາຍອັນເໝາະສົມ.

6. ປະຕິບັດສິດເສລີພາບ ປະຊາທິປະໄຕຕໍ່ປະຊາຊົນ: ເສລີພາບໃນການປາກເວົ້າ, ເສລີພາບໃນການຂີດຂຽນ, ເສລີພາບໃນການຈັດຕັ້ງ, ເສລີພາບໃນການຊຸມນຸມ, ເສລີພາບໃນການໄປ ມາຫາສູ່ກັນ ແລະ ອື່ນໆ.

7. ປະຕິບັດສິດເສລີພາບລະຫວ່າງຍິງ-ຊາຍ, ປະຕິບັດນະໂຍບາຍສະເໝີພາບ ແລະ ສາມັກຄີລະຫວ່າງເຜົ່າ, ລົບລ້າງຄວາມອາຄາດບາດໝາງ, ຄວາມແບ່ງແຍກລະຫວ່າງເຜົ່າຕ່າງໆຢູ່ ພາຍໃນປະເທດທີ່ພວກລ່າເມືອງຂຶ້ນ ແລະ ສັກດີນາເປັນຜູ້ກໍ່ຂຶ້ນ.

8. ເຄົາລົບສິດເສລີພາບໃນການເຊື່ອຖື ແລະ ຮີດຄອງປະເພນີຂອງປະຊາຊົນເຜົ່າຕ່າງໆ, ຕ້ານໄພບໍ່ຮູ້ໜັງສື, ຂະຫຍາຍວັດທະນະທຳແຫ່ງຊາດ.

9. ສຳລັບຊາວຕ່າງດ້າວທີ່ອາໄສຢູ່ໃນປະເທດລາວ ຕ້ອງເຄົາລົບເອກະລາດ, ອະທິປະໄຕ ຂອງລາວ ຈຶ່ງຈະໄດ້ຮັບປະກັນຊີວິດ, ຊັບສົມບັດ, ສິດເສລີພາບໃນການຕັ້ງພູມລຳເນົາ ແລະ ການທຸລະກິດ.

10. ຜູກມິດກັບທຸກປະເທດທີ່ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດເຮົາ. ຜູກສາຍສຳພັນໃນທຸກດ້ານ ລະຫວ່າງປະເທດເຮົາກັບບັນດາປະເທດດັ່ງກ່າວ ບົນຫຼັກການສະ ເ ໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

11. ຕັ້ງໜ້າກໍ່ສ້າງບຳລຸງພະນັກງານ, ໂດຍສະເພາະແມ່ນເອົາໃຈໃສ່ພະນັກງານກຳມະກອນ-ຊາວໄຮ່ນາ, ເຜົ່າຊົນສ່ວນໜ້ອຍ.

12. ອອກແຮງກໍ່ສ້າງພັກປະຊາຊົນປະຕິວັດລາວ ໃຫ້ກາຍເປັນພັກທີ່ເຂັ້ມແຂງຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ເພື່ອໃຫ້ມີຄວາມສາມາດພຽງພໍໃນການນຳພາການປະຕິວັດລາວ ໃຫ້ໄປສູ່ໄຊຊະນະສຸດທ້າຍ.

**ຄຳຖາມ 5: ພັກປະຊາຊົນປະຕິວັດລາວ ໄດ້ນຳພາການຕໍ່ສູ້ປົດປ່ອຍຊາດມີໄຊ ຍິ່ງໃຫຍ່ແນວໃດ?.**

**ຕອບ:** ນັບແຕ່ພັກໄດ້ກຳເນີດຂຶ້ນ, ພັກເຮົາໄດ້ເຊີດຊູຄວາມຮັບຜິດຊອບສູງຕໍ່ພາລະກຳທີ່ຊາດໄດ້ມອບໝາຍໃຫ້ ໂດຍໄດ້ວາງຍຸດທະສາດແຫ່ງການຕໍ່ສູ້ກູ້ຊາດຢ່າງຖືກຕ້ອງ; ໄດ້ນຳພາປວງຊົນລາວບັນດາເຜົ່າ

ຕໍ່ສູ້ປົດ ແອກແຫ່ງການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ຢ່າງຍືດເຍື້ອຍາວນານ ແລະ ມີໄຊຊະນະຍິ່ງໃຫຍ່ ຊຶ່ງສະແດງອອກຄື:

- ພັກໄດ້ນຳເອົາແນວຄິດທິດສະດີປະຕິວັດຂອງລັດທິມາກ-ເລນິນ ເຂົ້າສົມທົບກັບຈິດໃຈຮັກຊາດ-ຄຽດແຄ້ນສັດຕູຜູ້ຮຸກຮານຂອງປະຊາຊົນລາວບັນດາເຜົ່າ, ເສີມຂະຫຍາຍມູນເຊື້ອ ແລະ ນ້ຳໃຈເດັດດ່ຽວ ຕໍ່ສູ້ບໍ່ຍອມຈຳນົນຂອງປະຊາຊົນເຮົາໃຫ້ກາຍເປັນຂະບວນການຕໍ່ສູ້ປະຕິວັດທີ່ກ້າແກ່ນ.

- ພັກໄດ້ວາງແຜນຍຸດທະສາດ ແລະ ຍຸດທະວິທີປະຕິວັດປົດປ່ອຍຊາດ ຢ່າງຖືກຕ້ອງຄື: ໄດ້ສ້າງກ້ອນກຳລັງມະຫາສາມັກຄີອັນກວ້າງຂວາງ ເຂົ້າໃນແນວໂຮມກູ້ຊາດ ໂດຍບໍ່ຈຳແນກຊົນຊັ້ນ, ເພດໄວ, ຄວາມເຊື່ອຖື, ຊົນເຜົ່າ, ຄົນຢູ່ໃນຫຼືນອກປະເທດດ້ວຍຄຳຂວັນສັນຕິພາບ, ເປັນກາງ, ປອງດອງຊາດ, ເອກະລາດ, ປະຊາທິປະໄຕ ພາຍໃຕ້ການນຳພາຂອງພັກ.

- ພັກໄດ້ນຳພາການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງໄປພ້ອມກັນ; ທັງຕີທັງເຈລະຈາຫາທາງແກ້ໄຂ.

- ພັກໄດ້ອອກແຮງກໍ່ສ້າງ ແລະ ປັບປຸງກຳລັງປະຕິວັດຢູ່ສະເໝີ, ໄດ້ສົມທົບແໜ້ນກຳລັງແຮງຂອງຊາດ ກັບກຳລັງແຮງຂອງການຮ່ວມສຳພັນສູ້ຮົບລາວ-ຫວຽດນາມ ແລະ ກຳປູເຈຍ.

ຍ້ອນການນຳພາອັນສະຫຼຽວສະຫຼາດຂອງພັກນັ້ນ, ຈຶ່ງເຮັດໃຫ້ຂະບວນການຕໍ່ສູ້ຂອງປະຊາຊົນ ແລະ ບັນດາກຳລັງປະກອບອາວຸດ ເຮົາຍາດເອົາໄຊຊະນະນີ້ສູ່ໄຊຊະນະໃໝ່ທີ່ໃຫຍ່ຫຼວງຂຶ້ນເລື້ອຍໆ. ອັນພົ້ນເດັ່ນເປັນພິເສດ ແມ່ນໄດ້ກຳແໜ້ນກາລະໂອກາດນຳພາທົ່ວປວງຊົນລຸກຮື້ຂຶ້ນຍຶດອຳນາດໃນທົ່ວປະເທດ ແບບ "ບົວບໍ່ຊ້ຳນ້ຳບໍ່ຂຸ່ນ" ດ້ວຍສາມບາດຄ້ອນຍຸດທະສາດ ແລະ ສະຖາປະນາ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ ໃນວັນທີ 2 ທັນວາ ປີ 1975, ພາປະເທດຊາດອັນແສນຮັກຂອງພວກເຮົາກ້າວສູ່ສັງກາດໃໝ່ທີ່ສະຫວ່າງສະໄຫວ ແຫ່ງຄວາມຈະເລີນວັດທະນາ ແລະ ຄວາມກ້າວໜ້າທາງສັງຄົມ.

**ຄຳຖາມ 6: ບົດຮຽນຕົ້ນຕໍຂອງພັກຈາກການນຳພາການຕໍ່ສູ້ປົດປ່ອຍຊາດມີຫຍັງແດ່?.**

**ຕອບ:** ຈາກພຶດຕິກຳຕົວຈິງ ແຫ່ງການຕໍ່ສູ້ມີໄຊຂອງການປະຕິວັດປົດປ່ອຍຊາດ, ພັກເຮົາສາມາດຖອດຖອນບາງບົດຮຽນຕົ້ນຕໍ ດັ່ງນີ້:

1. ເຊີດຊູຄັນທຸງຊາດ-ປະຊາທິປະໄຕ, ແກ້ໄຂເນື້ອໃນ ແລະ ສາຍພົວພັນລະຫວ່າງສອງໜ້າທີ່ປະຕິວັດຊາດ ກັບປະຊາທິປະໄຕ ຢ່າງຖືກຕ້ອງ.

2. ກໍ່ສ້າງກ້ອນກຳລັງພັນທະພາບກຳມະກອນ-ຊາວນາອັນແໜ້ນແກ່ນ ພາຍໃຕ້ການນຳພາຂອງພັກ.

3. ສ້າງແນວໂຮມເອກະພາບແຫ່ງຊາດ ບົນພື້ນຖານພັນທະພາບກຳມະກອນ-ຊາວນາ ພາຍໃຕ້ການນຳພາຂອງພັກ.

4. ກຳແໜ້ນທັດສະນະກຳລັງຮຸນແຮງປະຕິວັດ, ສົມທົບສອງກຳລັງ ແລະ ສອງຮູບການຕໍ່ສູ້ຢ່າງ ແ ໜ້ນແຟ້ນ ເພື່ອຕີເອົາຊະນະສັດຕູຄື: ຕໍ່ສູ້ດ້ວຍອາວຸດກັບຕໍ່ສູ້ການເມືອງ.

5. ໝູນໃຊ້ "ຍຸດໂທບາຍປະນີປະນອມ" ທີ່ມີຫຼັກການກັບຝ່າຍກົງກັນຂ້າມ.

6. ສ້າງກະລະໂອກາດ, ກຳແໜ້ນກາລະໂອກາດ, ເສີມຂະຫຍາຍກຳລັງແຮງສັງລວມຂອງການປະຕິວັດ, ທັບມ້າງຢ່າງສິ້ນເຊີງກົງຈັກປົກຄອງປະຕິການຢ່າງເຖິງຖອງ, ຍາດເອົາໄຊຊະນະສົມບູນ.

7. ສົມທົບນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມະຊີບອັນແທ້ຈິງ ຢ່າງຖືກຕ້ອງຊຳນິຊຳນານ.

8. ເພີ່ມທະວີການນໍາພາຂອງພັກໃນຂົງເຂດຂອງການຕໍ່ສູ້.

**ຄໍາຖາມ 7: ສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ ແລະ ພັດທະນາປະເທດຊາດ ແມ່ນແນວໃດ?.**

**ຕອບ:** ປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນກໍແມ່ນການປົກປັກຮັກສາປະເທດຊາດ, ປົກປັກຮັກສາໝາກຜົນຂອງການປະຕິວັດທີ່ຍາດມາໄດ້, ປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໃຫ້ໄດ້ຢ່າງໝັ້ນຄົງ, ຮັບປະກັນໃຫ້ປະເທດເຮົາມີຄວາມສະຫງົບ ແລະ ມີສະຖຽນລະພາບທີ່ໜັກແໜ້ນ ໂດຍການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງຕັ້ງໜ້າ; ສ້າງໃຫ້ກອງທັບກາຍເປັນກອງທັບທີ່ເຂັ້ມແຂງທັນສະໄໝ, ເປັນກໍາລັງທີ່ຈົງຮັກພັກ ດີອັນບໍລິສຸດຜຸດຜ່ອງຕໍ່ຜົນປະໂຫຍດລວມຂອງຊາດ ເພື່ອເປັນກໍາລັງຫຼັກທີ່ສໍາຄັນໃນການປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນເຮົາ ສ້າງເງື່ອນໄຂອໍານວຍໃຫ້ແກ່ພາລະກິດສ້າງສາພັດທະນາປະເທດຊາດ ແລະ ການທໍາມາຫາກິນຂອງປະຊາຊົນເຮົາ.

- ພັດທະນາປະເທດຊາດ ແມ່ນການພັດທະນາເສດຖະກິດ-ສັງຄົມ, ວັດທະນະທໍາ ແລະ ຊີວິດການເປັນຢູ່ຂອງກະໂຕຄົນພາຍໃນຊາດໃຫ້ດີຂຶ້ນ, ມີລາຍຮັບສູງຂຶ້ນ ແລະ ມີສ່ວນເຫຼືອແຮໄວ້. ເຮັດໃຫ້ຄົນໃນຊາດໄດ້ຮັບການພັດທະນາ, ມີຄວາມຮູ້, ຄວາມສາມາດ, ມີຈິດໃຈໂອບເອື້ອອາລີ, ຮັກເຊື້ອແພງຊາດ, ມີນໍ້າໃຈບໍລິສຸດສັດຊື່, ຮັກຄວາມກ້າວໜ້າ ແລະ ມີສຸຂະພາບແຂງແຮງ ປະກອບສ່ວນພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງຂຶ້ນ.

**ຄໍາຖາມ 8: ຍ້ອນຫຍັງຈຶ່ງດໍາເນີນການປ່ຽນແປງໃໝ່, ເນື້ອໃນສໍາຄັນຂອງແນວທາງປ່ຽນແປງໃໝ່ມີຫຍັງແດ່?.**

**ຕອບ:** ພັກເຮົາດໍາເນີນການປ່ຽນແປງໃໝ່ ຍ້ອນວ່າ:

+ ຜ່ານໄລຍະໜຶ່ງທົດສະວັດ (1975-1985) ແຫ່ງການສ້າງລະບອບປະຊາທິປະໄຕປະຊາຊົນ ຢູ່ປະເທດເຮົາເຖິງວ່າ ມີຜົນສໍາເລັດອັນສໍາຄັນຫຼາຍປະການກໍຈິງ, ແຕ່ຄວາມອາດສາມາດບົ່ມຊ້ອນ ແລະ ກໍາລັງແຮງສັງລວມຂອງຊາດຍັງບໍ່ທັນໄດ້ຮັບການຂຸດຄົ້ນເສີມຂະຫຍາຍຢ່າງຕັ້ງໜ້າເທື່ອ.

+ ປະເທດສັງຄົມນິຍົມຈໍານວນໜຶ່ງ ໄດ້ປັບປຸງປ່ຽນແປງແນວທາງແຫ່ງການສ້າງສັງຄົມນິຍົມ:

+ ຢູ່ ສປ. ຈີນ ໄດ້ເລີ່ມປະຕິບັດແນວທາງ "ປະຕິຮູບ ແລະ ເປີດປະຕູສູ່ພາຍນອກ" ຕາມທິດສະດີຂອງທ່ານ ເຕິ້ງສຽວຜິງ ມາແຕ່ປີ 1978 ແລະ ໄດ້ປະສົບຜົນສໍາເລັດຢ່າງໜ້າພາກພູມໃຈ.

+ ຢູ່ສະຫະພາບໂຊວຽດໄດ້ເລີ່ມປະຕິບັດແນວທາງ "ເປເຣສະໂຕຍກາ" ແລະ "ກລາສະນົດ" ("ການປະຕິຮູບ" ແລະ "ເປີດປະຊາທິປະໄຕ") ໃນປີ 1985 ຊຶ່ງໃນເບື້ອງຕົ້ນໄດ້ປະສົບຜົນສໍາເລັດທີ່ສໍາຄັນຫຼາຍປະການ, ແຕ່ຕໍ່ມາໄດ້ເກີດມີຄວາມຜິດພາດດ້ານການກໍານົດວິທີການ ແລະ ມາດຕະການນໍາພາການປະຕິຮູບ ຈຶ່ງເກີດຄວາມສັບສົນວຸ້ນວາຍ ແລະ ເຮັດໃຫ້ສະຫະພາບໂຊວຽດລົ້ມສະລາຍໃນປີ 1991. ເຫດການແບບດຽວກັນໄດ້ແຜ່ລາມໄປຍັງປະເທດສັງຄົມນິຍົມຢູ່ລົບຕາເວັນອອກອື່ນໆ.

+ ຢູ່ ສສ ຫວຽດນາມໄດ້ເລີ່ມປະຕິບັດແນວທາງ “ໂດ້ຍເມີ້ຍ” (ປ່ຽນແປງໃໝ່) ໃນທ້າຍຊຸມປີ 1980 ແລະ ສາມາດຜ່ານຜ່າຄວາມຫຍຸ້ງຍາກອັນໜັກໜ່ວງໄດ້ຢ່າງໜ້າພາກພູມໃຈ ທັງຍາດໄດ້ໝາກຜົນອັນສຳຄັນຫຼາຍປະການ.

ໃນທ້າຍຂອງສະຕະວັດທີ 20 ການແຂ່ງຂັນ ແລະ ການຕໍ່ສູ້ປໍລະປັກລະຫວ່າງທຶນນິຍົມກັບສັງຄົມນິຍົມມີລັກສະນະຂ້ຽວຂາດ ແລະ ຮອບດ້ານ (ດ້ານການເມືອງ-ການທະຫານ; ດ້ານແນວຄິດຈິດຕະສາດ ແລະ ເສດຖະກິດ; ດ້ານການສຶກສາ-ວິທະຍາສາດ ແລະ ເຕັກໂນໂລຢີ...). ການແຂ່ງຂັນ ແລະ ຄວາມຂັດແຍ່ງປໍລະປັກດັ່ງກ່າວນັ້ນ ໄດ້ຈຳໃຫ້ປະເທດຕ່າງໆໃນໂລກ ຊຶ່ງໃນນັ້ນ, ລວມທັງປະເທດສັງຄົມນິຍົມຈຳເປັນຕ້ອງປັບປຸງປ່ຽນແປງແນວທາງນະໂຍບາຍຕໍ່ ພາຍໃນ ແລະ ຕໍ່ຕ່າງປະເທດ ເພື່ອການຄົງຕົວ ແລະ ການຂະຫຍາຍຕົວກ້າວຂຶ້ນ.

- ຈຸດປະສົງຂອງການປ່ຽນແປງໃໝ່ຢູ່ປະເທດເຮົາ:

1. ເພື່ອປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ສືບຕໍ່ພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມໃນເງື່ອນໄຂ ແລະ ສະພາບແວດລ້ອມໃໝ່ຢ່າງໜັກແໜ້ນ.

2. ເພື່ອສືບຕໍ່ບູລະນະແນວທາງຂອງພັກ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດຊາດ ແລະ ຖືກກັບກົດເກນພາວະວິໄສກ່ວາເກົ່າ ແນໃສ່ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ແລະ ເສີມຂະຫຍາຍກຳລັງແຮງຂອງຊາດໃຫ້ມີປະສິດທິຜົນສູງ.

3. ເພື່ອກຳຈັດປັດເປົ່າບັນດາປັດໄຈ ທີ່ກົດໜ່ວງໄປພ້ອມກັບການສ້າງເງື່ອນໄຂ, ກົນໄກ ແລະ ສະພາບແວດລ້ອມອັນອຳນວຍໃຫ້ແກ່ການຂະຫຍາຍກຳລັງການຜະລິດຢ່າງຕັ້ງໜ້າ ໄປຄຽງຄູ່ກັບການປັບປຸງການພົວພັນການຜະລິດໃຫ້ສອດຄ່ອງ, ການສ້າງໂຄງປະກອບ ແລະ ສ້າງກົນໄກເສດຖະກິດໃໝ່ໃຫ້ແທດເໝາະ, ຮັບປະກັນໃຫ້ການເຕີບໂຕມີລັກສະນະຕໍ່ເນື່ອງ, ໜັກແໜ້ນ ແລະ ຖືກທິດສັງຄົມນິຍົມ, ຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງດ້ານຊັບພະຍາກອນ ແລະ ທີ່ຕັ້ງພູມສາດຂອງປະເທດບົນພື້ນຖານການເຊື່ອມໂຍງເສດຖະກິດເຂົ້າກັບສາກົນ ແລະ ພາກພື້ນ ນຳໃຊ້ກາລະໂອກາດແຫ່ງຍຸກໂລກາພິວັດທາງເສດຖະກິດຢ່າງເປັນເຈົ້າການ.

4. ເພື່ອເຊີດຊູຖານະບົດບາດຂອງ ສປປ ລາວ ໃນປະຊາຄົມໂລກຢ່າງເໝາະສົມ ຍ້ອນເຫດຜົນແນວນັ້ນ ພັກເຮົາຈຶ່ງມີການປ່ຽນແປງໃໝ່.

**✱ ເນື້ອໃນແນວທາງປ່ຽນແປງໃໝ່ຂອງພັກເຮົາ.**

ເນື້ອໃນແນວທາງການປ່ຽນແປງໃໝ່ຢູ່ປະເທດເຮົາມີ 5 ດ້ານຄື: ຄວາມຮັບຮູ້ກ່ຽວກັບທິດສະດີ ແລະ ສະພາວະຄວາມເປັນຈິງ ຂອງປະເທດຊາດ, ດ້ານເສດຖະກິດ, ດ້ານສັງຄົມ-ວັດທະນະທຳ, ດ້ານລະບົບການເມືອງ ແລະ ດ້ານການພົວພັນຮ່ວມມືສາກົນ.

**1. ດ້ານຄວາມຮັບຮູ້ກ່ຽວກັບທິດສະດີ ແລະ ສະພາວະຄວາມເປັນຈິງ ຂອງປະເທດຊາດ.**

+ ກ່ຽວກັບລັກສະນະຂອງການປະຕິວັດໃນໄລຍະໃໝ່ຢູ່ປະເທດເຮົາ.

ພັກເຮົາໄດ້ນຳພາລິເລີ່ມການປ່ຽນແປງໃໝ່ ດ້ານການສ້າງຄວາມຮັບຮູ້ໃໝ່ກ່ຽວກັບລັດທິສັງຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມ. ຄວາມຮັບຮູ້ໃໝ່ດັ່ງກ່າວນັ້ນສະແດງອອກ ກ່ອນອື່ນໝົດໃນການກຳ ແໜ້ນ ແລະ ຄວາມປະດິດສ້າງໃນການໝູນໃຊ້ຫຼັກມູນຂອງທິດສະດີມາກ-ເລນິນ ທີ່ວ່າທຸກໆປະຊາຊາດລ້ວນແຕ່ກ້າວສູ່ສັງຄົມນິຍົມ, ແຕ່ບໍ່ແມ່ນວ່າປະຊາຊາດໃດໆກໍຈະໄປເຖິງບ່ອນນັ້ນ ດ້ວຍມາດຕະການທີ່ຄືກັນອ້ອຍຕ້ອຍ...

ປະເທດລາວເປັນປະເທດດ້ອຍພັດທະນາ ຊຶ່ງປະກອບດ້ວຍຫຼາຍຊົນເຜົ່າທີ່ມີລະດັບການສຶກສາຕໍ່າ, ຄວາມຮັບຮູ້ທາງສັງຄົມບໍ່ສູງ ບົນພື້ນຖານການກໍາແໜ້ນສະພາວະຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ, ການເມືອງຂອງປະເທດເຮົາ ແລະ ກົດເກນພາວະວິໄສ ພັກເຮົາໄດ້ສ້າງຄວາມຮູ້ໃໝ່ ກ່ຽວກັບລັກສະນະຂອງການປະຕິວັດຢູ່ປະເທດເຮົາວ່າ: ການປະຕິວັດເຮົາພວມຢູ່ໃນໄລຍະແຫ່ງການປັບປຸງ, ຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຂ້າມຜ່ານຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ. ມະຕິ 7 (ສະໄໝ IV) ປີ 1989 ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງພັກເຮົາ (ປີ 1991) ສືບຕໍ່ຢືນຢັນວ່າ: "ການປະຕິວັດຂອງປະເທດເຮົາປັດຈຸບັນ ພວມຢູ່ໃນໄລຍະແຫ່ງການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິໄຕປະຊາຊົນ, ສ້າງບັນດາປະຖົມປັດໄຈ ເພື່ອກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ. ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ (ປີ 2002) ໄດ້ສືບຕໍ່ຢືນຢັນຢ່າງໜັກແໜ້ນວ່າ: "ສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຕາມເສັ້ນທາງສັງຄົມນິຍົມ".

**+ ກ່ຽວກັບຂໍ້ຂັດແຍ່ງພື້ນຖານໃນສັງຄົມປະເທດເຮົາ.**

ແຕ່ກ່ອນໄດ້ກໍານົດວ່າ: ຂໍ້ຂັດແຍ່ງພື້ນຖານແມ່ນຂໍ້ຂັດແຍ່ງລະຫວ່າງສອງເສັ້ນທາງສັງຄົມນິຍົມກັບທຶນນິຍົມ.

**ຕາມຄວາມຮັບຮູ້ໃໝ່: ຂໍ້ຂັດແຍ່ງພື້ນຖານກວ່າໝູ່ຢູ່ປະເທດເຮົາ ແມ່ນຂໍ້ຂັດແຍ່ງລະຫວ່າງກໍາລັງການຜະລິດທີ່ຍັງຫຼ້າຫຼັງເກີນໄປ ກັບຄວາມຮຽກຮ້ອງຕ້ອງການແຫ່ງການຂະຫຍາຍການຜະລິດ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນທຸກດ້ານທີ່ນັບມື້ນັບເພີ່ມຂຶ້ນຂອງສັງຄົມ.** ສະນັ້ນ, ຈຶ່ງສຸມໃສ່ຂະຫຍາຍກໍາລັງການຜະລິດດ້ວຍການນໍາໃຊ້ ແລະ ສົ່ງເສີມບັນດາພາກສ່ວນເສດຖະກິດໃນການດໍາເນີນທຸລະກິດ ແລະ ເປີດກວ້າງການຜະລິດ, ຫັນປ່ຽນເສດຖະກິດທໍາມະຊາດເປັນເສດຖະກິດສິນຄ້າ, ຕອບສະໜອງຕາມຄວາມຕ້ອງການ ແລະ ປົວແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ; ສ້າງຄວາມສອດຄ່ອງກັນລະຫວ່າງການພົວພັນການຜະລິດກັບກໍາລັງການຜະລິດ.

**+ ກ່ຽວກັບລະບອບກໍາມະສິດ ແລະ ພາກສ່ວນເສດຖະກິດໃນລະບອບປະຊາທິປະໄຕປະຊາຊົນ.**

ຕາມຄວາມຮັບຮູ້ເກົ່າ: ເພື່ອກ້າວໄປເຖິງສັງຄົມນິຍົມ ນັ້ນຈະຕ້ອງກັດສ້າງພາກສ່ວນເສດຖະກິດໃຫ້ເຫຼືອພຽງແຕ່ສອງຮູບການຄື: ກໍາມະສິດທົ່ວປວງຊົນ (ລັດ) ແລະ ລວມໝູ່. ຈາກນັ້ນ ຈຶ່ງມີທິດທາງ, ວິທີການກໍາຈັດບັນດາພາກສ່ວນເສດຖະກິດ ແລະ ຮູບການກໍາມະສິດອື່ນໂດຍໄວ.

ຕາມຄວາມຮັບຮູ້ໃໝ່: ໄດ້ກໍານົດແຈ້ງວ່າ: ໂຄງປະກອບເສດຖະກິດໃນລະບອບປະຊາທິປະໄຕປະຊາຊົນ ແມ່ນໂຄງປະກອບເສດຖະກິດສິນຄ້າທີ່ມີຫຼາຍຮູບການກໍາມະສິດ, ຫຼາຍຮູບການຈັດຕັ້ງເສດຖະກິດດ້ວຍຫຼາຍລະດັບ ແລະ ຫຼາຍຂະໜາດຕ່າງກັນ. ຍ້ອນແນວນັ້ນ ໃນພື້ນຖານເສດຖະກິດຂອງລະບອບປະຊາທິປະໄຕປະຊາຊົນ ຈຶ່ງມີຫຼາຍຮູບການກໍາມະສິດ ແລະ ມີຫຼາຍພາກສ່ວນເສດຖະກິດເຊັ່ນ: ເສດຖະກິດຂອງລັດ, ເສດຖະກິດເອກະເທດຂອງຄອບຄົວ, ເສດຖະກິດຮ່ວມມືຂອງປະຊາຊົນ, ເສດຖະກິດຫຸ້ນສ່ວນ, ເສດຖະກິດນາຍທຶນເອກະຊົນ, ເສດຖະກິດຮ່ວມທຸລະກິດກັບຕ່າງປະເທດ... ພາກສ່ວນເສດຖະກິດເຫຼົ່ານີ້ ສໍາພັນກັນກາຍເປັນລະບົບເສດຖະກິດ-ສັງຄົມ ດ້ວຍໂຄງປະກອບກໍາມະສິດຫຼາຍຮູບຫຼາຍແບບ ຊຶ່ງພາກສ່ວນເສດຖະກິດຂອງລັດເປັນຫຼັກແຫຼ່ງ ແລະ ສອດທ້ອຍເຂົ້າໃນຂົງເຂດຕ່າງໆ.

**2. ດ້ານເສດຖະກິດ.**

✱ ເນື້ອໃນຕົ້ນຕໍ ແລະ ເປັນໃຈກາງກ່ວາໝູ່ຂອງການປ່ຽນແປງໃໝ່ທາງດ້ານເສດຖະກິດຢູ່ປະເທດເຮົາ ແມ່ນການຫັນຈາກເສດຖະກິດວັດຖຸພັນມາເປັນເສດຖະກິດສິນຄ້າ ຫຼື ຫັນເສດຖະກິດທຳມະຊາດກຸ້ມຕົນເອງພໍໃຜພໍລາວຫັນໄປສູ່ເສດຖະກິດສິນຄ້າ. ໝາຍຄວາມວ່າ ເຮັດໃຫ້ການຜະລິດ, ການແລກປ່ຽນຜ່ານເງິນ, ຜ່ານຕະຫຼາດ, ເອົາການພົວພັນສິນຄ້າ-ເງິນຕາຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ ແລະ ເຮັດໃຫ້ເກີດມີການແບ່ງງານສັງຄົມ, ດັດແປງເຕັກນິກ ແລະ ຍົກສະມັດຕະພາບຂອງງານ.

✱ ການປ່ຽນແປງໃໝ່ໃນຂົງເຂດເສດຖະກິດ ແມ່ນການຫັນສູ່ການປະຕິບັດກົນໄກຄຸ້ມຄອງໃໝ່ໂດຍມີການຈຳແນກແຈ້ງພາລະບົດບາດຄຸ້ມຄອງລັດ ແລະ ພາລະບົດບາດຄຸ້ມຄອງການຜະລິດທຸລະກິດ. ລັດປະຕິບັດພາລະບົດບາດຄຸ້ມຄອງມະຫາພາກໂດຍສຸມໃສ່ບາງບັນຫາ ດັ່ງນີ້:

- ສ້າງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມໃນທົ່ວປະເທດ, ທົ່ວຂະແໜງການ ແລະ ທ້ອງຖິ່ນ.

- ຄົ້ນຄ້ວາອອກກົດໝາຍ, ນະໂຍບາຍ ແລະ ລະບຽບການຕ່າງໆ ກໍຄືຂໍ້ກຳນົດກົດໝາຍເສດຖະກິດ-ເຕັກນິກ.

- ປະສານງານ ແລະ ຈັດຕັ້ງຊີ້ນຳການເຄື່ອນໄຫວລະຫວ່າງຂະແໜງການຕ່າງໆ, ລະຫວ່າງເສດຖະກິດ-ສັງຄົມ, ເສດຖະກິດກັບປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

- ສ້າງແຜນກຳນົດ ແລະ ແຜນການກໍ່ສ້າງບຳລຸງຍົກລະດັບພະນັກງານ, ຈັດວາງສັບຊ້ອນ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານຢ່າງເໝາະສົມ.

- ຕິດຕາມກວດກາການປະຕິບັດກົດໝາຍ ນະໂຍບາຍ ແລະ ລະບຽບການຕ່າງໆຂອງລັດໃຫ້ສັກສິດ.

ໝາຍຄວາມວ່າ: ລັດບໍ່ເຮັດພາລະບົດບາດຄຸ້ມຄອງການຜະລິດທຸລະກິດໂດຍກົງ ແຕ່ຫາກສຸມໃສ່ເຮັດພາລະບົດບາດດັດສົມມະຫາພາກເປັນຕົ້ນຕໍ.

**3. ດ້ານສັງຄົມ-ວັດທະນະທຳ.**

ເນື້ອໃນຕົ້ນຕໍຂອງບັນຫານີ້ ແມ່ນໃຫ້ຄວາມສຳຄັນແກ່ການພັດທະນາສັງຄົມໄປຄຽງຄູ່ກັບ ການພັດທະນາເສດຖະກິດ, ໃນນີ້ ແມ່ນຖືເອົາການພັດທະນາຄົນເປັນໃຈກາງ. ພ້ອມກັນນັ້ນ ກໍຖືການສ້າງຄວາມສີວິໄລທາງຈິດໃຈ, ການສ້າງຄົນທາງດ້ານຄຸນສົມບັດສິນທຳເປັນສິ່ງທີ່ຂາດບໍ່ໄດ້ໄປຄຽງຄູ່ກັບການສ້າງຄວາມຈະເລີນທາງດ້ານວັດຖຸ.

**4. ດ້ານລະບົບການເມືອງ.**

ການປ່ຽນແປງໃໝ່ໃນລະບົບການເມືອງ ບໍ່ໝາຍເຖິງການປ່ຽນແປງໃໝ່ລະບອບການເມືອງນີ້ດ້ວຍລະບອບການເມືອງອື່ນ, ແຕ່ຫາກແມ່ນການບູລະນະການຈັດຕັ້ງຂອງລະບົບການເມືອງໃນລະບອບປະຊາທິປະໄຕປະຊາຊົນ ແລະ ປ່ຽນແປງໃໝ່ແບບວິທີເຄື່ອນໄຫວຂອງມັນ ບົນພື້ນຖານການກຳນົດພາລະບົດບາດ, ໜ້າທີ່ຂອງແຕ່ລະອົງປະກອບໃຫ້ແຈ້ງ, ຮັບປະກັນເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາຂອງພັກ, ເຊີດຊູຄວາມສັກສິດໃນການຄຸ້ມຄອງອຳນວຍຄວບຄຸມຂອງອົງການລັດ. ພ້ອມກັນນັ້ນ ກໍເສີມຂະຫຍາຍບົດບາດຂອງບັນດາອົງການຈັດຕັ້ງມະຫາຊົນ, ເຮັດໃຫ້ທົ່ວລະບົບການເມືອງ ແລະ ແຕ່ລະອົງປະກອບຂອງມັນເຄື່ອນໄຫວຢ່າງຖືກຕ້ອງກັບພາລະບົດບາດຂອງຕົນດ້ວຍຄວາມຄ່ອງຕົວ ແລະ ກົມກຽວກັນ.

**5. ດ້ານການພົວພັນຕ່າງປະເທດ ແລະ ຮ່ວມມືກັບສາກົນ.**

ໃນແນວທາງປ່ຽນແປງໃໝ່ຂອງພັກເຮົາໄດ້ເວົ້າແຈ້ງວ່າ: ຢາກພັດທະນາປະເທດຊາດໃຫ້ຫຼຸດພົ້ນຈາກສະພາວະທຸກຍາກຫຼ້າຫຼັງ, ມີຄວາມຈຳເປັນຕ້ອງເປີດກ້ວາງການພົວພັນກັບຕ່າງປະເທດ, ເອົາເສດຖະກິດຂອງປະເທດເຮົາຕິດພັນກັບເສດຖະກິດຂອງໂລກ.

- ຈຸດປະສົງຂອງການເປີດກ້ວາງການພົວພັນ ແລະ ຮ່ວມມືສາກົນຕາມແນວທາງປ່ຽນແປງໃໝ່ແມ່ນເພື່ອຍາດແຍ່ງເອົາທຶນຮອນ, ເຕັກນິກ ແລະ ເຕັກໂນໂລຢີ, ຄວາມຮູ້, ຄວາມຊຳນານ ແລະ ວິທີຄຸ້ມຄອງທີ່ກ້າວໜ້າ.

- ການເປີດກ້ວາງການພົວພັນກັບຕ່າງປະເທດ ແລະ ຮ່ວມມືສາກົນຕ້ອງເປັນໄປຕາມຫຼັກການຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຮັບປະກັນເອກະລາດ, ອະທິປະໄຕຂອງປະເທດ ແລະ ກົດໝາຍຂອງລັດເຮົາ.

- ຢາກເປີດກ້ວາງການພົວພັນກັບຕ່າງປະເທດໄດ້ດີ ກ່ອນອື່ນໝົດຕ້ອງສ້າງກຳລັງຂອງພວກເຮົາໃຫ້ເຂັ້ມແຂງຮອບດ້ານຄື: ດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມ, ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ຄຳຖາມ 9: 6 ຫຼັກການໃນການດຳເນີນພາລະກິດປ່ຽນແປງໃໝ່ມີຫຍັງແດ່?.**

**ຕອບ:** ເພື່ອຮັບປະກັນພາລະກິດປ່ຽນແປງໃໝ່ຂອງພັກເຮົາດຳເນີນໄປສູ່ຈຸດໝາຍທີ່ໄດ້ກຳນົດໄວ້ນັ້ນ, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 (ສະໄໝ IV) ປີ 1989 ໄດ້ວາງ 6 ຫຼັກການຂອງການປ່ຽນແປງໃໝ່ ດັ່ງນີ້:

ຫຼັກການທີ 1: ຍຶດໝັ້ນຈຸດໝາຍສັງຄົມນິຍົມ.

ຫຼັກການທີ 2: ຍຶດໝັ້ນ ແລະ ໝູນໃຊ້ ລັດທິມາກ-ເລນິນ ຢ່າງປະດິດສ້າງ, ສອດຄ່ອງກັບຈຸດພິເສດຂອງປະເທດເຮົາ.

ຫຼັກການທີ 3: ຍຶດໝັ້ນໃນການນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ.

ຫຼັກການທີ 4: ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ສ້າງກຳລັງສາມັກຄີທົ່ວປວງຊົນ ແລະ ຄວາມເປັນປຶກແຜ່ນຂອງຊາດລາວເອກະພາບ.

ຫຼັກການທີ 5: ເພີ່ມທະວີຄວາມສັກສິດຂອງລະບົບອຳນາດປະຊາທິປະໄຕປະຊາຊົນ, ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປະກົດການອາດຍາສິດທຸກຮູບແບບ.

ຫຼັກການທີ 6: ເຊີດຊູຈິດໃຈເອກະລາດເປັນເຈົ້າຕົນເອງ ສົມທົບກຳລັງແຮງຍຸກສະໄໝ.

**ຄຳຖາມ 10: 5 ບົດຮຽນຂອງການປ່ຽນແປງໃໝ່ມີອັນໃດແດ່?.**

**ຕອບ:** ພາຍຫຼັງພັກນຳໃຊ້ແນວທາງປ່ຽນແປງໃໝ່ ດ້ວຍວິທີການປະຕິຮູບແນວທາງເສດຖະກິດ ແລະ ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດມາໄດ້ໄລຍະໜຶ່ງນັ້ນ ພັກເຮົາສາມາດຖອດຖອນໄດ້ 5 ບົດຮຽນສຳຄັນ ດັ່ງນີ້:

ບົດຮຽນທີ 1: ການເພີ່ມທະວີຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໄຈຕັດສິນຜົນສຳເລັດຂອງພາລະກິດປ່ຽນແປງໃໝ່.

ບົດຮຽນທີ 2: ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງອັນມະຫາສານຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອຜົນປະໂຫຍດຂອງປະຊາຊົນ.

ບົດຮຽນທີ 3: ການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແມ່ນເງື່ອນໄຂອັນຈຳເປັນ ສຳລັບການປ່ຽນແປງໃໝ່. ແຕ່ຢາກໃຫ້ພາລະກິດປ່ຽນແປງໃໝ່ມີຜົນສຳເລັດຕ້ອງດຳເນີນໄປຢ່າງຄົບຊຸດ, ຮອບຄອບດ້ວຍບາດກ້າວອັນເໝາະສົມ.

ບົດຮຽນທີ 4: ການເພີ່ມທະວີບົດບາດການນຳພາຂອງພັກໃນທຸກຂົງເຂດວຽກງານ ແລະ ການເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງລັດ ແມ່ນເງື່ອນໄຂຮັບປະກັນໃຫ້ການປ່ຽນແປງໃໝ່ດຳເນີນໄປຢ່າງຖືກຕ້ອງຕາມແນວທາງ ແລະ ຈຸດໝາຍຂອງພັກ.

ບົດຮຽນທີ 5: ເສີມຂະຫຍາຍກຳລັງແຮງຂອງຊາດສົມທົບກັບກຳລັງແຮງຂອງຍຸກສະໄໝ, ຍາດແຍ່ງເອົາການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກສາກົນຢ່າງມີຫຼັກການ ແມ່ນສິ່ງທີ່ຂາດບໍ່ໄດ້ສຳລັບການສ້າງສາພັດທະນາປະເທດຊາດ.

**ຄຳຖາມ 11: ບົດບາດນຳພາຮອບດ້ານ ແລະ ຄວາມຮັບຜິດຊອບຂອງພັກສະແດງອອກແນວໃດ?.**

**ຕອບ:** ພັກປະຊາຊົນປະຕິວັດລາວ ເປັນພັກກຳອຳນາດມີຄວາມຮັບຜິດຊອບໃນການນຳ ພາທົ່ວປວງຊົນ, ວາງແຜນ ແລະ ບູລະນະແນວທາງນະໂຍບາຍໃໝ່ ທີ່ມີລັກສະນະກຳນົດທິດຂະຫຍາຍຕົວຂອງປະເທດຊາດ ໃນທຸກຂົງເຂດໃຫ້ສອດຄ່ອງກັບກົດເກນຂະຫຍາຍຕົວຂອງສັງຄົມ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງປະເທດຊາດ, ຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນບັນດາເຜົ່າ ເຕົ້າໂຮມຄວາມສາມັກຄີເປັນເອກະພາບທົ່ວປວງຊົນລາວທັງຊາດ. ພັກເປັນແກນນຳໃນລະບົບການເມືອງແຫ່ງລະບອບປະຊາທິປະໄຕປະຊາຊົນ, ເສີມຂະຫຍາຍພາລະບົດບາດຄຸ້ມຄອງຈັດຕັ້ງປະຕິບັດຂອງລັດ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ. ພັກເຄົາລົບ ແລະ ເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍ.

- ພັກນຳພາກໍ່ສ້າງກົງຈັກລັດໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

- ພັກເປັນຜູ້ກວດກາຕໍ່ລັດ ແລະ ທຸກການຈັດຕັ້ງໃນລະບົບການເມືອງກ່ຽວກັບການເຜີຍແຜ່, ຈັດຕັ້ງປະຕິບັດ ແລະ ຫັນເອົາແນວທາງນະໂຍບາຍຂອງພັກເປັນຂໍ້ກຳນົດ, ກົດໝາຍ, ເປັນຄຳສັ່ງ, ຂໍ້ຕົກລົງຕ່າງໆ ເພື່ອຄຸ້ມຄອງສັງຄົມ.

- ພັກຮັບຜິດຊອບການກໍ່ສ້າງ, ການບຳລຸງ, ການບັນຈຸສັບຊ້ອນ, ນຳໃຊ້ພະນັກງານ.

- ພັກມີຄວາມຮັບຜິດຊອບນຳພາການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຕະຫຼອດຮອດປະຊາຊົນເຜົ່າຕ່າງໆໃນການປົກປັກຮັກສາ ແລະ ປ້ອງກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ.

- ພັກຮັບຜິດຊອບນຳພາອົງການຈັດຕັ້ງທັງພາກລັດ, ເອກະຊົນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ຫັນເອົາແນວທາງ, ແຜນນະໂຍບາຍທີ່ພັກວາງອອກເປັນແຜນການ, ແຜນງານ, ໂຄງການອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ເປັນຈິງ.

- ພັກນຳພາການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງຕ່າງໆ ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ວັດທະນະທຳເຊັ່ນ: ຂະຫຍາຍຕາໜ່າງການສຶກສາ, ວຽກງານສາທາລະນະສຸກ, ກິ

ລາກາຍະກຳ, ໄຟຟ້າ, ຖະໜົນຫົນທາງ ແລະ ອື່ນໆລົງສູ່ຮາກຖານປະຊາຊົນໃຫ້ທົ່ວເຖິງ ເພື່ອພັດທະນາຄວາມສີວິໄລທາງດ້ານຈິດໃຈໄປຄຽງຄູ່ກັບຄວາມກ້າວໜ້າທາງວັດຖຸ.

- ພັກຮັບຜິດຊອບນຳພາປະຊາຊົນ ຫັນປ່ຽນແບບແຜນການດຳລົງຊີວິດແບບທຳມະຊາດ ແລະ ເຄິ່ງທຳມະຊາດໄປສູ່ການດຳລົງຊີວິດແບບໃໝ່ດ້ວຍວິທີການຜະລິດເປັນສິນຄ້າ, ແລກປ່ຽນຊື້-ຂາຍ ສ້າງແຫຼ່ງລາຍຮັບເຂົ້າຄອບຄົວ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນເທື່ອລະກ້າວ.

**ຄຳຖາມ 12: ເອົາທິດສະດີມາກ-ເລນິນ ເປັນພື້ນຖານທາງດ້ານແນວຄິດຂອງພັກ ມີຄວາມໝາຍແນວໃດ?.**

**ຕອບ:** ລັດທິມາກ-ເລນິນ ແມ່ນຍອດສູງແຫ່ງສະຕິປັນຍາຂອງມວນມະນຸດ ຊຶ່ງເປັນທິດສະດີທີ່ມີລັກສະນະປະຕິວັດ, ວິທະຍາສາດ. ດັ່ງນັ້ນ, ການເອົາທິດສະດີມາກ-ເລນິນ ເປັນພື້ນຖານທາງດ້ານແນວຄິດຂອງພັກມີຄວາມໝາຍວ່າ ພັກເຮົາໄດ້ເອົາສອງລັກສະນະພິເສດຂອງລັດທິມາກ-ເລນິນ ຄື: ລັກສະນະປະຕິວັດ ແລະລັກສະນະວິທະຍາສາດມາເຊື່ອມຊຶມເຂົ້າໃນການເຄື່ອນໄຫວກໍ່ສ້າງພັກທາງດ້ານການເມືອງ, ແນວຄິດ ແລະການຈັດຕັ້ງຂອງຕົນ; ເຂົ້າໃສ່ແນວທາງປະຕິວັດ ແລະ ວິທີປະຕິວັດ, ເຂົ້າໃນການເຄື່ອນໄຫວຕໍ່ສູ້ຂອງພັກໃນທຸກໄລຍະ, ທຸກສະໄໝຂອງການປະຕິວັດ; ພັກຍາມໃດກໍຖືເອົາພຶດຕິກຳປະຕິວັດ, ຖືເອົາຄວາມເປັນຈິງທີ່ມີຊີວິດຊີວາຂອງສັງຄົມລາວເປັນຈຸດເລີ່ມໃນການໝູນໃຊ້ບັນດາຫລັກມູນຂອງລັດທິມາກ-ເລນິນ. ຍ້ອນ ພັກເຮົາເອົາລັດທິມາກ-ເລນິນ ເຊື່ອມຊຶມເຂົ້າທັງໝົດການເຄື່ອນໄຫວຂອງພັກ ຈຶ່ງເຮັດໃຫ້ການວາງແນວທາງ ແລະ ວິທີການປະຕິວັດຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດຊາດ, ດ້ວຍແນວທາງທີ່ເປັນເອກະລາດ ແລະ ມີຄວາມປະດິດສ້າງຈຶ່ງເຮັດໃຫ້ການປະຕິວັດ ປະເທດເຮົາຍາດໄດ້ໄຊຊະນະອັນໃຫຍ່ຫຼວງຢ່າງບໍ່ຢຸດຢັ້ງຄືສູ່ມື້ນີ້.

**ຄຳຖາມ 13: ລັກສະນະຊົນຊັ້ນ, ລັກສະນະນຳໜ້າ ແລະ ລັກສະນະຕໍ່ສູ້ຂອງພັກ ສະແດງອອກແນວໃດ?.**

**ຕອບ:** ລັກສະນະຊົນຊັ້ນຂອງພັກສະແດງອອກ ດັ່ງນີ້:

- ບໍ່ແຍກພັກອອກຈາກຊົນຊັ້ນກຳມະກອນ, ອອກຈາກປະຊາຊົນ ແລະ ອອກຈາກຊາດ. ຍາມໃດກໍຕັ້ງຕໍ່ບໍລິສຸດຕໍ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານ ບັນດາເຜົ່າ.

- ຍາມໃດກໍຖືລັດທິມາກ-ເລນິນເປັນພື້ນຖານແຫ່ງແນວຄິດ ແລະ ເປັນເຂັມທິດຊີ້ນຳທຸກການກະທຳຂອງຕົນ ໝາຍຄວາມວ່າ ຕ້ອງໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນເງື່ອນໄຂລະອຽດຂອງປະເທດ ເວົ້າລວມ, ເວົ້າສະເພາະ ເຂົ້າໃສ່ເງື່ອນໄຂລະອຽດຂອງຂະແໜງການ, ທ້ອງຖິ່ນ ແລະ ຮາກຖານ ຂອງຕົນຢ່າງປະດິດສ້າງ; ຮູ້ສະຫຼຸບບົດຮຽນຈາກພຶດຕິກຳຂອງຕົນ ແລະ ຮັບເອົາບົດຮຽນ ອັນດີຂອງບັນດາປະເທດອ້າຍນ້ອງ, ຮັບເອົາບັນດາສິ່ງຍອດຍິ່ງດ້ານສະຕິປັນຍາຂອງຍຸກສະໄໝ ເວົ້າລວມ, ເວົ້າສະເພາະ ແມ່ນຮັບເອົາບັນດາບົດຮຽນອັນດີຂອງຄົນອື່ນ, ທ້ອງຖິ່ນ ແລະ ຮາກຖານ ອື່ນມາໝູນໃຊ້ເຂົ້າໃສ່ສະພາບຕົວຈິງຂອງຮາກຖານຕົນຢ່າງເປັນເຈົ້າການ.

- ຕ້ອງເພີ່ມທະວີການນຳພາຂອງພັກ ໃນທຸກຂົງເຂດຊີວິດສັງຄົມຂອງປະເທດເຮົາເວົ້າລວມ, ເວົ້າສະເພາະ ໃນທຸກຂົງເຂດຊີວິດສັງຄົມຢູ່ຮາກຖານ.

- ພົວພັນສະໜິດແໜ້ນກັບມະຫາຊົນ ແລະ ເອົາໃຈໃສ່ເປັນພິເສດຕໍ່ການກໍ່ສ້າງລະບອບເປັນເຈົ້າຂອງປະຊາຊົນຜູ້ອອກແຮງງານ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ເອົາໃຈໃສ່ເຖິງຜົນປະໂຫຍດຂອງມະຫາຊົນ, ເອົາໃຈໃສ່ເຖິງຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ສຶກສາອົບຮົມມະຫາຊົນໃຫ້ຕື່ນຕົວປະຕິບັດແນວທາງຂອງພັກ. ຕ້ານພະຍາດອາດຍາສິດ, ໃຊ້ອຳນາດ, ຫ່າງເຫີນຈາກມະຫາຊົນ.

- ຮັກສາຄວາມເປັນເອກະພາບຂອງພັກທາງດ້ານແນວຄິດ ແລະ ການກະທຳ, ຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ, ຖືເອົາການຕິຊົມຕົນເອງ ແລະ ຕິຊົມກັນເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ; ມີລະບຽບວິໄນເຂັ້ມງວດ ໝາຍຄວາມວ່າ ກໍ່ສ້າງບັນດາການຈັດຕັ້ງ ແລະ ດຳເນີນຊີວິດພັກເປັນປົກກະຕິ, ມີເນື້ອໃນດີເຮັດໃຫ້ໜ່ວຍພັກເຂັ້ມແຂງຮູ້ນຳພາຮອບດ້ານ, ຕ້ານປະກົດການລວມສູນອາດຍາສິດ, ຜະເດັດການ, ພາກສ່ວນ, ເສລີບໍ່ມີລະບຽບວິໄນ, ພັກພວກ. ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກດ້ວຍການຕຳນິກໍ່ສ້າງ ຊຶ່ງກັນ ແລະ ກັນ.

- ພັກປະຊາຊົນປະຕິວັດລາວ ແມ່ນພັກຂອງຊົນຊັ້ນກຳມະກອນ, ຖືເອົາລັດທິມາກ-ເລນິນ ຊຶ່ງແມ່ນແນວຄິດທິດສະດີຂອງຊົນຊັ້ນກຳມະຊີບ ເປັນລະບົບແນວຄິດທິດສະດີຂອງພັກ, ເປັນຈຸດຢືນໃນອຸດົມການຂອງພັກ, ໝູນໃຊ້ເຂົ້າໃນການວາງແນວທາງ, ແຜນນະໂຍບາຍຕ່າງໆຢ່າງ ປະດິດສ້າງ. ຍ້ອນແນວນັ້ນ, ພັກເຮົາຈຶ່ງມີທາດແທ້ຊົນຊັ້ນກຳມະກອນມາແຕ່ຫົວທີ. ລັກສະນະຊົນຊັ້ນຂອງພັກ ຍັງສະແດງອອກຢູ່ໃນຈິດໃຈປະຕິ ວັດບຸກ, ສູ້ຮົບຢ່າງພິລະອາດຫານ, ທົນທານໝັ້ນໜຽວ ແລະ ເສຍສະຫຼະສູງສົ່ງ.

- ລັກສະນະນຳໜ້າຂອງພັກ: ສະແດງອອກຢູ່ບ່ອນວ່າ ພັກແມ່ນກອງເສນາທິການທາງການເມືອງ, ເປັນກອງນຳໜ້າທີ່ມີການຈັດຕັ້ງ ແລະ ແມ່ນການຈັດຕັ້ງສູງສຸດຂອງຊົນຊັ້ນກຳມະກອນ. ດັ່ງນັ້ນ, ພັກ ກໍຄືບັນດາສະມາຊິກພັກ ຈຶ່ງຕ້ອງແມ່ນບຸກຄົນທີ່ມີມາດຖານຄວາມຮູ້, ຄວາມສາມາດ, ມີສະຕິຕໍ່ການຈັດຕັ້ງ, ມີອຸດົມການສັງຄົມນິຍົມ ເປັນແບບຢ່າງເຄື່ອນໄຫວຢູ່ໃນແຖວໜ້າ ຂອງທຸກວຽກງານ, ສູ້ຊົນເສຍສະຫຼະ ເພື່ອອຸດົມການຂອງພັກ ແລະ ປະຊາຊົນ, ຮັບໃຊ້ປະຊາຊົນ ຢ່າງບໍ່ຮູ້ອິດຮູ້ເມື່ອຍ. ເອົາໃຈໃສ່ແກ້ໄຂປະກົດການທີ່ບໍ່ເປັນແບບຢ່າງນຳໜ້າ, ຂາດລັກສະນະນຳພາ, ບໍ່ເດັດຂາດຕໍ່ສູ້ແກ້ໄຂປະກົດການຫຍໍ້ທໍ້ຢູ່ພາຍໃນພັກ ແລະ ປະກົດການຫຍໍ້ທໍ້ໃນສັງຄົມໃຫ້ເຖິງກົກເຖິງຮາກ, ແກ້ໄຂປະກົດການເມີນເສີຍ ບໍ່ເຂົ້າຮ່ວມຂະບວນການຕໍ່ສູ້ທັບມ້າງກົນອຸບາຍ ມ້າງເພຂອງສັດຕູ, ບໍ່ເສີມຂະຫຍາຍຫົວຄິດປະດິດສ້າງນຳໜ້າໃນທຸກຂະແໜງການວຽກງານ.

- ລັກສະນະຕໍ່ສູ້ຂອງພັກ: ສະແດງອອກໃນການຕໍ່ສູ້ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງພັກ, ຂອງປະຊາຊົນ ແລະ ຂອງຊາດ, ກວດກາ ແລະ ຕ້ານທຸກການກະທຳທີ່ບໍ່ຖືກຕ້ອງຝືນກັບແນວທາງຂອງພັກ-ກົດໝາຍຂອງລັດ, ຕ້ານແນວຄິດທີ່ຜິດເຂວອອກຈາກແນວທາງ ແລະ ອຸດົມການຂອງພັກ, ຕ້ານແນວຄິດເສລີເອກະຊົນ, ພະຍາດອາດຍາສິດ, ໃຊ້ອຳນາດ, ຜະເດັດການ, ຫ່າງເຫີນຈາກມະຫາຊົນ, ກໍ່ພັກແຍກພວກ, ຈຸ້ມເຈື້ອເຊື້ອສາຍ, ທ້ອງຖິ່ນ, ເດັດດ່ຽວຕ້ານ ແລະ ທັບມ້າງກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູທີ່ຫວັງດັບມອດການປະຕິວັດເຮົາ. ຕ້ານ ແລະ ແກ້ໄຂ ປະກົດການຫຍໍ້ທໍ້,ໄພສໍ້ລາດບັງຫຼວງພາຍໃນການຈັດຕັ້ງ ແລະ ໃນທົ່ວສັງຄົມໃຫ້ຫຼຸດໜ້ອຍຖອຍລົງ, ເຮັດໄດ້ແນວນີ້ ຈຶ່ງຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບທາງການເມືອງ, ສັງຄົມມີ ຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ.

**ຄໍາຖາມ 14: ອຸດົມການ ແລະ ວັດຖຸປະສົງຂອງພັກແມ່ນຫຍັງ?.**

**ຕອບ:** ອຸດົມການ ແລະ ວັດຖຸປະສົງຂອງພັກແມ່ນ:

**+ ອຸດົມການ:**

①. ນັບແຕ່ມື້ສ້າງຕັ້ງພັກປະຊາຊົນປະຕິວັດລາວ ພັກໄດ້ກຳນົດອຸດົມການຂອງຕົນຢ່າງຈະແຈ້ງ ຄື: ນໍາ ພາປວງຊົນລາວທັງຊາດດໍາເນີນການຕໍ່ສູ້ຕ້ານພວກຈັກກະພັດລ່າເມືອງຂຶ້ນ ເພື່ອນໍາເອົາຄວາມເປັນເອກະລາດມາໃຫ້ແກ່ປະເທດຊາດ ແລະ ສິດເປັນເຈົ້າມາໃຫ້ປະຊາຊົນ, ສ້າງປະເທດຊາດສູ່ຈຸດໝາຍສັງຄົມນິຍົມ.

②. ມາໃນປັດຈຸບັນນີ້, ພັກເຮົາໄດ້ເສີມຂະຫຍາຍອຸດົມການໃຫ້ສອດຄ່ອງຕື່ມອີກຄື: ນໍາພາ ທົ່ວປວງຊົນລາວປົກປັກຮັກສາ ແລະ ພັດທະນາປະເທດຊາດ, ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ ຊຶ່ງມີຄວາມໝາຍດຽວກັນກັບຄໍາວ່າສັງຄົມນິຍົມ.

**+ ວັດຖຸປະສົງຂອງພັກແມ່ນ:**

①. ນໍາພາທົ່ວປວງຊົນລາວທັງຊາດປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະ ໝາກຜົນຂອງການປະຕິວັດ.

②. ສ້າງສາພັດທະນາປະເທດຊາດຕາມແນວທາງການປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ

③. ສືບຕໍ່ສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ.

**ຄໍາຖາມ 15: ການປະຕິບັດຫຼັກການລວມສູນປະຊາທິປະໄຕ ສະແດງອອກແນວໃດ?.**

**ຕອບ:** ຫຼັກການລວມສູນປະຊາທິໄຕ ມີ 5 ເນື້ອໃນດັ່ງນີ້:

①. ນໍາພາເປັນໝູ່ຄະນະ ແລະ ມີການແບ່ງງານ-ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ, ຂາດຕົວ.

②. ການແບ່ງງານແບ່ງຄວາມຮັບຜິດຊອບຕ້ອງແທດເໝາະກັບຄວາມຮູ້ຄວາມສາມາດ ແລະ ປະສົບການໃນວຽກງານຂອງແຕ່ລະສະຫາຍ, ທັງນີ້ກໍເພື່ອເສີມຂະຫຍາຍສະຕິປັນຍາ, ຄວາມຮູ້ ຄວາມສາມາດຂອງແຕ່ລະສະຫາຍໃນຄະນະຢ່າງສຸດຂີດ ຊຶ່ງຈະເຮັດໃຫ້ຄວາມສາມາດຂອງໝູ່ ຄະນະສູງຂຶ້ນ.

③. ປະຕິບັດລະບອບປະຊຸມເປັນປົກກະຕິ, ກອງປະຊຸມແຕ່ລະຄັ້ງຕ້ອງມີເນື້ອໃນຈະແຈ້ງ, ມີ ການປຶກສາຫາລືຢ່າງປະຊາທິປະໄຕ ແລະ ມີການອອກມະຕິ, ຫາກບໍ່ແມ່ນມີແຕ່ປະຊຸມຫຼາຍ-ເວົ້າຫຼາຍ, ແຕ່ພັດບໍ່ມີການຕົກລົງຮັບຮອງເອົາມະຕິເພື່ອປະຕິບັດ.

ເມື່ອກອງປະຊຸມໄດ້ຕົກລົງຮັບຮອງເອົາມະຕິແລ້ວຕ້ອງມີການແຈ້ງຂ່າວ-ເຜີຍແຜ່ອະທິບາຍ ມະຕິນັ້ນໃຫ້ສະມາຊິກພັກ-ພະນັກງານຮັບຮູ້ເຂົ້າໃຈຢ່າງຈະແຈ້ງ ແລະ ທົ່ວເຖິງ. ພ້ອມກັນນັ້ນກໍມີ ການປຸກລະດົມຊຸກຍູ້ ແລະ ນໍາພາຊີ້ນໍາການປະຕິບັດໃຫ້ແທດເຖິງ.

④. ຕ້ອງມີການຄົ້ນຄວ້າປຶກສາຫາລືກ່ຽວກັບການຫັນມະຕິເປັນແຜນການ, ເປັນໂຄງການວຽກງານ ແລະ ຕ້ອງມີການແບ່ງງານມອບໝາຍໃຫ້ບຸກຄົນຮັບຜິດຊອບຢ່າງລະອຽດ, ຈະແຈ້ງເພື່ອປະຕິບັດໃຫ້ເປັນຈິງ.

ຕ້ອງເສີມຂະຫຍາຍສິດເປັນເຈົ້າ ແລະ ຄວາມປະດິດສ້າງຂອງບຸກຄົນຢ່າງຕັ້ງໜ້າ, ສົ່ງເສີມ ທັດສະນະກ້າຄິດ-ກ້າເຮັດ ແລະ ກ້າຮັບຜິດຊອບ, ຫຼຸດຜ່ອນການເອື່ອຍອີງໃສ່ແຕ່ໝູ່ຄະນະ ແລະ ບົດບາດຂອງຜູ້ເປັນຫົວໜ້າ.

⑤. ມີການດຳເນີນຊີວິດສຳຫຼວດກວດກາ, ຕຳນິສິ່ງຂ່າວຊ່ວຍເຫຼືອກໍ່ສ້າງຊຶ່ງກັນ ແລະ ກັນຕິດພັນກັບການຊຸກຍູ້ການຈັດຕັ້ງປະຕິບັດມະຕິເປັນແຕ່ລະໄລຍະແນໃສ່ປັບປຸງແກ້ໄຂອັນຄົງຄ້າງ ແລະ ເຮັດໃຫ້ການຈັດ ຕັ້ງປະຕິບັດດຳເນີນໄປຢ່າງຕໍ່ເນື່ອງ, ທັງມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນ ເພື່ອເສີມຂະຫຍາຍຜົນສຳ ເລັດຕໍ່ໆໄປ.

⑥. ມີຄວາມເຂັ້ມງວດຕໍ່ການປະຕິບັດກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ; ຕັ້ງໜ້າກຳຈັດປັດເປົ່າສິ່ງຫຍໍ້ທໍ້ ແລະ ສ້າງຄວາມປອດໃສ, ມີວິໄນ.

**ຄຳຖາມ 16: ຍຶດໝັ້ນໃນ 5 ຫຼັກການພື້ນຖານແຫ່ງການເຄື່ອນໄຫວຂອງພັກແມ່ນແນວໃດ?.**

**ຕອບ:** ພັກປະຊາຊົນປະຕິວັດລາວ ເຄື່ອນໄຫວຕາມ 5 ຫຼັກການ ດັ່ງນີ້:

ຫຼັກການທີ 1: ພັກປະຊາຊົນປະຕິວັດລາວຍຶດໝັ້ນລັດທິມາກ-ເລນິນ ແລະ ມູນເຊື້ອອັນດີງາມຂອງພັກເປັນພື້ນຖານແນວຄິດທິດສະດີຂອງພັກ, ເສີມຂະຫຍາຍລັກສະນະນຳໜ້າ, ລັກສະນະຕໍ່ສູ້ຊົນຊັ້ນກຳມະກອນ, ກໍ່ສ້າງ ແລະ ປັບປຸງພັກໃຫ້ປອດໃສ, ໜັກແໜ້ນ ແລະ ເຂັ້ມແຂງ.

ຫຼັກການທີ 2: ພັກປະຊາຊົນປະຕິວັດລາວຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ, ນຳ ພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ພັກມີລະບຽບວິໄນທີ່ເຂັ້ມງວດ.

ຫຼັກການທີ 3: ພັກປະຊາຊົນປະຕິວັດລາວຖືເອົາຄວາມສາມັກຄີເປັນປຶກແຜ່ນ ຊຶ່ງເປັນຫຼັກການພື້ນຖານ ເພື່ອຮັບປະກັນຄວາມເປັນເອກະພາບທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການກະທຳຂອງພັກ.

ຫຼັກການທີ 4: ພັກປະຊາຊົນປະຕິວັດລາວຖືເອົາປະຊາຊົນລາວເປັນກົກ, ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດສັດຊື່, ເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ, ອີງໃສ່ມະຫາຊົນ ແລະ ຜ່ານຂະບວນການປະຕິວັດຂອງມະຫາຊົນເພື່ອກໍ່ສ້າງ ແລະ ຂະຫຍາຍພັກ.

ຫຼັກການທີ 5: ພັກປະຊາຊົນປະຕິວັດລາວຖືເອົາການຕິຊົມຕົນເອງ, ຕິຊົມກັນເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ.

**ຄຳຖາມ 17: ສະມາຊິກພັກແມ່ນໃຜ ແລະ ຮັບໃຊ້ຜູ້ໃດ?.**

**ຕອບ:** ສະມາຊິກພັກແມ່ນຜູ້ທີ່ດີເດັ່ນກວ່າໝູ່ໃນໝູ່ມະຫາຊົນ, ແມ່ນບຸກຄົນທີ່ຕື່ນຕົວຫ້າວຫັນ, ດຸໝັ່ນ, ປະຢັດ, ສັດຊື່, ທ່ຽງທຳ, ຖືຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ ແລະ ເຫັນດີເຫັນພ້ອມນຳແນວທາງນະໂຍບາຍຂອງພັກ, ຕະຫຼອດໄລຍະຜ່ານມາ ບໍ່ສວຍໂອກາດ, ເປັນແບບຢ່າງໃນການປະຕິບັດໜ້າທີ່ວຽກງານຢ່າງຕັ້ງໜ້າ.

ແມ່ນບຸກຄົນທີ່ໄດ້ຜ່ານການຝຶກຝົນຫຼໍ່ຫຼອມຈາກພຶດຕິກຳຕົວຈິງ ຂອງການປະຕິວັດ, ບໍ່ມີແນວຄິດຄອນແຄນ, ປົກປ້ອງສິດຜົນປະໂຫຍດຂອງພັກຢ່າງຕັ້ງໜ້າ, ມີແນວຄິດ ແລະ ການກະທຳຖືກ ຕ້ອງສະເໝີຕົ້ນສະເໝີປາຍ, ດຳລົງຊີວິດປອດໃສຂາວສະອາດ, ທຳມາຫາກິນດ້ວຍຄວາມຊອບທຳ ບໍລິສຸດສັດຊື່, ບໍ່ສວຍໃຊ້ຖານະຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ບໍ່ສໍ້ລາດບັງຫຼວງ, ຍັກຍອກ, ສໍ້ໂກງ, ບໍ່ຮັບສິນບົນ ແລະ ອື່ນໆ.

( ສະມາຊິກພັກ ມີໜ້າທີ່ຮັບໃຊ້ຊາດ ແລະ ຮັບໃຊ້ປະຊາຊົນ.

- ການຮັບໃຊ້ຊາດ-ຮັບໃຊ້ປະຊາຊົນ ແມ່ນໝາຍເຖິງການມີນ້ຳໃຈເສຍສະຫຼະ ເພື່ອຊາດ, ເພື່ອປະຊາຊົນ ແລະ ອຸທິດຊີວິດເພື່ອພາລະກິດປະຕິວັດ ທຸ່ມເທເຫື່ອແຮງ, ສະຕິປັນຍາ, ກຳລັງ ວັງຊາ ແລະ ຄວາມຮູ້ ຄວາມສາມາດຂອງຕົນເຂົ້າໃນໜ້າທີ່ວຽກງານ ເພື່ອຮັບໃຊ້ຊາດ, ຮັບໃຊ້ປະ ຊາຊົນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ຮັບໃຊ້ການປະຕິວັດຢ່າງສຸດກຳລັງສຸດປາຍ, ໂດຍບໍ່ຮຽກຮ້ອງເລັ່ງທວງເອົາຜົນປະໂຫຍດມາໃຫ້ຕົນເອງ.

- ຮັບໃຊ້ປະຊາຊົນ: ໝາຍເຖິງການປະຕິບັດໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບສູງ ແລະ ມີຄວາມຊື່ສັດ ບໍລິສຸດ, ເຮັດແທ້ທຳຈິງ, ນັບຖືຮັກແພງ ແລະ ຊ່ວຍເຫຼືອເບິ່ງແຍງປະຊາຊົນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ, ສະມາຊິກພັກບໍ່ມີຈຸດປະສົງອັນໃດນອກຈາກເຮັດໃຫ້ "ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ".

<u>£ɔ̀«¾´</u> 18: Á®®Á°-©ɔ̀ìö¤§ó¸ò©ê†¯º©Ã¦¦½Á©¤ºº¡Á-¸Ã© ?

<u>ຕອບ</u>: ພະນັກງານ, ສະມາຊິກພັກຕ້ອງມີແບບແຜນດຳລົງຊີວິດອັນດີງາມ, ຍາມໃດກໍໄດ້ ຮັບຄວາມເຊື່ອໝັ້ນຮັກແພງ, ເຄົາລົບນັບຖືຈາກມະຫາຊົນ, ພະນັກງານ, ສະມາຊິກພັກຕ້ອງມີ ຄຸນສົມບັດສິນທຳ, ມີວັດທະນະທຳ ແລະ ລະບຽບວິໄນດີ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາ ທິປະໄຕ ປະຊາຊົນ, ຮັກກຽດສັກສີ ແລະ ມີອຸດົມການທີ່ຖືກຕ້ອງ, ມີຄວາມເປັນມະນຸດສະທຳ, ມີຈິດໃຈຂາວສະອາດ, ບໍ່ໂລບມາກໂລພາ, ບໍ່ຊອກສະແຫວງຫາຜົນປະໂຫຍດມາໃຫ້ແກ່ຕົນເອງແບບບໍ່ຊອບທຳ, ເຄົາລົບ ແລະ ປ້ອງກັນສ່ວນລວມ; ບໍ່ໄປພົວພັນໃນສິ່ງທີ່ບໍ່ຖືກ ເຊັ່ນ: ສໍ້ລາດບັງຫຼວງ, ກິນ ສິນບົນ, ຫຼອກລວງ, ສວຍໃຊ້ອຳນາດໄປແລກເອົາເງິນ ແລະ ບັນຫາອື່ນໆ... ທີ່ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ; ແບບແຜນດຳລົງຊີວິດປະຕິວັດມີຫຼາຍເນື້ອໃນ, ແຕ່ຕ້ອງສຸມໃສ່ສ້າງໃຫ້ໄດ້ບັນດາເນື້ອ ໃນຕົ້ນຕໍດັ່ງນີ້:

1. ສ້າງໃຫ້ໄດ້ແບບແຜນດຳລົງຊີວິດທີ່ມີມະນຸດສະທຳ, ບໍລິສຸດສັດຊື່ ແລະ ມີອຸດົມການ ປະຕິວັດທີ່ສູງສົ່ງ.

2. ຮູ້ປະສົມປະສານຜົນປະໂຫຍດລວມຂອງຊາດ, ຜົນປະໂຫຍດລວມໝູ່ ແລະ ຜົນປະໂຫຍດສ່ວນບຸກຄົນຢ່າງກົມກຽວ. ໃນນີ້ຕ້ອງຖືຜົນປະໂຫຍດລວມເໜືອກວ່າຜົນປະໂຫຍດສ່ວນຕົວ,ເອົາໃຈໃສ່ປົກປັກຮັກສາຊັບສິນຂອງຊາດ, ປ້ອງກັນຜົນປະໂຫຍດລວມໝູ່, ຂອງສັງຄົມ. ຈາກການເອົາໃຈໃສ່ຜົນປະໂຫຍດສ່ວນລວມ ຈຶ່ງມີຜົນປະໂຫຍດສະເພາະສ່ວນບຸກຄົນບົນພື້ນຖານຄວາມຍຸຕິທຳ ແລະ ສົມເຫດສົມຜົນ.

3. ສ້າງແບບແຜນດຳລົງຊີວິດຕິດແທດກັບມະຫາຊົນຊາວຜູ້ອອກແຮງງານ; ດຳລົງຊີວິດ ປອດໃສ ຂາວສະອາດ, ດີງາມ, ກະທັດຮັດ, ສຸພາບຮຽບຮ້ອຍ, ຖະໜອມຖ່ອມຕົວ; ຮໍ່າຮຽນ, ດຳລົງຊີວິດດ້ວຍຜົນການອອກແຮງງານຂອງຕົນ; ດຳລົງຊີວິດມີລະບຽບແບບແຜນ, ເຄົາລົບລະບຽບວິໄນ ແລະ ກົດໝາຍບ້ານເມືອງ.

4. ຕັ້ງໜ້າສ້າງຄອບຄົວໃຫ້ເປັນຄອບຄົວວັດທະນະທຳໃໝ່ ທີ່ມີແບບແຜນດຳລົງຊີວິດທີ່ສົດ ໃສ, ຮັກຫອມຕອມຕຸ້ມ ແລະ ມີຄວາມຜາສຸກມີຄວາມສະເໝີພາບ ໃນການພົວພັນລະຫວ່າງ ຜົວ- ເມຍ, ພໍ່, ແມ່ ແລະ ລູກເຕົ້າ; ຍາດພີ່ນ້ອງເປັນຕົ້ນ.

ໄປຄຽງຄູ່ກັບການສ້າງແບບແຜນດຳລົງຊີວິດປະຕິວັດ, ຕ້ອງຕັ້ງໜ້າຕໍ່ສູ້ຕ້ານແບບດຳລົງຊີ ວິດທີ່ຫູ້າຫຼັງ, ຄັບແຄບ, ໜັກໄປແຕ່ທາງຜົນປະໂຫຍດສ່ວນຕົວ, ອັດຖະປະໂຫຍດ, ມີແຕ່ເອົາໃຈໃສ່ສ້າງຮັ່ງຄູນມີໃຫ້ສ່ວນຕົວ, ເຊື່ອຖືງົມງວາຍ, ຂີ້ຄ້ານມັກງ່າຍ, ຄ້ານຮໍ່າຮຽນ, ຂາດຄວາມປະດິດສ້າງ, ເຊື່ອມທາດຂາດຄຸນ, ເກາະກິນ ແລະ ອື່ນໆ.

ເພື່ອສ້າງແບບແຜນດຳລົງຊີວິດ ປະຕິວັດຕ້ອງເອົາໃຈໃສ່ຝຶກຝົນຕົນເອງ, ຍົກລະດັບໃນທຸກດ້ານໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ຍອມຢູ່ໃຕ້ການກວດກາສຶກສາອົບຮົມຂອງການຈັດຕັ້ງ, ໝູ່ຄະນະ ແລະ ມະຫາຊົນ. ດ້ານອື່ນຕ້ອງເອົາໃຈໃສ່ຈັດຕັ້ງຊີວິດສັງຄົມໃຫ້ເຂັ້ມງວດ, ມີລະບຽບການ, ມີວິໄນ, ມີຂໍ້ກຳນົດກົດໝາຍຢ່າງຮັດກຸມ; ຕ້ອງເອົາໃຈໃສ່ປະຕິບັດຄວາມຍຸດຕິທຳໃນສັງຄົມເພື່ອສ້າງເປັນບັນດາປັດໄຈທີ່ຈຳເປັນ ເຮັດໃຫ້ເກີດມີການດຳລົງຊີວິດໃໝ່ຂອງພະນັກງານ, ສະມາຊິກພັກກໍຄືປະ ຊາຊົນ, ສ້າງໃຫ້ເກີດເປັນການພົວພັນສັງຄົມອັນດີງາມທີ່ແທ້ຈິງ.

<u>ຄຳຖາມ</u> 19: ເນື້ອໃນຄຸນທາດການເມືອງຂອງສະມາຊິກພັກມີຫຍັງແດ່ ?

<u>ຕອບ</u>: ຄຸນທາດການເມືອງ ໝາຍເຖິງທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ, ທັດສະນະ ຫຼັກໝັ້ນມິດ - ສັດຕູ ແລະ ຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ອຸດົມການສັງຄົມນິຍົມ. ຄຸນທາດການເມືອງຂອງພະນັກງານ, ສະມາຊິກພັກມີເນື້ອໃນລະອຽດດັ່ງນີ້:

1. ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມຢ່າງຕາຍໃຈ.

- ສະມາຊິກພັກ ຕ້ອງມີຄວາມເຊື່ອໝັ້ນຕໍ່ລັດທິສັງຄົມນິຍົມ ຢ່າງໜັກແໜ້ນ.

- ມີຄວາມຕື່ນຕົວເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າ ແລະ ມານະຈິດປະຕິວັດອົດ ທົນຜ່ານຜ່າຄວາມຫຍຸ້ງຍາກ, ເສຍສະຫຼະເພື່ອຄວາມຮັ່ງມີ - ຜາສຸກຂອງປະຊາຊົນລາວບັນດາເຜົ່າ ກໍຄື ເພື່ອຄວາມກ້າວໜ້າ ຂອງປະເທດຊາດ.

2. ມີຫຼັກໝັ້ນມິດ-ສັດຕູອັນຈະແຈ້ງ.

- ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມສະດຸ້ງໄວ ແລະ ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີຢູ່ສະເໝີ.

- ມີຄວາມເດັດດ່ຽວໜຽວແໜ້ນຕໍ່ສູ້ກັບກົນອຸບາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ, ຕັ້ງໜ້າປຸກລະດົມຈັດຕັ້ງນຳພາ ແລະ ໝູນໃຊ້ວິທີອັນເໝາະສົມ ເພື່ອຮັບປະກັນຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພທາງສັງຄົມ.

3. ມີຄວາມຮູ້ກ່ຽວກັບລັດທິມາກ-ເລນິນ ແລະ ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ ຢ່າງເລິກເຊິ່ງ.

- ສະມາຊິກພັກແຕ່ລະສະຫາຍຕ້ອງຕັ້ງໜ້າຄົ້ນຄ້ວາຮໍ່າຮຽນລັດທິມາກ-ເລນິນ; ຄົ້ນຄ້ວາ ເຊື່ອມຊຶມ ແລະ ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ ທີ່ວາງອອກແຕ່ລະໄລຍະຢ່າງເລິກເຊິ່ງ.

- ຮູ້ໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນສະພາບການຕົວຈິງ, ມີຄວາມສາມາດ ຫັນເອົາແນວ ທາງນະໂຍບາຍຂອງພັກ ທີ່ວາງອອກໃນແຕ່ລະໄລຍະມາເປັນແຜນການ, ໂຄງການລະອຽດຂອງຂະແໜງການ, ທ້ອງຖິ່ນຕົນ ແລະ ຮູ້ຈັກຈັດຕັ້ງນຳພາຂະບວນການປະຕິບັດໃຫ້ເປັນຈິງ.

- ມີຈິດໃຈຮັກຊາດອັນແທ້ຈິງ, ມີຈິດໃຈເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງສົມ ທົບການຍາດແຍ່ງເອົາກຳລັງແຮງ ຂອງຍຸກສະໄໝເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະ ນາປະເທດຊາດໃຫ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

4. ມີຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່ວຽກງານສູງ.

- ມີຄວາມຫ້າວຫັນເປັນເຈົ້າການປະຕິບັດວຽກງານ ທີ່ໄດ້ຮັບມອບໝາຍດ້ວຍຈິດໃຈກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ມີຫົວຄິດປະດິດສ້າງ.

- ມີຄວາມຕັດສິນໃຈຜ່ານຜ່າຄວາມຫຍຸ້ງຍາກນາໆປະການສູງ ເພື່ອເຮັດສຳເລັດວຽກງານດ້ວຍປະສິດທິຜົນສູງ.

5. ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ເຊື່ອໝັ້ນຕໍ່ກຳລັງແຮງ ແລະ ສະຕິປັນຍາຂອງ ປະຊາຊົນ.

- ສະມາຊິກພັກຕ້ອງເຊື່ອໝັ້ນຕໍ່ການນຳພາຂອງພັກ, ເອົາໃຈໃສ່ຍົກສູງຄວາມສາມາດໃນ ການນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ມີສະຕິຕໍ່ການຈັດຕັ້ງ, ຕໍ່ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດ, ເອົາໃຈໃສ່ຕໍ່ສູ້ຕ້ານສິ່ງຫຍໍ້ທໍ້ ຕ່າງໆພາຍໃນກົງຈັກຂອງພັກ, ຂອງລັດ ແລະ ໃນສັງຄົມ.

- ຕັ້ງໜ້າປຸກລະດົມຂົນຂວາຍ ແລະ ເສີມຂະຫຍາຍກຳລັງແຮງສັງລວມຂອງປະຊາຊົນ, ບັນດາພາກສ່ວນເສດຖະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

<u>ຄຳຖາມ </u>20: ຄຸນສົມບັດສິນທຳປະຕິວັດແມ່ນຫຍັງ ?

<u>ຕອບ</u>: ຄຸນສົມບັດສິນທຳປະຕິວັດຂອງພະນັກງານ, ສະມາຊິກພັກຂອງພວກເຮົາມີເນື້ອໃນອຸດົມສົມບູນທີ່ສຸດ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງສະພາບການປັດຈຸບັນສະ ມາຊິກພັກທຸກສະຫາຍ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງຕາມເນື້ອໃນສຳຄັນຈຳນວນໜຶ່ງດັ່ງນີ້:

1. ມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ.

- ພະນັກງານ, ສະມາຊິກພັກເຮົາຕ້ອງມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອສ່ວນລວມດ້ວຍ ການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີມານະຈິດ ອົດທົນສູ້ຊົນເປັນເຈົ້າການອຸທິດສະຕິປັນຍາ ແລະ ເຫື່ອ ແຮງເຂົ້າໃສ່ພາລະກິດປະຕິວັດໂດຍບໍ່ທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃດໆ ເພື່ອເຮັດໃຫ້ປະເທດຊາດມັ່ງ ຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ ແລະ ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

- ຕັ້ງໜ້າປະຕິບັດໜ້າທີ່ວຽກງານ ດ້ວຍຄວາມຮັບຜິດຊອບສູງ, ສູ້ຊົນເຮັດຫຼ້ອນໜ້າທີ່ວຽກ ງານທີ່ໄດ້ຮັບມອບໝາຍໂດຍບໍ່ຮຽກຮ້ອງເອົາຜົນປະໂຫຍດມາໃຫ້ຕົນເອງ ແລະ ບໍ່ມີການສວຍໂອ ກາດໃນໜ້າທີ່ວຽກງານ ເພື່ອກອບໂກຍເອົາຜົນປະໂຫຍດມາໃຫ້ຕົນເອງ.

2. ດຸໝັ່ນ, ພາກພຽນ, ປະຢັດ, ຊື່ສັດ ແລະ ປອດໃສ.

- ດຸໝັ່ນ: ແມ່ນເຮັດວຽກດ້ວຍຄວາມບຸກບືນ, ຕື່ນຕົວເປັນເຈົ້າການ ເຖິງຈະເປັນວຽກຍາກ ແລະ ໃຊ້ເວລາຫຼາຍກໍມີຄວາມອົດທົນເຮັດໃຫ້ສຳເລັດ; ພ້ອມທັງເຮັດວຽກງານດ້ວຍຄວາມຮອບ ຄອບ, ເຮັດວຽກມີຄຸນນະພາບດີ ແລະ ເຮັດວຽກຕາມລະດັບຄາດໝາຍ.

- ພາກພຽນ: ແມ່ນເຮັດວຽກດ້ວຍຄວາມດຸໝັ່ນໂດຍມີການໝູນໃຊ້ຄວາມຮູ້-ຄວາມສາມາດ ຂອງຕົນໃຫ້ເປັນຜົນປະໂຫຍດສູງສຸດ; ເຮັດວຽກຢ່າງມີແຜນການ ແລະ ມີການຕິດຕາມກວດກາ ເຫັນອັນດີກໍ

ເອົາໃຈໃສ່ເສີມຂະຫຍາຍ, ເຫັນອັນອ່ອນ-ຂໍ້ຄົງຄ້າງກໍພະຍາຍາມປັບປຸງແກ້ໄຂໃຫ້ດີ ຂຶ້ນ; ເຖິງວ່າວຽກມີຄວາມສັບສົນ, ກໍພະຍາຍາມເຮັດໃຫ້ສຳເລັດ.

- ປະຢັດ: ແມ່ນຮູ້ຈັກໃຊ້, ຮູ້ຈັກຈ່າຍຢ່າງສົມເຫດ, ສົມຜົນ ແລະ ເປັນປະໂຫຍດ; ຮູ້ຈັກປົກ ປັກຮັກສາບົວລະບັດສິ່ງຂອງສ່ວນຕົວ, ສ່ວນລວມເພື່ອໃຫ້ໃຊ້ໄດ້ດົນ; ປະຢັດຍັງແມ່ນການໃຊ້ໃຫ້ ຖືກເປົ້າໝາຍ, ຖືກກັບວັດຖຸປະສົງ ແລະ ໃຊ້ໃຫ້ເກີດປະໂຫຍດແກ່ສ່ວນລວມຫຼາຍເທົ່າທີ່ຈະຫຼາຍ ໄດ້. ປະຢັດຍັງແມ່ນການໃຊ້ຈ່າຍບໍ່ເກີນຖານະຕໍາແໜ່ງ ແລະ ຖານະເງິນຂອງຕົນ.

- ຊື່ສັດ: ແມ່ນການກະທຳທີ່ສອດຄ່ອງກັບຄຳເວົ້າ, ບໍ່ຕົວະ, ບໍ່ສໍ້ໂກງ; ບໍ່ສວຍໂອກາດລັກ ໂລບ, ຍັກຍອກເອົາຊັບສິນຂອງການຈັດຕັ້ງ, ຂອງລວມໝູ່ ແລະ ຂອງຜູ້ອື່ນ.

- ປອດໃສ: ແມ່ນການກະທຳທີ່ບໍລິສຸດ, ຈິງໃຈຕໍ່ການຈັດຕັ້ງ ແລະ ຄອບຄົວ; ປອດໃສຍັງແມ່ນການກະທຳທີ່ຖືກຕ້ອງກັບລະບຽບກົດໝາຍ ແລະ ຮີດຄອງປະເພນີຂອງຊາດ.

3. ເຄົາລົບລະບຽບກົດໝາຍ ແລະ ມີລະບຽບວິໄນເຄັ່ງຄັດ.

- ຕ້ອງຮູ້, ເຄົາລົບ, ປະຕິບັດກົດໝາຍຢ່າງເຄັ່ງຄັດ ແລະ ມີລະບຽບວິໄນດີ; ບໍ່ສວຍໃຊ້ລະ ບຽບກົດໝາຍຕ່າງໆ ເພື່ອໃຫ້ຕົນເອງມີຄວາມສະດວກ ແລະ ມີຜົນປະໂຫຍດ.

- ເຄົາລົບສິດເສລີພາບຂອງພົນລະເມືອງ ແລະ ເປັນເຈົ້າການປະກອບສ່ວນເຂົ້າໃນການ ປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ; ປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມ ເປັນລະບຽບຮຽບຮ້ອຍ ແລະ ປອດໄພໃນສັງຄົມ.

4. ມີຄວາມສາມັກຄີເອື້ອເຟື້ອ

- ມີຄວາມນັບຖື, ຮັກແພງ, ມີຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນ; ຢູ່ຮ່ວມກັນເຮັດວຽກນຳກັນ ດ້ວຍຄວາມເຫັນໃຈກັນ, ຊ່ວຍເຫຼືອກັນມີຜົນສຳເລັດ; ມີຈິດໃຈເສຍສະຫຼະເພື່ອຜູ້ອື່ນດ້ວຍຄວາມບໍ ລິສຸດໃຈ ແລະ ບໍ່ມີແນວຄິດອະຄະຕິ, ອິດສາບັງບຽດຄົນອື່ນ.

5. ນິຍົມຂອງຊາດຕົນ.

- ມີຄວາມພາກພູມໃຈຕໍ່ຊາດ; ມີຄວາມຍິນດີຊົມໃຊ້ ແລະ ສົ່ງເສີມຜະລິດຕະພັນອັນໃດ ແມ່ນຄົນລາວເຮັດ.

- ມີຄວາມດີໃຈ, ເອກອ້າງ, ສັນລະເສີນຊາດຕົນ, ອັນໃດແມ່ນຜົນສຳເລັດ, ແມ່ນໄຊຊະນະ ທີ່ຄົນລາວຍາດໄດ້ກໍຕ້ອງມີຄວາມພາກພູມໃຈຍ້ອງຍໍສັນລະເສີນ.

- ເປັນເຈົ້າການເຜີຍແຜ່ໂຄສະນາສິ່ງທີ່ດີງາມຂອງຊາດຕໍ່ຕ່າງຊາດ, ບໍ່ຕຳນິວິຈານ ແລະ ເວົ້າສິ່ງທີ່ບໍ່ດີ, ບໍ່ງາມໃຫ້ຊາດອື່ນຟັງ.

- ເອົາໃຈໃສ່ຄົ້ນຄ້ວາປະດິດສ້າງ ຜະລິດວັດຖຸສິ່ງຂອງທີ່ມີຄຸນນະພາບ, ສວຍງາມສະແດງ ອອກໃຫ້ຊາດອື່ນເຫັນ; ມີຈິດໃຈແຂ່ງຂັນກັບຊາດອື່ນເພື່ອກຽດ ແລະ ຊື່ສຽງຂອງຊາດຕົນ.

6. ສຸພາບຮຽບຮ້ອຍ ແລະ ເຮັດແທ້ທຳຈິງ.

- ຕ້ອງຄ່ຽມຄົມ, ມີທັດສະນະ ແລະ ການກະທຳໃຫ້ກຽດຄົນອື່ນ, ເຄົາລົບນັບຖືຮັກແພງ ເພື່ອນຮ່ວມງານ ແລະ ປະຊາຊົນ. ແຕ່ງກາຍສຸພາບຮຽບຮ້ອຍສະອາດງາມຕາ ແລະ ເວົ້າຈາອ່ອນ ໂຍນສຸຂຸມຮອບຄອບ, ບໍ່ອວດອົ່ງທະນົງຕົວ.

- ຕ້ອງເປັນຄົນເຮັດແທ້ທຳຈິງ, ເວົ້າຕ້ອງໄປຄຽງຄູ່ກັບເຮັດ (ເວົ້າແລ້ວຕ້ອງເຮັດເປັນ); ເວົ້າ ແນວໃດເຮັດແນວນັ້ນ ແລະ ຕ້ອງເຮັດໃຫ້ດີທີ່ສຸດ.

7. ບຸກບືນ ຮຽນຮູ້ ແລະ ພັດທະນາຕົນເອງ.

- ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມຕັດສິນໃຈບຸກບືນຄົ້ນຄ້ວາຮ່ຳຮຽນຍົກລະດັບຕົນ ເອງເພື່ອເຮັດສຳເລັດທຸກໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍເປັນຢ່າງດີ ຈຶ່ງຈະເຮັດໃຫ້ຕົນມີຄວາມ ກ້າວໜ້າ. ເນື່ອງຈາກວ່າ ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານນັບມື້ນັບສູງຂຶ້ນ, ສະນັ້ນ ຢາກເຮັດສຳເລັດໜ້າທີ່ເປັນຢ່າງດີ ຕ້ອງເອົາໃຈໃສ່ຄົ້ນຄ້ວາຮ່ຳຮຽນດ້ວຍຫຼາຍວິທີ ເພື່ອຍົກລະດັບ ຄວາມຮູ້ຂອງຕົນໃຫ້ສູງຂຶ້ນໃນທຸກດ້ານເຊັ່ນ: ຮຽນດ້ວຍຕົນເອງ, ຮຽນນຳຄູ - ອາຈານ, ຮຽນນຳຂະ ບວນການຕົວຈິງມະຫາຊົນ ແລະ ອື່ນໆ.

- ການຮຽນຮູ້ເນື້ອແທ້ ກໍແມ່ນການພັດທະນາຕົນເອງ, ຜ່ານການຮຽນຮູ້ຈຶ່ງມີບົດຮຽນ, ມີສະ ຕິປັນຍາສາມາດເຂົ້າໃຈສະພາບການຂອງໂລກ, ສະພາບເສດຖະກິດ-ສັງຄົມ. ມີຄວາມຮູ້ຄວາມ ສາມາດຈຶ່ງເຮັດໃຫ້ສຳເລັດໜ້າທີ່ວຽກງານ; ມີຄວາມຮູ້ຄວາມສາມາດຈຶ່ງພັດທະນາຕົນເອງ ແລະ ຄອບຄົວໃຫ້ຮັ່ງມີຜາສຸກ, ພັດທະນາປະເທດຊາດໃຫ້ມັ່ງຄັ່ງເຂັ້ມແຂງໄດ້.

<u>ຄຳຖາມ </u>21: ລະບຽບວິໄນຂອງພັກແມ່ນຫຍັງ ?

<u>ຕອບ</u>: ລະບຽບວິໄນຂອງພັກ ແມ່ນລະບົບຂໍ້ກຳນົດ, ບັນດາຫຼັກການ ການປະພຶດຂອງທົ່ວ ພັກ ເຊິ່ງກວມເອົາວັດຖຸປະສົງຂອງພັກ, ບັນດາຫຼັກການກໍ່ສ້າງພັກ, ຫຼັກການຈັດຕັ້ງ ແລະ ລະບົບ ການຈັດຕັ້ງຂອງພັກ ແລະ ສະມາຊິກພັກ, ເງື່ອນໄຂ ແລະ ມາດຖານຂອງບັນດາຜູ້ທີ່ຈະຮັບເຂົ້າ ເປັນສະມາຊິກພັກ, ໜ້າທີ່ ແລະ ສິດຂອງສະມາຊິກພັກ; ການນຳພາຂອງພັກຕໍ່ລັດ, ຕໍ່ກຳລັງປະ ກອບອາວຸດ-ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນໆ ແລະ ການປະຕິບັດວິໄນຂອງພັກ...

- ລະບຽບວິໄນຂອງພັກ ສະແດງອອກຢ່າງເລິກເຊິ່ງ ເຖິງທາດແທ້ຊົນຊັ້ນຂອງພັກ, ລັກ ສະນະຊົນຊັ້ນ , ລັກສະນະນຳໜ້າຕໍ່ສູ້ຂອງພັກ, ສະມາຊິກພັກທຸກຄົນ ແລະ ການຈັດຕັ້ງພັກທຸກ ຂັ້ນຕ້ອງປະຕິບັດຢ່າງເຂັ້ມງວດ ແລະ ຕໍ່ສູ້ຕ້ານທຸກປະກົດການລະເມີດກົດລະບຽບຂອງພັກ.

- ກົດລະບຽບຂອງພັກ ເນື້ອແທ້ມັນແມ່ນແນວທາງດ້ານການຈັດຕັ້ງຂອງພັກ. ສະນັ້ນ, ຈຶ່ງ ຕ້ອງໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍໄປພ້ອມໆ ກັບຂະບວນວິວັດແຫ່ງການຂະຫຍາຍ ຕົວຂອງການປະຕິວັດ, ໄປພ້ອມກັບການກຳນົດແນວທາງການເມືອງ. ສະນັ້ນ, ໃນແຕ່ລະສະໄໝ ຂອງກອງປະຊຸມໃຫຍ່ຂອງພັກ ກົດລະບຽບພັກຈຶ່ງໄດ້ຮັບການພິຈາລະນາ, ດັດແປງ ແລະ ເພີ່ມ ເຕີມເພື່ອໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່ຂອງ ການປະຕິວັດ.

<u>ຄຳຖາມ </u>22: ຂໍ້ຫ້າມສຳລັບສະມາຊິກພັກມີຫຍັງແດ່ ?

<u>ຕອບ</u>: ຂໍ້ຫ້າມສຳລັບສະມາຊິກພັກມີດັ່ງນີ້:

1. ຫ້າມເອົາຂໍ້ມູນ, ຂ່າວສານ ແລະ ເອກະສານຕ່າງໆ ທີ່ເປັນຄວາມລັບຂອງຊາດ, ຂອງ ພັກ ຂອງລັດ, ຂອງກົມກອງອອກເຜີຍແຜ່, ແຈກຢາຍດ້ວຍຮູບການຕ່າງໆ.

2. ຫ້າມສະແດງທັດສະນະ, ຄວາມຄິດເຫັນສ່ວນຕົວ ແລະ ການກະທຳທີ່ຂັດ ຫຼື ລະເມີດ ແນວທາງ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ; ຫ້າມມີເຈດຈຳນົງ ແລະ ການກະທຳ ທີ່ມີລັກສະນະຫຼາຍພັກ-ຫຼາຍເຄົ້າ, ກໍ່ພັກແຍກພວກ, ແບ່ງແຍກຄວາມສາມັກຄີພາຍ ໃນ ແລະ ຄວາມສາມັກຄີຊົນເຜົ່າ.

3. ຫ້າມແກ້ແຄ້ນ, ປາບປາມ, ບັງຄັບ, ນາບຂູ່ທຸກຮູບແບບຕໍ່ຜູ້ກ່າວຟ້ອງ ຜູ້ຕຳນິສິ່ງຂ່າວ ແລະ ສະເໜີລາຍງານ ຂໍ້ມູນດ້ານຫຍໍ້ທໍ້ຕ່າງໆຂອງຕົນໃຫ້ແກ່ການຈັດຕັ້ງ ແລະ ຂັ້ນເທິງ.

4. ຫ້າມຈັດຕັ້ງ, ເຄື່ອນໄຫວ, ເຂົ້າຮ່ວມຊຸມນຸມປະທ້ວງຕ້ານການຈັດຕັ້ງພັກ - ລັດ ແລະ ໂຄສະນາບິດເບືອນ, ທັບຖົມໂຈມຕີຕໍ່ບຸກຄົນ ຫຼື ການຈັດຕັ້ງ ແລະ ລະບອບປະຊາທິປະໄຕ ປະຊາ ຊົນລາວ.

5. ຫ້າມສວຍໃຊ້ໜ້າທີ່, ຕຳແໜ່ງ, ສິດອຳນາດຂອງຕົນ ຫຼື ແອບອ້າງຖານະຊື່ສຽງຂອງ ບຸກຄົນອື່ນເພື່ອສະແຫວງຫາຜົນປະໂຫຍດແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ບຸກຄົນອື່ນໆ.

6. ຫ້າມເປັນນາຍໜ້າໃຫ້ແກ່ການເຄື່ອນໄຫວດ້ານທຸລະກິດ, ການດຳເນີນຄະດີ, ສ້າງເງື່ອນ ໄຂອຳນວຍຄວາມສະດວກໃຫ້ບຸກຄົນອື່ນໆ ເພື່ອເຄື່ອນໄຫວຄ້າຂາຍເຖື່ອນ ແລະ ອື່ນໆ ທີ່ຜິດ ຕໍ່ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

7. ຫ້າມສະມາຊິກພັກທີ່ເປັນພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານ ລັດວິສາຫະກິດທີ່ມີຖານະຕຳແໜ່ງ, ສິດອຳນາດລວມທັງເລຂາໜ່ວຍພັກ ແລະ ນາຍບ້ານແຕ່ງ ຕັ້ງ, ບັນຈຸ, ສັບຊ້ອນ ຜົວ ຫຼື ເມຍ, ລູກ ຫຼື ຍາດໃກ້ຊິດ ເຂົ້າດຳລົງຕຳແໜ່ງເປັນນາຍຄັງ, ພະນັກ ງານບັນຊີ, ການເງິນຢູ່ບ່ອນການຈັດຕັ້ງທີ່ຕົນຮັບຜິດຊອບໂດຍກົງ.

8. ຫ້າມສະມາຊິກພັກທີ່ເປັນພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດທີ່ຍັງປະຈຳ ການເປັນທີ່ປຶກສາໃຫ້ແກ່ວິສາຫະກິດເອກະຊົນທັງພາຍໃນ ແລະ ຕ່າງປະເທດ; ຫ້າມເປັນຜູ້ອຳ ນວຍການ, ຄະນະອຳນວຍການ, ຜູ້ຈັດການວິສາຫະກິດໃດໜຶ່ງ (ຍົກເວັ້ນຜູ້ທີ່ໄດ້ຖືກແຕ່ງຕັ້ງມອບ ໝາຍຈາກການຈັດຕັ້ງ).

9. ຫ້າມປອມແປງເອກະສານ, ນຳໃຊ້ເອກະສານປອມ, ກົດໜ່ວງຖ່ວງດຶງເອກະສານຕ່າງໆ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ບຸກຄົນອື່ນໆ.

10. ຫ້າມປົກປິດ, ເຊື່ອງອຳຂໍ້ມູນ, ຫຼັກຖານ ຫຼື ລາຍງານບໍ່ຖືກກັບຕົວຈິງ, ບໍ່ໃຫ້ການຮ່ວມມືກັບການຈັດຕັ້ງທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່.

11. ຫ້າມໃຫ້ສິນບົນ, ຮັບສິນບົນ, ທວງເອົາ, ຂໍເອົາເປີເຊັນເປັນວັດຖຸ, ເງິນຄຳຕ່າງໆໃນທຸກກໍລະນີ.

12. ຫ້າມຍັກຍອກ, ສໍ້ໂກງເອົາຊັບສິນ, ເງິນຄຳຂອງລັດ, ລວມໝູ່, ຂອງພົນລະເມືອງ ແລະ ຫ້າມນຳໃຊ້ງົບປະມານ, ຊັບສິນຂອງລັດ, ລວມໝູ່ ຫຼື ປຸກລະດົມການອຸປະຖຳໃນທຸກຮູບແບບ ເພື່ອຈັດງານຕ່າງໆ ຫຼື ເອົາໄປເຮັດຂອງຂວັນຂອງຕ້ອນຮັບໃຊ້ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ບຸກຄົນອື່ນໆ.

13. ຫ້າມຄອບຄອງ, ນຳໃຊ້ຊັບສິນຕ່າງໆຂອງລັດ, ລວມໝູ່ ເກີນກຳນົດທີ່ອະນຸຍາດ ແລະ ຫ້າມຫັນ, ໂອນ, ໃຫ້ຜູ້ອື່ນເຊົ່າ ຫຼື ເອົາໄປນຳໃຊ້ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

14. ຫ້າມຫຼິ້ນ ຫຼື ເຂົ້າຮ່ວມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃນການຫຼິ້ນພະ ນັນທີ່ຕ້ອງຫ້າມ ແລະ ຫ້າມເຄື່ອນໄຫວເປັນໝໍຜີ, ໝໍດູ, ໝໍເປົ່າ, ນັກບວດ ແລະ ສວຍໃຊ້ສາສະ ໜາເຄື່ອນໄຫວທີ່ຜິດຕໍ່ກົດໝາຍ.

15. ຫ້າມທຳມິດສະຈານ, ຢູ່ຮ່ວມກັນກັບບຸກຄົນອື່ນແບບຜົວ ຫຼື ເມຍ ແລະ ຫ້າມແຕ່ງ ງານກັບຄົນຕ່າງປະເທດ ທີ່ບໍ່ຖືກຕ້ອງກັບກົດໝາຍ ແລະ ລະບຽບການຂອງລັດ.

<u>ຄຳຖາມ </u>23: ຢາກຝຶກຝົນຫຼໍ່ຫຼອມຕົນເອງໃຫ້ເປັນສະມາຊິກພັກທີ່ດີຕ້ອງເຮັດຫຍັງແດ່ ?

<u>ຕອບ</u>: ຢາກຝຶກຝົນຫຼໍ່ຫຼອມຕົນເອງໃຫ້ເປັນສະມາຊິກພັກດີ, ພວກເຮົາຕ້ອງໄດ້ປະຕິບັດ ແລະ ຝຶກຝົນບາງບັນຫາ ດັ່ງນີ້:

- ກ່ອນອື່ນ ພວກເຮົາຕ້ອງຈັດຕັ້ງປະຕິບັດ 5 ໜ້າທີ່ຂອງສະມາຊິກພັກໃຫ້ດີທີ່ສຸດຄື: ເປັນເຈົ້າການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ປະກອບສ່ວນເຂົ້າໃນການກໍ່ສ້າງບູລະນະແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ເຮັດສຳເລັດທຸກໜ້າທີ່ ທີ່ພັກມອບໝາຍໃຫ້. ໝາຍຄວາມວ່າ ສະມາຊິກພັກທຸກຄົນທັງປຸກລະດົມນຳພາ ທັງເປັນຜູ້ຈັດຕັ້ງປະຕິບັດຕົວຈິງເຊັ່ນ: ການຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າຢ່າງເປັນຂະບວນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ, ການເຂົ້າຮ່ວມໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສ້າງບັນດາປ້ອມໝັ້ນ, ກຸ່ມບ້ານສູ້ຣົບຕິດລ່ຽນໃຫ້ເຂັ້ມແຂງ. ນຳພາ ແລະ ປຸກລະດົມປະຊາຊົນບັນດາເຜົ່າເຂົ້າຮ່ວມຢ່າງຕັ້ງໜ້າໃນການສຶກສາ, ຂະບວນອະນາໄມສາມສະອາດ ແລະ ອື່ນໆ ຢ່າງຕັ້ງໜ້າ.

- ເອົາໃຈໃສ່ຮ່ຳຮຽນທິດສະດີມາກ-ເລນິນ, ຮ່ຳຮຽນແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ຍົກລະດັບການສຶກສາ, ວິທະຍາສາດ, ເຕັກນິກ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ຮ່ຳຮຽນບົດຮຽນທີ່ດີຂອງຕ່າງປະເທດ ເພື່ອຍົກລະດັບ ແລະ ປະສິດທິຜົນຂອງວຽກງານທີ່ຕົນ ຮັບຜິດຊອບ.

- ຕັ້ງໜ້າກໍ່ສ້າງຕົນເອງ ແລະ ກໍ່ສ້າງພັກໃຫ້ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພາ, ເປັນເຈົ້າການຕິຊົມຕົນເອງ ຕິຊົມກັນ, ປະຕິບັດກົດລະບຽບຂອງພັກຢ່າງເຂັ້ມງວດ , ຍົກສູງສະຕິໃນການປົກປັກຮັກສາພັກ, ປົກປັກຮັກສາຄວາມສາມັກຄີ, ຄວາມລັບ ແລະ ອິດທິພົນຂອງພັກ; ຕ້ານການຫັນປ່ຽນໂດຍສັນຕິຂອງສັດຕູ; ຕ້ານແນວຄິດຫຼາຍພັກ ຫຼາຍເຄົ້າ, ຕ້ານທຸກການກະທຳທີ່ລະເມີດສິດ ແລະ ຜົນປະໂຫຍດຂອງພົນລະເມືອງ, ເຂົ້າຮ່ວມດຳເນີນຊີວິດ, ອອກເງິນສະຕິພັກເປັນປົກກະຕິ, ຕັ້ງໜ້າເຮັດວຽກງານຂະຫຍາຍພັກ ແລະ ກໍ່ສ້າງໜ່ວຍພັກໃຫ້ເຂັ້ມແຂງ-ຮູ້ນຳພາຮອບດ້ານ; ໝາຍຄວາມວ່າ ພວກເຮົາຕ້ອງສ້າງໃຫ້ຕົນເອງມີອຸດົມການ ການເມືອງອັນແນວແນ່, ມີນ້ຳໃຈເດັດດ່ຽວຕໍ່ສູ້ກັບສັດຕູ, ມີສະຕິລະວັງຕົວສູງຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ຕ້ອງຮຽນຮູ້ທິດສະດີມາກ-ເລນິນ ແນວທາງນະໂຍບາຍຂອງພັກ ແລະ ມີຄວາມສາມາດຜັນຂະຫຍາຍເປັນກົດໝາຍ, ເປັນນະໂຍບາຍ ແລະ ແຜນການດ້ານຕ່າງໆ, ມີ ຄວາມມານະອົດທົນ, ມີຄວາມຮັບຜິດຊອບສູງໃນການປະຕິບັດໜ້າທີ່ວຽກງານ, ເຊື່ອໝັ້ນຕໍ່ກຳລັງແຮງ ແລະ ສະຕິປັນຍາຂອງມະຫາຊົນ, ເດັດດ່ຽວຢຶດໝັ້ນໃນການນຳພາຂອງພັກ, ມີຄວາມສາມັກຄີ ເອກະພາບພາຍໃນ, ມີສະຕິຕໍ່ການຈັດຕັ້ງ ລະບຽບວິໄນສູງ.

- ສ້າງໃຫ້ຕົນມີນໍ້າໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ, ສ້າງໃຫ້ມີຄວາມຂະຫຍັນໝັ່ນພຽນ, ປະຢັດຊື່ສັດ ແລະ ປອດໃສ, ສ້າງໃຫ້ຕົນເອງມີລະບຽບວິໄນ ແລະ ເຄົາລົບກົດໝາຍ.

- ພົວພັນກັບມະຫາຊົນຢ່າງສະໜິດແໜ້ນ; ເອົາໃຈໃສ່ເຖິງສິດຜົນປະໂຫຍດຂອງມະຫາຊົນ, ໂຄສະນານຳພາມະຫາຊົນປະຕິບັດແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນ; ໝາຍຄວາມວ່າ ພວກເຮົາຕ້ອງເຊື່ອມເຂົ້າກັບມະຫາຊົນ, ໃກ້ຊິດກັບມະຫາຊົນ, ງ່ຽງຫູຟັງຄຳຄິດເຫັນ, ຄຳສະເໜີ, ຄວາມມຸ່ງມາດປາຖະໜາ ອັນເປັນທຳ, ສົມເຫດ, ສົມຜົນຂອງມະຫາຊົນ; ພ້ອມກັບມະຫາຊົນຊອກວິທີທີ່ດີທີ່ສຸດ ເພື່ອນຳພາແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຢູ່ໃນໝູ່ມະຫາຊົນ, ພ້ອມກັນນັ້ນ ກໍຮຽນຮູ້ບົດຮຽນຕົວຈິງນຳມະຫາຊົນເພື່ອມາປັບປຸງຕົນເອງ ເວົ້າສະເພາະ, ປັບປຸງພັກເວົ້າລວມ.

- ກຳແໜ້ນ ແລະ ປະຕິບັດນະໂຍບາຍການຕ່າງປະເທດຂອງພັກ ແລະ ລັດ, ຍົກສູງນໍ້າໃຈສາມັກຄີສາກົນອັນຜ່ອງໃສ; ໝາຍຄວາມວ່າພວກເຮົາຕ້ອງກຳແໜ້ນ ແລະ ຍຶດໝັ້ນໃນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ. ສົມທົບລະຫວ່າງການເຊີດຊູນໍ້າໃຈຮັກຊາດ. ສ້າງສະຕິເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ກັບການອອກແຮງຍາດແຍ່ງເອົາກຳລັງແຮງ ແລະ ກາລະໂອກາດອັນອຳນວຍຂອງຍຸກສະໄໝຢ່າງແໜ້ນແຟ້ນ ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດກ້າວຂຶ້ນ ຕາມເສັ້ນທາງສັງຄົມນິຍົມ ຢ່າງໜັກແໜ້ນ.

- ສືບຕໍ່ຮັດແໜ້ນ ແລະ ເພີ່ມທະວີການພົວພັນຮ່ວມມືຮອບດ້ານ ກັບບັນດາປະເທດເພື່ອນມິດຍຸດທະສາດ, ໂດຍຖືເອົາອັນນີ້ ເພື່ອສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ພວກເຮົາ ໃນການປະຕິບັດ 2 ໜ້າທີ່ຍຸດທະສາດ ແລະ ໃນການສ້າງທ່າແຮງໃຫ້ປະເທດເຮົາໃນການພົວພັນສາກົນ, ໃນນີ້ຕ້ອງສຸມໃສ່ເພີ່ມພູນຄູນສ້າງມູນເຊື້ອສາມັກຄີພິເສດ ແລະ ຮ່ວມມືຮອບດ້ານກັບ ສ.ສ ຫວຽດນາມ, ຂະຫຍາຍການພົວພັນຮ່ວມມືຮອບດ້ານກັບ ສ.ປ ຈີນ.

ຖືສຳຄັນການພົວພັນຮ່ວມມືທີ່ດີ ແລະ ເກີດດອກອອກຜົນກັບອາຊຽນ ແລະ ກັບປະເທດໃກ້ຄຽງອື່ນໆ, ແກ້ໄຂບັນຫາຕ່າງໆນຳກັນ ດ້ວຍການເຈລະຈາປຶກສາຫາລື, ເພີ່ມຄວາມເຂົ້າໃຈ ແລະ ຄວາມໄວ້ເນື້ອເຊື່ອໃຈກັນໃຫ້ສູງຂຶ້ນ ແນໃສ່ຮັກສາບັນຍາກາດແຫ່ງສັນຕິພາບ ແລະ ມິດຕະພາບໄວ້ໃຫ້ຍາວນານ ເພື່ອເປັນເງື່ອນໄຂອຳນວຍໃຫ້ພວກເຮົາສຸມໃສ່ພາລະກິດສ້າງສາບ້ານເມືອງ.

- ເພີ່ມທະວີຄວາມສາມັກຄີ ແລະ ການຮ່ວມມືກັບບັນດາປະເທດບໍ່ຮ່ວມກຸ່ມ, ບັນດາປະເທດກຳລັງພັດທະນາ ເພື່ອພ້ອມກັນຍາດແຍ່ງເອົາຜົນປະໂຫຍດອັນຊອບທຳ ທາງດ້ານການເມືອງ, ເສດຖະກິດ ມາໃຫ້ປະເທດຕົນ.

- ສືບຕໍ່ຮັກສາການພົວພັນອັນເປັນປົກກະຕິ ກັບບັນດາປະເທດທຶນນິຍົມ, ເປັນເຈົ້າການຍາດແຍ່ງການຮ່ວມມື ແລະ ການຊ່ວຍເຫຼືອໃນຮູບການຕ່າງໆ ຈາກບັນດາປະເທດອຸດສາຫະກຳຂະຫຍາຍຕົວ.

- ເຂົ້າຮ່ວມໃນການເຄື່ອນໄຫວ ຂອງອົງການສະຫະປະຊາຊາດ ແລະ ບັນດາເຄືອຂ່າຍຂອງສະຫະປະຊາຊາດ ຂອງກຸ່ມປະເທດທີ່ໃຊ້ພາສາຝຣັ່ງ ກໍຄື ສະຖາບັນການເງິນອົງການຈັດຕັ້ງສາກົນ ແລະ ພາກພື້ນອື່ນໆຢ່າງເໝາະສົມ ເພື່ອພາລະກິດ ສັນຕິພາບ ແລະ ການພັດທະນາ.

- ຕັ້ງໜ້າຂະຫຍາຍການພົວພັນກັບພັກການເມືອງໃນປະເທດຕ່າງໆ ຕາມຄວາມເໝາະສົມ ບົນພື້ນຖານການເຄົາລົບ ເອກະລາດ, ຄວາມເປັນເຈົ້າຕົນເອງ, ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ປະກອບສ່ວນຊຸກຍູ້ສົ່ງເສີມການພົວພັນຮ່ວມມືອັນມິດຫາກຜົນລະຫວ່າງລັດຕໍ່ລັດ.

- ຂະຫຍາຍການເຄື່ອນໄຫວ ການທູດໃຫ້ກວ້າງຂວາງ, ເພີ່ມທະວີຄວາມເຂົ້າໃຈກັນ ລະຫວ່າງປະຊາຊົນເຮົາກັບນາໆຊາດ ເພື່ອສັນຕິພາບ, ມິດຕະພາບ ແລະ ສົ່ງເສີມການຮ່ວມມືເພື່ອການພັດທະນາ.

<u>ຄຳຖາມ </u>24: ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກມີຄວາມໝາຍ ແລະ ຈຳເປັນແນວໃດ? ສະແດງອອກແນວໃດ ?

<u>ຕອບ</u>: ຄວາມໝາຍ ແລະ ຄວາມຈຳເປັນໃນການເຊີດຊູ ຄວາມເປັນແບບຢ່າງນຳໜ້າ ຂອງສະມາຊິກພັກ

1. ຄວາມໝາຍ ກ່ຽວກັບຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.

- ລັກສະນະນຳໜ້າເປັນແບບຢ່າງຂອງສະມາຊິກພັກ ແມ່ນພື້ນຖານທີ່ດີໃຫ້ແກ່ການນຳພາ ຂອງພັກ. ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດເປັນຕົ້ນມາ ຍາມໃດກໍຖືເອົາການນຳພາ ດ້ວຍຄວາມເປັນແບບຢ່າງຂອງສະມາຊິກພັກ ແມ່ນໜຶ່ງໃນບັນດາບົດບາດ ແລະ ວິທີນຳພາຂອງ ພັກ. ພັກເຮົາໄດ້ໃຫ້ທັດສະນະວ່າ ການນຳພາທີ່ດີ ແມ່ນການນຳພາຜ່ານຄວາມເປັນແບບຢ່າງຂອງ ສະມາຊິກພັກ.

2. ຄວາມຈຳເປັນໃນການເຊີດຊູຄວາມເປັນແບບຢ່າງນຳໜ້າ ຂອງສະມາຊິກພັກ.

- ສະມາຊິກພັກ ແມ່ນຜູ້ເປັນຫຼັກແຫຼ່ງ (ແກ່ນສານ) ຢູ່ທຸກຂົງເຂດວຽກງານ; ເປັນຜູ້ທີ່ມີບົດ ບາດສຳຄັນໃນການກຳນົດ ແລະ ຈັດຕັ້ງປະຕິບັດແນວທາງ ແຜນນະໂຍບາຍຂອງພັກ, ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ; ສະມາຊິກພັກ ໂດຍສະເພາະ ຜູ້ທີ່ມີບົດບາດອິດທິພົນສູງເທົ່າໃດ ຍິ່ງເປັນເປົ້າສາຍຕາຂອງມະຫາຊົນ. ສະນັ້ນ, ຄວາມເປັນແບບຢ່າງທີ່ດີຂອງສະມາຊິກພັກ ຈຶ່ງເປັນ ແວ່ນແຍງອັນໃສແຈ້ງ ແລະ ເປັນແຮງດຶງດູດເອົາຄວາມເຊື່ອໝັ້ນ ຂອງມະຫາຊົນໄດ້ກວ້າງຂວາງ.

( ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ສະແດງອອກດັ່ງນີ້:

1. ເປັນແບບຢ່າງໃນການຄົ້ນຄວ້າຮ່ຳຮຽນ ສະແຫວງຫາຄວາມກ້າວໜ້າ.

- ສະມາຊິກພັກແຕ່ລະສະຫາຍ ຕ້ອງນຳໜ້າພາທາງມະຫາຊົນໃນການຄົ້ນຄວ້າຮ່ຳຮຽນຍົກ ລະດັບຄວາມຮູ້ຂອງຕົນຂຶ້ນໃນທຸກດ້ານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ ວຽກງານ ໂດຍສະເພາະ ແມ່ນຄວນຮູ້ກ່ຽວກັບລັດທິມາກ-ເລນິນ, ແນວທາງແຜນນະໂຍບາຍຂອງ ພັກ, ລະບຽບກົດໝາຍຂອງລັດ ແລະ ຄວາມຮູ້ ຄວາມຊຳນິຊຳນານດ້ານວິຊາສະເພາະ.

2. ເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ.

- ສະມາຊິກພັກ ຈະຢູ່ໃນຖານະຕຳແໜ່ງໃດກໍຕາມ ເມື່ອໄດ້ຮັບມອບໝາຍວຽກງານຈາກ ການຈັດຕັ້ງເຖິງວ່າຈະເປັນວຽກໃຫຍ່, ວຽກນ້ອຍ, ວຽກຫຍຸ້ງຍາກສັບສົນປານໃດກໍຕາມ ຕ້ອງຍິນດີ ຮັບເອົາດ້ວຍຄວາມຈິງໃຈ; ພ້ອມກັນນັ້ນ ກໍຕ້ອງຕັ້ງໜ້າປະຕິບັດດ້ວຍຈິດໃຈກ້າຄິດ, ກ້າເຮັດ, ກ້າ ຮັບຜິດຊອບ, ບໍ່ໂຍນຄວາມຮັບຜິດຊອບໃຫ້ຜູ້ອື່ນ, ອັນໃດດີຄວນເສີມຂະຫຍາຍໃຫ້ດີຂຶ້ນກວ່າເກົ່າ, ອັນໃດຜິດກໍຄວນຊອກຫາວິທີແກ້ໄຂໃຫ້ທັນການ.

3. ເປັນແບບຢ່າງດ້ານມານະຈິດອິດທົນຜ່ານຜ່າອຸປະສັກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ໃນ ການດໍາລົງຊີວິດ ກໍຄື ການປະຕິບັດໜ້າທີ່ວຽກງານ.

- ການນໍາພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດພວກເຮົາໄປສູ່ ຈຸດໝາຍທີ່ກໍານົດໄວ້ ເວົ້າລວມ, ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຂອງສະມາຊິກ ພັກ ເວົ້າສະເພາະ ຍັງຈະສືບຕໍ່ມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍຫຼາຍປະການ. ສະ ນັ້ນ, ເປັນສະມາຊິກພັກ ຈະຕົກຢູ່ໃນສະພາບການໃດກໍຕາມ ຕ້ອງເປັນແບບຢ່າງດ້ານມານະຈິດ, ມີຄວາມເດັດດ່ຽວໜຽວແໜ້ນ, ບໍ່ທໍ້ຖອຍຕໍ່ອຸປະສັກໃດໆ. ສະມາຊິກພັກແຕ່ລະສະຫາຍຕ້ອງຢຶດ ຖືຄະຕິເຕືອນໃຈຢູ່ສະເໝີວ່າ: “ ໜັກຕ້ອງເອົາ, ເບົາຕ້ອງສູ້ ແລະ ຜ່ານຜ່າຂໍ້ຫຍຸ້ງຍາກຈຶ່ງຈະເຮັດໃຫ້ ຕົນເອງເຂັ້ມແຂງຂຶ້ນ ”.

4. ເປັນແບບຢ່າງນໍາໜ້າໃນການອຸທິດຕົນ ເພື່ອຜົນປະໂຫຍດຂອງຊາດ ແລະ ເພື່ອຄວາມ ຮັ່ງມີ-ຜາສຸກຂອງປະຊາຊົນ.

- ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າໃນຄວາມຫ້າວຫັນເປັນເຈົ້າການອຸທິດເຫື່ອແຮງ ແລະສະຕິປັນຍາຂອງຕົນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ນັບມື້ມີຄວາມຈະເລີນກ້າວໜ້າ ແລະ ມີຄວາມເປັນຫ່ວງເປັນໄຍນໍາຄວາມສຸກ-ທຸກຂອງປະຊາ ຊົນ. ໃນການປະຕິບັດໜ້າທີ່ວຽກງານ ຍາມໃດກໍຕ້ອງຖືເອົາປະຊາຊົນເປັນກົກ, ຕ້ອງເຮັດທຸກສິ່ງຢ່າງ ເພື່ອນໍາເອົາຄວາມຢູ່ດີ, ກິນດີມາໃຫ້ປະຊາຊົນ ແລະ ກໍານົດເອົາຄວາມມັ່ງຄັ້ງເຂັ້ມແຂງມາໃຫ້ປະ ເທດຊາດ.

5. ເປັນແບບຢ່າງນໍາໜ້າໃນການດໍາລົງຊີວິດທີ່ປອດໃສ, ດຸໝັ່ນຂະຫຍັນພຽນ, ປະຢັດ, ສັດຊື່ສາມັກຄີເອື້ອເຟື້ອ ເພື່ອແຜ່ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ.

- ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າທີ່ດີໃນການດໍາລົງຊີວິດ ກໍຄືທໍາມາຫາກິນ (ສ້າງ ຄວາມຮັ່ງມີໃຫ້ແກ່ຄອບຄົວ) ດ້ວຍຄວາມບໍລິສຸດປອດໃສ (ສ້າງຄວາມຮັ່ງມີທີ່ຖືກຕ້ອງຕາມກົດ ໝາຍ).

- ສະມາຊິກພັກ ຕ້ອງເປັນແບບຢ່າງທີ່ດີໃນການປະກອບອາຊີບ ກໍຄື ປະຕິບັດວຽກງານ ດ້ວຍຈິດໃຈດຸໝັ່ນຂະຫຍັນພຽນ, ປະຢັດ, ຊື່ສັດມີຄວາມສາມັກຄີຮັກແພງ, ຊ່ວຍເຫຼືອຜູ້ອື່ນ ທີ່ມີ ຄວາມຫຍຸ້ງຍາກກວ່າເພື່ອພ້ອມກັນກ້າວໜ້າ.

- ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າໃນການເສຍສະຫຼະຜົນປະໂຫຍດສ່ວນຕົວ ເພື່ອ ຜົນປະໂຫຍດສ່ວນລວມ ແລະ ຍາມໃດກໍຖືເອົາຜົນປະໂຫຍດສ່ວນລວມ ສູງກວ່າຜົນປະໂຫຍດ ສ່ວນຕົວ.

6. ເປັນແບບຢ່າງນໍາໜ້າໃນການເຄົາລົບ ແລະ ປະຕິບັດແນວທາງນະໂຍບາຍຂອງພັກ ລະ ບຽບກົດໝາຍຂອງລັດ.

- ສະມາຊິກພັກ ຊຶ່ງມີບົດບາດໃນການຄົ້ນຄວ້າ ແລະ ກໍານົດແນວທາງຂອງພັກ, ລະບຽບ ກົດໝາຍຂອງລັດ. ສະນັ້ນ, ສະມາຊິກພັກ ຕ້ອງເປັນແບບຢ່າງໃນການຈັດຕັ້ງແນວທາງນະໂຍບາຍ ຂອງພັກ ທີ່ວາງອອກໃນແຕ່ລະໄລຍະ, ສະມາຊິກພັກຍາມໃດກໍ ຕ້ອງເປັນແບບຢ່າງນໍາໜ້າໃນການ ເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.

7. ເປັນແບບຢ່າງໃນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ຢູ່ໃນກົງຈັກການຈັດຕັ້ງ ຂອງພັກ-ລັດເຮົາ.

- ປະກົດການຫຍໍ້ທໍ້ຢູ່ໃນສັງຄົມ ກໍຄື ຢູ່ໃນກົງຈັກການຈັດຕັ້ງຂອງພັກ, ຂອງລັດເຮົາ ລ້ວນ ແຕ່ສົ່ງຜົນກະທົບທາງລົບຕໍ່ບົດບາດການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ. ສະນັ້ນ, ສະ ມາຊິກພັກຕ້ອງເປັນຜູ້ນໍາໜ້າໃນການແກ້ໄຂ ໂດຍເລີ່ມຈາກການສໍາຫຼວດກວດກາຕົນເອງ ຫາກມີ ສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມຕື່ນຕົວເປັນເຈົ້າການແກ້ໄຂຢ່າງເດັດຂາດ ພ້ອມກັນນັ້ນ ຕ້ອງເອົາ ໃຈໃສ່ຕິດຕາມກວດກາຂົງເຂດຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈໍາ, ຫາກເຫັນສິ່ງຫຍໍ້ທໍ້ເກີດ ຂຶ້ນ ຕ້ອງມີຄວາມເຂັ້ມງວດ ໃນການແກ້ໄຂ, ຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ນັ້ນ.

<u>ຄໍາຖາມ</u> 25: ລະບົບການຈັດຕັ້ງຂອງພັກມີແນວໃດ ?

<u>ຕອບ</u>: ລະບົບການຈັດຕັ້ງ ແລະ ຄະນະນໍາຂອງພັກ.

ການຈັດຕັ້ງຂອງພັກປະຊາຊົນປະຕິວັດລາວປະກອບດ້ວຍ 4 ຂັ້ນຄື: ຂັ້ນສູນກາງ, ຂັ້ນ ແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ.

1. ຂັ້ນສູນກາງ: ປະກອບມີ ກົມການເມືອງສູນກາງພັກ, ຄະນະເລຂາສູນກາງພັກ ແລະ ຄະນະບໍລິຫານງານສູນກາງພັກ; ສູນກາງພັກມີບັນດາຄະນະຊ່ວຍວຽກ ດັ່ງນີ້:

+ ຫ້ອງວ່າການສູນກາງພັກ.

+ ຄະນະຈັດຕັ້ງສູນກາງພັກ.

+ ຄະນກວດກາສູນກາງພັກ.

+ ຄະນະໂຄສະນາອົບຮົມສູນກາງພັກ.

+ ຄະນະພົວພັນຕ່າງປະເທດສູນກາງພັກ.

+ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ຊຶ່ງເປັນອົງການທຽບເທົ່າຄະນະຕ່າງໆ ຂອງສູນກາງພັກ.

2. ຂັ້ນແຂວງ: ປະກອບມີ ເລຂາ, ຮອງເລຂາພັກແຂວງ; ຄະນະປະຈໍາພັກແຂວງ ແລະ ຄະນະພັກແຂວງ. ຄະນະພັກແຂວງມີຄະນະຊ່ວຍວຽກດັ່ງນີ້:

+ ຫ້ອງວ່າການແຂວງ.

+ ຄະນະຈັດຕັ້ງແຂວງ.

+ ຄະນະກວດກາແຂວງ.

+ ຄະນະໂຄສະນາອົບຮົມແຂວງ.

+ ໂຮງຮຽນການເມືອງ-ການປົກຄອງແຂວງ.

3. ຂັ້ນເມືອງ: ປະກອບມີ ເລຂາ, ຮອງເລຂາພັກເມືອງ; ຄະນະປະຈໍາພັກເມືອງ ແລະ ຄະ ນະພັກເມືອງ. ຄະນະພັກເມືອງມີຄະນະຊ່ວຍວຽກດັ່ງນີ້:

+ ຫ້ອງວ່າການເມືອງ.

+ ຄະນະຈັດຕັ້ງເມືອງ.

+ ຄະນະກວດກາເມືອງ.

+ ຄະນະໂຄສະນາອົບຮົມເມືອງ.

4. ຂັ້ນຮາກຖານ: ປະກອບມີຄະນະພັກຮາກຖານ ແລະ ໜ່ວຍພັກບ້ານ, ມີເລຂາ, ຮອງ ເລຂາ, ຄະນະພັກຮາກຖານ ແລະ ເລຂາ, ຮອງເລຂາ, ຄະນະພັກບ້ານ. ໜ່ວຍພັກບ້ານ ແມ່ນການ ຈັດຕັ້ງຂັ້ນລຸ່ມສຸດຂອງພັກ, ມີໜ້າທີ່ນຳພາປະຊາຊົນໂດຍກົງ ແລະ ຮອບດ້ານຢູ່ຮາກຖານ.

<u>ຄຳຖາມ </u>26: ຄະນະຂອງສູນກາງພັກມີຄະນະໃດແດ່ ?

<u>ຕອບ</u>: ຄະນະຂອງສູນກາງພັກມີດັ່ງນີ້:

( ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະພົວພັນການຕ່າງປະເທດສູນກາງພັກ, ຄະນະກວດກາສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

( ຫ້ອງວ່າການສູນກາງພັກ: ເປັນອົງການໜຶ່ງຂອງສູນກາງພັກ ມີພາລະບົດບາດເປັນເສນາທິການກ່ຽວກັບການປະສານງານ ແລະ ການບໍລິຫານງານ ຮັບໃຊ້ຄະນະບໍລິຫານງານສູນກາງພັກ, ຄະນະເລຂາທິການສູນກາງພັກ, ກົມການເມືອງ ແລະ ເລຂາທິການໃຫຍ່; ຕິດຕາມ, ສັງ ລວມ ແລະ ຄົ້ນຄວ້າສະພາບການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະ ສະ ພາບການນອກປະເທດ, ທັງເປັນໃຈກາງພົວພັນ, ປະສານງານລະຫວ່າງຄະນະຕ່າງໆຂອງສູນກາງພັກ, ລະຫວ່າງຄະນະພັກຂອງອົງການ, ຂອງຂະແໜງການ ແລະ ຂອງທ້ອງຖິ່ນຕ່າງໆ.

( ຄະນະຈັດຕັ້ງສູນກາງພັກ: ແມ່ນໜຶ່ງໃນບັນດາຄະນະຂອງພັກຂັ້ນສູນກາງ, ແມ່ນອົງ ການວິຊາສະເພາະ ກ່ຽວກັບວຽກງານຈັດຕັ້ງຢູ່ຂັ້ນສູນກາງ ມີພາລະບົດບາດເປັນເສນາທິການໃຫ້ ແກ່ຄະນະບໍລິຫານງານສູນກາງພັກ, ໂດຍສະເພາະ ແມ່ນກົມການເມືອງສູນກາງພັກ ແລະ ລັດຖະ ບານ ໃນການຄົ້ນຄວ້າແນວທາງແຜນນະໂຍບາຍ ແລະ ນະໂຍບາຍກ່ຽວກັບວຽກງານຈັດຕັ້ງ, ວຽກງານກໍ່ສ້າງພັກ, ວຽກງານພະນັກງານ.

( ຄະນະໂຄສະນາອົບຮົມສູນກາງພັກ: ແມ່ນຄະນະໜຶ່ງໃນບັນດາຄະນະພັກຂັ້ນສູນກາງ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງ ພັກ, ຄະນະເລຂາສູນກາງພັກ ແລະ ລັດຖະບານ ໃນການຄົ້ນຄວ້າແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍໃນຂົງເຂດວຽກງານການເມືອງ-ແນວຄິດ; ແມ່ນອົງການວິຊາສະເພາະກ່ຽວກັບ ວຽກງານການເມືອງແນວຄິດຢູ່ຂັ້ນສູນກາງ, ມີພາລະບົດບາດນຳພາ-ຊີ້ນຳວຽກງານການເມືອງ- ແນວຄິດໃຫ້ເລິກເຊິ່ງແທດເຖິງ, ຮັບປະກັນຫຼັກການລວມສູນເປັນເອກະພາບຂອງສູນກາງພັກ ໃນ ການເຄື່ອນໄຫວວຽກງານໂຄສະນາ-ສຶກສາອົບຮົມການເມືອງ-ແນວຄິດຂອງພັກ.

( ຄະນະກວດກາສູນກາງພັກ: ຄະນະກຳມະການກວດກາສູນກາງພັກ ມີພາລະບົດບາດເປັນເສນາທິການ ແລະ ມີຄວາມຮັບຜິດຊອບຕໍ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງ ແລະ ຄະນະເລຂາສູນກາງພັກ ກ່ຽວກັບວຽກງານຕິດຕາມ, ກວດກາພັກ; ຄົ້ນຄວ້າຍຸດທະສາດ, ວິທີການ, ມາດຕະການຕ່າງໆກ່ຽວກັບການເຄື່ອນໄຫວວຽກງານຕິດຕາມ, ກວດກາຂອງພັກ - ລັດ.

ເປັນອົງການມະຫາພາກ ໃນການຊີ້ນຳວຽກງານດ້ານວິຊາສະເພາະ ກວດກາໃຫ້ແກ່ອົງການກວດກາແຫ່ງລັດ, ຄະນະກວດກາຂອງພັກ ແລະ ລັດ ຢູ່ຂັ້ນກະຊວງ-ອົງການ ແລະ ທ້ອງຖິ່ນ.

( ຄະນະພົວພັນການຕ່າງປະເທດສູນກາງພັກ: ແມ່ນອົງການຈັດຕັ້ງໜຶ່ງ ຊຶ່ງມີຖານະທຽບເທົ່າກັບບັນດາຄະນະຂອງພັກຂັ້ນສູນກາງ ແລະ ພາຍໃຕ້ການຊີ້ນຳ, ນຳພາໂດຍກົງຂອງກົມການເມືອງສູນກາງພັກ, ມີພາລະບົດບາດເປັນເສນາທິການຊ່ວຍຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຕິດຕາມ, ສັງລວມ ແລະ ຄົ້ນຄວ້າວຽກງານພົວພັນຕ່າງປະເທດຂອງພັກ.

( ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ: ແມ່ນໜຶ່ງໃນບັນດາອົງການຈັດ ຕັ້ງສູນກາງພັກ ແລະ ຂອງລັດຖະບານເປັນອົງການວິຊາການຂັ້ນສູນກາງ, ມີຖານະເທົ່າທຽມກັບຄະນະຕ່າງໆ ຂອງພັກ, ມີພາລະບົດບາດກໍ່ສ້າງ ແລະ ບຳລຸງພະນັກງານ-ລັດຖະກອນທີ່ພວມດຳ ລົງຕຳແໜ່ງ ແລະ ກະກຽມຈະດຳລົງຕຳແໜ່ງຂັ້ນກາງ, ຂັ້ນສູງຂອງພັກ-ລັດ ແລະ ອົງການຈັດຕັ້ງ ມະຊົນ, ຄົ້ນຄວ້າທິດສະດີມາກ-ເລນິນ, ວິທະຍາສາດການເມືອງ ແລະ ການປົກຄອງ; ທິດສະດີ ປະຕິວັດ ແລະ ພຶດຕິກຳເພື່ອຮັບໃຊ້ການຮຽນ-ການສອນ ແລະ ປະກອບສ່ວນເຂົ້າໃນການຄົ້ນ ຄວ້າເຮັດໃຫ້ແນວທາງ ແລະ ແຜນນະໂຍບາຍຂອງພັກ-ລັດ ໄດ້ຮັບການຫັນປ່ຽນອັນລະອຽດ ແລະ ສົມບູນຂຶ້ນເລື້ອຍໆ.

<u>ຄຳຖາມ </u>27: ຮາກຖານພັກແມ່ນຫຍັງ ແລະ ເນື້ອໃນກໍ່ສ້າງໜ່ວຍພັກເຂັ້ມແຂງ - ຮູ້ ນຳພາຮອບດ້ານມີຫຍັງແດ່ ?

<u>ຕອບ</u>: ຮາກຖານພັກ ແມ່ນການຈັດຕັ້ງຂັ້ນລຸ່ມສຸດຂອງພັກ ຊຶ່ງໄດ້ຮັບການຈັດຕັ້ງຂຶ້ນຕາມ ບ້ານ, ກຸ່ມບ້ານ, ໂຮງຈັກ, ໂຮງງານ, ໂຮງຮຽນ, ໂຮງໝໍ, ວິສາຫະກິດ, ສຳນັກງານ - ອົງການ, ກົມ ກອງຮາກຖານໃນກຳລັງປະກອບອາວຸດ ແລະ ກົມກອງຮາກຖານອື່ນໆ.

- ການຈັດຕັ້ງຮາກຖານພັກ ແມ່ນພື້ນຖານຂອງພັກ, ເປັນບ່ອນເຜີຍແຜ່ ແລະ ຈັດຕັ້ງປະ ຕິບັດທຸກແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ ແລະ ກົດໝາຍຂອງລັດ ໃຫ້ເປັນຈິງ ແລະ ນຳເອົາຄວາມມຸ່ງມາດປາຖະໜາຂອງປະຊາຊົນ ສ່ອງແສງໃຫ້ຄະນະພັກຂັ້ນເທິງທັງເປັນໃຈກາງ ນຳພາເຕົ້າໂຮມຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ໃນໝູ່ມະຫາຊົນຢູ່ຂັ້ນຮາກ ຖານ.

+ ເນື້ອໃນກໍ່ສ້າງໜ່ວຍພັກໃຫ້ເຂັ້ມແຂງ - ຮູ້ນຳພາຮອບດ້ານມີ 2 ເນື້ອໃນຄື:

1. ສ້າງໜ່ວຍພັກໃຫ້ເຂັ້ມແຂງທັງ 4 ດ້ານ ດັ່ງນີ້:

( ດ້ານການເມືອງ: ຄະນະພັກ, ສະມາຊິກພັກທຸກສະຫາຍ ຕ້ອງຊື່ອມຊຶມ ແລະ ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ ແລະ ຂໍ້ກຳນົດກົດໝາຍຂອງລັດ; ຮູ້ຫັນເອົາແນວທາງແຜນນະໂຍບາຍຂອງພັກ ໃຫ້ແທດເໝາະກັບໜ້າທີ່ການເມືອງ ແລະ ເງື່ອນ ໄຂຕົວຈິງຂອງຮາກຖານຕົນ; ມີຄວາມຈົງຮັກພັກດີຕໍ່ພັກຕໍ່ປະເທດຊາດ ແລະ ປະຊາຊົນ, ເດັດດ່ຽວ ຕອບຕ້ານທຸກ ກົນອຸບາຍທຳລາຍມ້າງເພຂອງສັດຕູ ແລະ ຕ້ານກັບທຸກປະກົດການຫຍໍ້ທໍ້ຕ່າງໆ.

( ດ້ານແນວຄິດ: ຄະນະພັກ, ສະມາຊິກພັກທຸກສະຫາຍຕ້ອງມີຄວາມເປັນເອກະພາບ, ເຊື່ອໝັ້ນ ແລະ ປະຕິບັດຕາມແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກ, ຍຶດໝັ້ນຈຸດໝາຍສັງ ຄົມນິຍົມ, ມີຄວາມອົດທົນຜ່ານຜ່າຂໍ້ຫຍຸ້ງຍາກຕ່າງໆ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການທີ່ຜັນ ແປຕ່າງໆ, ມີແນວຄິດ ແລະ ການກະທຳທີ່ດີ, ມີຄວາມຍຸຕິທຳ ແລະ ອະລິຍະທຳທີ່ກ້າວໜ້າ.

( ດ້ານການຈັດຕັ້ງ: ຄະນະພັກ, ສະມາຊິກພັກ ຕ້ອງມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນ ຂອງພັກ ແລະ ຕໍ່ລະບຽບກົດໝາຍຂອງລັດ ມີຄວາມສາມັກຄີເປັນເອກະພາບ, ເປັນແບບຢ່າງນໍາ ໜ້າທີ່ດີໃຫ້ແກ່ ມະຫາຊົນ ແລະ ເຮັດສໍາເລັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຢ່າງມີປະສິດທິຜົນ ສູງ.

- ໜ່ວຍພັກຕ້ອງມີຄວາມປອດໃສເຂັ້ມແຂງໂດຍມີສະມາຊິກພັກແຂງກວມ 2/3 ຂຶ້ນໄປ, ບໍ່ມີ ສະມາຊິກພັກອ່ອນ, ກໍາມະການຄະນະໜ່ວຍພັກແຕ່ລະສະຫາຍເປັນສະມາຊິກພັກແຂງ.

- ດໍາເນີນຊີວິດໜ່ວຍພັກ ແລະ ເສຍເງິນສະຕິພັກແຕ່ລະເດືອນເປັນປົກກະຕິ, ມີເນື້ອໃນ ເລິກເຊິ່ງ ແທດເໝາະກັບສະພາບຕົວຈິງ, ກ້າຕໍານິຕົນເອງ ແລະ ຕໍານິເຊິ່ງກັນ ແລະ ກັນ, ຜູ້ເປັນຫົວ ໜ້າຕ້ອງເປັນ ແບບຢ່າງທີ່ດີໃຫ້ໝູ່ຄະນະແຕ່ລະສະຫາຍ, ໝູ່ໃນຄະນະຕ້ອງເຄົາລົບນັບຖືພາລະບົດ ບາດຂອງກັນ ແລະ ກັນ.

( ແບບແຜນການນໍາພາ: ໜ່ວຍພັກຕ້ອງປະຕິບັດຫຼັກການລວມສູນປະຊາທິປະໄຕຂອງພັກເຂັ້ມງວດ, ມີການແບ່ງງານໃຫ້ຄະນະພັກ ແລະ ສະມາຊິກພັກຈະແຈ້ງ; ເຄື່ອນໄຫວນໍາພາຢ່າງມີແຜນການ, ມີການ ຕິດຕາມ, ກວດກາຊຸກຍູ້ ແລະ ປະເມີນຜົນໃນການປະຕິບັດແຜນການທີ່ວາງ ອອກແຕ່ລະໄລຍະ.

- ປະສານສົມທົບ ການນໍາພາຂອງພັກ ກັບການເສີມຂະຫຍາຍພາລະບົດບາດ, ສິດໜ້າທີ່ ຂອງ ອໍານາດການປົກຄອງ, ຂອງຜູ້ອໍານວຍການ ແລະ ຂອງບັນດາອົງການຈັດຕັ້ງມະຫາຊົນຢ່າງ ກົມກຽວ.

- ປະຕິບັດລະບອບປະຊຸມ, ລະບອບຕິດຕາມກວດກາວຽກງານ, ລະບອບຮໍ່າຮຽນ ແລະ ລະບອບລາຍ ງານສ່ອງແສງເປັນປົກກະຕິ.

2. ສ້າງໜ່ວຍພັກເຂັ້ມແຂງຮູ້ນໍາພາຮອບດ້ານຕາມ 5 ເນື້ອໃນດັ່ງນີ້:

+ ຮູ້ນໍາພາທາງດ້ານການເມືອງ, ແນວຄິດຂອງສະມາຊິກພັກ, ພະນັກງານ, ລັດຖະກອນ ແລະ ປະຊາຊົນຊັ້ນຄົນຕ່າງໆ, ຈັດຕັ້ງຮໍ່າຮຽນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ຂອງລັດ ແລະ ສຶກ ສາອົບຮົມຊວນເຊື່ອໃຫ້ເຂົາເຈົ້າມີຈິດໃຈຮັກຊາດ, ເອກະລາດເປັນເຈົ້າຕົນເອງ, ມີຄວາມສາມັກຄີເປັນເອກະ ພາບພາຍໃນພັກ, ສາມັກຄີບັນດາເຜົ່າ, ມີຄຸນສົມບັດ, ສິນທໍາປະຕິວັດ, ຕ້ານແນວຄິດ ແລະ ປະກົດການຫຍໍ້ ທໍ້ໃນສັງຄົມ, ມີສະຕິລະວັງຕົວຕອບຕ້ານທຸກກົນອຸບາຍຂອງສັດຕູ. ມີສະຕິຕື່ນຕົວ ເຄົາລົບລະບຽບກົດໝາຍ, ເປັນເຈົ້າການປະຕິບັດແນວທາງ ແລະ ແຜນພັດ ທະນາເສດຖະກິດ- ສັງຄົມທີ່ພັກ - ລັດວາງອອກແຕ່ລະໄລຍະ ໃຫ້ເປັນຈິງ.

+ ສ້າງໃຫ້ອົງການ ເຫຼົ່ານັ້ນມີຄວາມປອດໃສ - ເຂັ້ມແຂງ ໃຫ້ເປັນກໍາລັງແຮງໃນການປະຕິ ບັດ ແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍຂອງລັດຢູ່ຂັ້ນພື້ນຖານ.

+ ຮູ້ຈັດຕັ້ງນໍາພາວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບໃຫ້ມີຄວາມໜັກແໜ້ນ - ເຂັ້ມ ແຂງ; ເຮັດໃຫ້ວຽກງານນີ້ກາຍເປັນຂອງທົ່ວປວງຊົນຮອບດ້ານ ພາຍໃຕ້ການນໍາພາຂອງພັກ ແລະ ກາຍເປັນ ສະຕິຄວາມຮັບຜິດຊອບຂອງທຸກຄົນ.

+ ຮູ້ປັບປຸງກໍ່ສ້າງພາຍໃນພັກ ແລະ ກໍ່ສ້າງພະນັກງານໃນຂອບເຂດຕົນຮັບຜິດຊອບ, ສ້າງເງື່ອນໄຂ ໃຫ້ມະຫາຊົນປະກອບສ່ວນເຂົ້າໃນການກວດກາ, ປັບປຸງກໍ່ສ້າງພັກ ຮັບປະກັນເຮັດໃຫ້ ແນວຄິດ ແລະ ການຈັດຕັ້ງ, ສ້າງມະຫາຊົນຜູ້ທີ່ກ້າວໜ້າຮັບເຂົ້າໃນຖັນແຖວຂອງພັກ.

<u>ຄໍາຖາມ</u> 28: ການຮ່ວມຊີວິດໜ່ວຍພັກທີ່ມີເນື້ອໃນ ແລະ ມີປະສິດທິຜົນ ແມ່ນແນວໃດ ?

ຕອບ: ການດຳເນີນຊີວິດໜ່ວຍພັກ ແມ່ນຮູບການໜຶ່ງຂອງວຽກງານແນວຄິດ ການຮ່ວມຊີວິດໜ່ວຍພັກ ທີ່ມີເນື້ອໃນ ແລະ ມີປະສິດທິຜົນ ກ່ອນອື່ນໝົດເລຂາໜ່ວຍພັກ ຕ້ອງໄດ້ສັງເກດຕີລາຄາສະພາບໜ່ວຍພັກຂອງຕົນວ່າ ໃນເດືອນນີ້ມີບັນຫາອັນໃດພົ້ນເດັ່ນນັບທັງດ້ານດີ ແລະ ດ້ານອ່ອນ, ຈາກນັ້ນ, ເລຂາໜ່ວຍພັກ ຕ້ອງໄດ້ວາງຈຸດສຸມທີ່ຈະຕ້ອງປະຕິບັດ ແລະ ແກ້ໄຂອັນໃດໃນ ຕໍ່ໜ້າສາກ່ອນ ແລ້ວຈຶ່ງຮຽກໂຮມສະມາຊິກພັກມາຮ່ວມຊີວິດໜ່ວຍ. ຕ້ອງເຮັດແນວນີ້ເປັນປະຈຳ ເພາະວ່າສະພາບການມີການຫັນປ່ຽນໄປເລື້ອຍໆ. ສະນັ້ນ, ການດຳເນີນຊີວິດໜ່ວຍພັກ ແຕ່ລະຄັ້ງ ຕ້ອງມີຈຸດເລັ່ງໃນການແກ້ໄຂ, ປຶກສາຫາລືວຽກງານ.

- ການຮ່ວມຊີວິດໜ່ວຍພັກທີ່ມີເນື້ອໃນ ແລະ ມີປະສິດທິຜົນສະແດງອອກດັ່ງນີ້:

1. ເນື້ອໃນການດຳເນີນຊີວິດໜ່ວຍພັກ ຕ້ອງມີລັກສະນະສຶກສາອົບຮົມແນວຄິດ, ລັກສະ ນະຕໍ່ສູ້, ສ້າງຄວາມເປັນເອກະພາບສູງ. ໝາຍຄວາມວ່າ ການດຳເນີນຊີວິດໜ່ວຍພັກແຕ່ລະເທື່ອຕ້ອງຍົກໃຫ້ເຫັນການນຳພາທີ່ດີ, ຖືກຕ້ອງ ແລະ ການນຳພາທີ່ຍັງອ່ອນ, ບໍ່ຖືກຕ້ອງເພື່ອປັບປຸງແກ້ ໄຂໃຫ້ດີຂຶ້ນ.

2. ການຮ່ວມຊີວິດໜ່ວຍພັກ ຕ້ອງມີລັກສະນະກວດກາຕົນເອງໃນການນຳພາປະຕິບັດ ໜ້າທີ່ວິຊາສະເພາະ ແລະ ວຽກງານອື່ນໆ ທີ່ໄດ້ຮັບມອບໝາຍ. ໝາຍຄວາມວ່າ ສະມາຊິກພັກຕ້ອງກວດກາຕົນເອງ, ຕິຊົມຕົນເອງວ່າໃນເດືອນຜ່ານມາ ຕົນເອງນຳພາມະຫາຊົນປະຕິບັດວຽກ ງານວິຊາສະເພາະຕາມການມອບໝາຍຂອງໜ່ວຍພັກແນວໃດ. ໃນການກວດກາຕົນເອງຕ້ອງຊອກ ໃຫ້ເຫັນດ້ານດີ ແລະ ດ້ານອ່ອນ, ສາເຫດທີ່ເຮັດໃຫ້ດີ-ໃຫ້ອ່ອນ ແລະ ຊອກວິທີການ, ມາດຕະການ ທີ່ມີປະສິດທິຜົນເພື່ອແກ້ໄຂ.

3. ການຮ່ວມຊີວິດໜ່ວຍພັກ ຕ້ອງມີລັກສະນະປຶກສາຫາລືວຽກງານ ແລະ ປຶກສາມາດ ຕະການຕ່າງໆເພື່ອນຳພາໃນຂັ້ນຕໍ່ໄປໃຫ້ມີປະສິດທິຜົນ, ຫຼີກເວັ້ນການຮ່ວມຊີວິດພັກແບບມາໂສກັນ ແລະ ເວົ້າວຽກແບບລວມໆບໍ່ມີຈຸດສຸມ. ພ້ອມກັນນັ້ນ ກໍບໍ່ມີການແບ່ງງານໃຫ້ສະມາຊິກພັກແຕ່ ລະຄົນນຳພາມະຫາຊົນຈັດຕັ້ງປະຕິບັດ.

4. ການຮ່ວມຊີວິດໜ່ວຍພັກ ຕ້ອງມີລັກສະນະປັບປຸງການຈັດຕັ້ງພັກໃຫ້ໜັກແໜ້ນເຂັ້ມ ແຂງ. ໝາຍຄວາມວ່າ ພັກຕ້ອງມີຄວາມສາມັກຄີເປັນເອກະພາບພາຍໃນ ແລະ ມີລະບຽບວິໄນໜັກ ແໜ້ນ, ເພີ່ມທະວີຄວາມສາມັກຄີມີລະບຽບວິໄນ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດລະບຽບຂອງພັກ ຢ່າງເດັດຂາດ ການດຳເນີນຊີວິດພັກຕ້ອງເປັນປົກກະຕິ, ມີເນື້ອໃນດີ ແລະ ເສຍເງິນສະຕິພັກເປັນ ປະຈຳ.

ຄຳຖາມ 29: ເຮັດວຽກງານການເມືອງ - ແນວຄິດແມ່ນເຮັດຫຍັງແດ່ ?

ຕອບ: ການເຮັດວຽກການເມືອງ - ແນວຄິດ ແມ່ນການຈັດຕັ້ງເຜີຍແຜ່, ຮ່ຳຮຽນແນວທາງ ແລະ ທັດສະນະຕ່າງໆ ຂອງພັກທີ່ວາງອອກໃນບົດລາຍງານການເມືອງຂອງກອງປະຊຸມໃຫຍ່ແຕ່ ລະຄັ້ງຂອງພັກ ແລະ ມະຕິຕ່າງໆຂອງສູນກາງພັກ, ລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆຂອງ ລັດວາງອອກຢ່າງຄົບຖ້ວນ, ເລິກເຊິ່ງ ແລະ ຖືກຕ້ອງເຮັດໃຫ້ພະນັກງານ, ສະມາຊິກພັກ, ປະຊາຊົນ ກຳໄດ້ ແລະ ຮູ້ນຳເອົາໄປຈັດຕັ້ງປະຕິບັດໃຫ້ເປັນຈິງ. ການເຮັດໃຫ້ວຽກງານການເມືອງ - ແນວຄິດ ຕ້ອງນຳໃຊ້ຮູບການຕ່າງໆ ຂອງວຽກງານແນວຄິດດັ່ງນີ້:

- ນຳໃຊ້ຮູບການໂຄສະນາປາຖະກະຖາດ້ວຍປາກ.

- ໂຄສະນາອະທິບາຍດ້ວຍຮູບການຜ່ານສື່ມວນຊົນເຊັ່ນ: ໜັງສືພິມ, ວິທະຍຸກະຈາຍສຽງ, ໂທລະພາບ, ໂທລະໂຄ່ງ ແລະ ອື່ນໆ.

- ນຳໃຊ້ຮູບການສິລະປະວັດທະນະທຳມະຫາຊົນຄື: ເນື້ອຮ້ອງທຳນອງເພງ, ບົດກະວີ, ບົດ ປະພັນ, ບົດລະຄອນ ແລະ ອື່ນໆ ເພື່ອສຶກສາອົບຮົມການເມືອງ - ແນວຄິດ ແລະ ຄຸນສົມບັດສິນ ທຳປະຕິວັດໃຫ້ທົ່ວສັງຄົມ.

- ນຳໃຊ້ຮູບການສະຫຼຸບຕີລາຄາວຽກງານຕ່າງໆປະຈຳເດືອນ, ປະຈຳໄຕມາດ ແລະ ປະ ຊຸມຈຸໜ່ວຍຕ່າງໆ ເພື່ອອົບຮົມແນວຄິດ. ສະນັ້ນ, ການປະຊຸມແຕ່ລະເທື່ອຕ້ອງມີເນື້ອໃນສຶກສາອົບ ຮົມແນວຄິດໃຫ້ດີ.

- ໃຊ້ຮູບການຈັດຕັ້ງການຮຽນທິດສະດີການເມືອງ, ແນວທາງນະໂຍບາຍເປັນຊຸດໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນໃນເປົ້າໝາຍຕ່າງໆ ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານທິດສະດີການເມືອງ ແລະ ການກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນຳໄປຈັດຕັ້ງປະຕິບັດຖືກຕ້ອງ. ນອກຈາກນີ້ພວກເຮົາຍັງຕ້ອງນຳໃຊ້ການໂຄສະນາວຽກດີຄົນເດັ່ນ, ຕົວແບບຕ່າງໆ ທີ່ດີໃຫ້ຄົນອື່ນ, ບ່ອນອື່ນຮ່ຳຮຽນ ແລະ ປະຕິບັດຕາມ.

- ໃຊ້ຮູບການດຳເນີນຊີວິດການເມືອງ ເພື່ອເຊື່ອມຊຶມແນວທາງຂອງພັກ ແລະ ສຳຫຼວດ ກວດກາການປະຕິບັດແນວທາງຂອງພັກ, ກົດໝາຍຂອງລັດ ແລະ ການປະຕິບັດວຽກງານວິຊາສະເພາະຂອງແຕ່ລະຄົນ.

( ເນື້ອໃນຂອງວຽກງານການເມືອງ-ແນວຄິດມີດັ່ງນີ້:

- ສຶກສາອົບຮົມບັນດາຫຼັກມູນທິດສະດີມາກ-ເລນິນ ແລະ ແນວທາງນໂຍບາຍຂອງພັກເຮົາ, ເຜີຍແຜ່ບົດຮຽນອັນປະເສີດຂອງບັນດາປະເທດສັງຄົມນິຍົມໃຫ້ອ້າຍນ້ອງພະນັກງານສະມາຊິກພັກ ກໍຄືປະຊາຊົນຊັ້ນຄົນຕ່າງໆ ໃຫ້ມີພື້ນຖານທິດສະດີ ແລະ ພຶດຕິກຳຢ່າງໜັກແໜ້ນ, ອົບຮົມກ່ຽວກັບລະບອບປະຊາທິປະໄຕປະຊາຊົນ, ກ່ຽວກັບພື້ນຖານເສດຖະກິດສິນຄ້າຕາມກົນໄກຕະ ຫຼາດພາຍໃຕ້ການນຳພາຂອງພັກ, ກ່ຽວກັບການຄຸ້ມຄອງຂອງລັດ, ການເສີມຂະຫຍາຍຈິດໃຈເປັນເຈົ້າຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ອື່ນໆ.

- ສຶກສາອົບຮົມມູນເຊື້ອປະຫວັດສາດຂອງພັກ, ຂອງການປະຕິວັດ ແລະ ຂອງຊາດ, ອົບຮົມພູມສາດ , ອົບຮົມວັດທະນະທຳຂອງຊາດ ແລະ ຂອງເຜົ່າ, ຄຸນສົມບັດຂອງຄົນໃໝ່ສັງຄົມນິຍົມ.

- ອົບຮົມຄວາມຮູ້ທາງວິທະຍາສາດສັງຄົມ, ຄວາມຮູ້ດ້ານເສດຖະກິດ-ສັງຄົມ, ການອະນາໄມກັນພະຍາດ, ຍົກສູງກຳລັງເຫື່ອແຮງ, ມາລະຍາດສັງຄົມ, ການເຄື່ອນໄຫວໃນຄອບຄົວ ແລະ ສັງຄົມ.

- ສຶກສາອົບຮົມໃຫ້ມີນ້ຳໃຈຮັກຊາດຮັກລະບອບໃໝ່ ໃຫ້ມີອຸດົມການສັງຄົມນິຍົມໜັກແໜ້ນ, ສູ້ຊົນບຸກບືນພັດທະນາສ້າງສາປະເທດຊາດ ດ້ວຍສະຕິປັນຍາ, ດ້ວຍຈິດໃຈເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ.

- ສຶກສາອົບຮົມໃຫ້ມີສະຕິເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຍົກສູງຄວາມຮັບຜິດຊອບ.

- ສຶກສາອົບຮົມໃຫ້ມີທັດສະນະຫຼັກໝັ້ນມິດ-ສັດຕູຢ່າງຈະແຈ້ງ, ມີສະຕິລະວັງຕົວຕໍ່ກົນອຸບາຍທັນປ່ຽນໂດຍສັນຕິຂອງສັດຕູ ແລະ ເດັດດ່ຽວຕໍ່ສູ້ທັບມ້າງກົນອຸບາຍຂອງສັດຕູເປັນປະຈຳ. ຕ້ານແນວຄິດສັນຕິ

ພາບແບບບໍ່ມີມິດ, ບໍ່ມີສັດຕູ ແລະ ຍົກສູງຄວາມຈົງຮັກພັກດີ, ຄວາມຫ້າວຫັນຝຶກຝົນ, ຢຶດໝັ້ນຄຸນສົມບັດ ແລະ ແບບແຜນດຳລົງຊີວິດອັນດີງາມ.

- ສຶກສາອົບຮົມສະຕິຕື່ນຕົວຕໍ່ການຈັດຕັ້ງ, ລະບຽບກົດໝາຍ, ຮູ້ ແລະ ປະຕິບັດພັນທະ ແລະ ຜົນປະໂຫຍດຂອງພົນລະເມືອງເປັນຢ່າງດີ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ.

- ສຶກສາອົບຮົມໃຫ້ມີຄວາມຕັ້ງໃຈບໍລິສຸດຕໍ່ປະເທດຊາດ, ຕໍ່ພັກ, ຕໍ່ອຸດົມການສັງຄົມນິຍົມ, ຄວາມກະຕັນຍູຮູ້ບຸນຄຸນຕໍ່ປະຊາຊົນ, ສ້າງແນວຄິດລວມໝູ່ ແລະ ຕ້ານແນວຄິດເອກະຊົນ, ຮັກການອອກແຮງງານ, ຕ້ານຄວາມຂີ້ຄ້ານມັກງ່າຍ, ມີນ້ຳໃຈບຸກບືນຮ່ຳຮຽນ, ມັກຄວາມກ້າວໜ້າ.

- ສຶກສາອົບຮົມໃຫ້ມີນ້ຳໃຈປະຢັດມັດທະຍັດ, ດຸໝັ່ນຂະຫຍັນພຽນ, ປອດໃສຂາວສະອາດ ແລະ ອື່ນໆ.

<u>ຄຳຖາມ</u> 30: ວຽກງານຈັດຕັ້ງ, ວຽກງານພະນັກງານແມ່ນວຽກແນວໃດ ແລະ ເຮັດຫຍັງແດ່ ?

<u>ຕອບ</u>: ວຽກງານຈັດຕັ້ງແມ່ນວຽກກ່ຽວກົງຈັກການຈັດຕັ້ງ, ແມ່ນວຽກທີ່ເຮັດກັບຄົນ, ແມ່ນການບັນຈຸຊັບຊ້ອນຈັດວາງຄົນເຂົ້າໃສ່ວຽກງານຕາມຄວາມຮູ້-ຄວາມສາມາດ ແລະ ພອນສະຫວັນຂອງແຕ່ລະຄົນ ເພື່ອເຮັດໃຫ້ວຽກງານຕ່າງໆມີປະສິດທິຜົນ ວຽກລະອຽດຂອງວຽກງານຈັດຕັ້ງມີດັ່ງນີ້:

1. ຄົ້ນຄວ້າກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ສິດຂອງແຕ່ລະກົງຈັກການຈັດ ຕັ້ງ. ການກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ສິດຂອງກົງຈັກການຈັດຕັ້ງ ໂດຍເລີ່ມຈາກໜ້າທີ່ການເມືອງ, ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານ.

2. ຄົ້ນຄວ້າກ່ຽວກັບໂຄງປະກອບການຈັດຕັ້ງ.

ພາຍຫຼັງສຳເລັດການກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ສິດຂອງອົງການຈັດຕັ້ງແລ້ວ ຕ້ອງກຳນົດໂຄງປະກອບກົງຈັກການຈັດຕັ້ງໃຫ້ສົມເຫດ, ສົມຜົນ ແລະ ຮັບປະກັນຄວາມສັກສິດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ບົນພື້ນຖານບໍລິມາດວຽກງານຕົວຈິງ, ຂອບເຂດຄວາມຮັບ ຜິດຊອບ, ທີ່ຕັ້ງຂອງຂະແໜງການ, ຈຸດພິເສດຂອງທ້ອງຖິ່ນ.

- ຄົ້ນຄວ້າກຳນົດສາຍກ່ຽວພັນລະຫວ່າງການຈັດຕັ້ງທີ່ນອນຢູ່ໃນອົງປະກອບຂອງກົງຈັກໃຫ້ຈະແຈ້ງຕື່ມ ເພື່ອຫຼີກເວັ້ນການຊໍ້າຊ້ອນ ແລະ ກ້າວກ່າຍໜ້າທີ່ຊຶ່ງກັນ ແລະ ກັນ.

- ຄົ້ນຄວ້າກຳນົດຕຳແໜ່ງງານຕ່າງໆ ຊຶ່ງນອນຢູ່ໃນແຕ່ລະການຈັດຕັ້ງໃຫ້ເໝາະສົມ, ແທດເໝາະກັບຄວາມອາດສາມາດຕົວຈິງ ຂອງໜ້າທີ່ວຽກງານໃນຂົງເຂດນັ້ນໆ.

3. ບັນຈຸ, ສັບຊ້ອນ, ຈັດວາງກຳລັງພະນັກງານເຂົ້າໃສແຕ່ລະຕຳແໜ່ງງານທີ່ໄດ້ກຳນົດໄວ້ ນັ້ນ. ການບັນຈຸ, ຈັດວາງກຳລັງພະນັກງານເຂົ້າຮັບຜິດຊອບໃນແຕ່ລະຕຳແໜ່ງງານນັ້ນມີຄວາມສຳ ຄັນຕໍ່ຜົນສຳເລັດໜ້າທີ່ການເມືອງຂອງແຕ່ລະການຈັດຕັ້ງ. ດັ່ງນັ້ນ, ເພື່ອຮັບປະກັນຫຼັກການກະທັດຮັດ, ສົມເຫດ, ສົມຜົນ ແລະ ມີປະສິດທິພາບຕ້ອງເອົາໃຈໃສ່ບາງບັນຫາດັ່ງນີ້:

- ໃນແຕ່ລະຕຳແໜ່ງງານທີ່ສັງກັດຢູ່ໃນກົມກອງ, ໜ່ວຍງານ, ໃນອົງປະກອບຂອງກົງຈັກການຈັດຕັ້ງໜຶ່ງໆ ຕ້ອງກຳນົດສິດ, ໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງແຕ່ລະຕຳແໜ່ງ ງານໃຫ້ຈະແຈ້ງ.

- ການສັບຊ້ອນ, ຈັດວາງພະນັກງານເຂົ້າໃສ່ແຕ່ລະຕຳແໜ່ງງານຕ້ອງຮັບປະກັນມາດຖານ ເງື່ອນໄຂລວມ ແລະ ມາດຖານເງື່ອນໄຂສະເພາະຂອງແຕ່ລະຕຳແໜ່ງງານ; ສິ່ງສຳຄັນຕ້ອງຮັບປະ ກັນໃຫ້ແທດເໝາະກັບວຽກ, ກັບຄົນ ແລະ ຖືກກັບລະດັບຄວາມຮູ້, ຄວາມສາມາດຕົວຈິງ.

4. ກຳນົດລະບອບແບບແຜນວິທີເຮັດວຽກ.

ການກຳນົດລະບອບແບບແຜນວິທີເຮັດວຽກ ແມ່ນຄວາມຈຳເປັນສຳລັບພະນັກງານ, ອົງ ການ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານທັງໝົດເປັນລະບົບລະບຽບ ແລະ ມີປະສິດທິພາບສູງ, ໃນການກຳນົດວິທີເຮັດວຽກຕ້ອງເອົາໃຈໃສ່ບາງບັນຫາດັ່ງນີ້:

- ຕ້ອງອີງໃສ່ແນວທາງແຜນນະໂຍບາຍຂອງພັກ ທີ່ກຳນົດອອກກ່ຽວກັບຂະແໜງການຂອງຕົນ ເພື່ອກຳນົດແຜນຍຸດທະສາດ, ແຜນການ, ໂຄງການຕ່າງໆຂອງກະຊວງ, ອົງການທຽບເທົ່າ.

- ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ແລະ ລະບອບຫົວໜ້າດຽວຢ່າງເຂັ້ມງວດ ທຸກບັນຫາໃຫຍ່ລ້ວນແຕ່ຕ້ອງປຶກສາຫາລືກັນໃນໝູ່ຄະ ນະໃຫ້ເປັນເອກະພາບ, ຕົກລົງເປັນມະຕິແລ້ວແບ່ງງານໃຫ້ແຕ່ລະຄົນຮັບຜິດຊອບ; ຈັດຕັ້ງປະຕິບັດ, ແຕ່ລະຄົນຕ້ອງມີຄວາມຮັບຜິດຊອບຜົນໄດ້ ແລະ ຜົນເສຍຂອງວຽກງານຕໍ່ຂັ້ນເທິງຂອງຕົນ.

- ປະຕິບັດລະບອບປະຊຸມ ເພື່ອສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ວາງວຽກງານໃນຕໍ່ໜ້າ; ບັນດາເນື້ອໃນກອງປະຊຸມແຕ່ລະຄັ້ງຕ້ອງໄດ້ສ່ອງແສງລາຍງານໃຫ້ຂັ້ນເທິງຂອງຕົນເປັນປົກກະຕິ. ໃນກໍລະນີມີວຽກຈຳເປັນ ແລະ ຮີບດ່ວນ, ຄະນະນຳຄວນຈັດກອງປະຊຸມວິສາມັນຂຶ້ນໄດ້ ເພື່ອພິຈາລະນາແກ້ໄຂບັນຫາຕ່າງໆ.

- ກຳນົດລະບຽບການປະສານງານຢູ່ພາຍໃນ ແລະ ພາຍນອກສຳນັກງານຂອງຕົນນັບທັງສາຍຕັ້ງ ແລະ ສາຍຂວາງ ເພື່ອເຮັດໃຫ້ວຽກງານທີ່ມີສ່ວນກ່ຽວຂ້ອງກັນ ຖືກຈັດຕັ້ງປະຕິບັດເປັນຢ່າງດີ, ຫຼີກລ້ຽງສະພາບເຮັດຜໍໃຜ, ຜໍລາວ.

( ວຽກງານພະນັກງານ.

- ພະນັກງານແມ່ນກົກຂອງທຸກວຽກງານ, ພະນັກງານແມ່ນກ້ອນທຶນອັນປະເສີດ, ແມ່ນຜູ້ປະຕິບັດໜ້າທີ່ຮັບໃຊ້ຂອງພັກ-ລັດ ແລະ ປະຊາຊົນ, ເປັນຜູ້ນຳເອົາແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດໄປຈັດຕັ້ງປະຕິບັດໃຫ້ເປັນຈິງ. ດັ່ງນັ້ນ, ວຽກງານພະນັກງານແມ່ນເຮັດບາງວຽກດັ່ງນີ້:

1. ກໍ່ສ້າງພະນັກງານທຸກປະເພດ, ທຸກລະດັບ ສຳລັບທຸກຂົງເຂດວຽກງານ.

2. ຄົ້ນຄ້ວາສ້າງແຜນກຳນົດ, ວິທີການ, ມາດຕະການໃນການກໍ່ສ້າງບຳລຸງພະນັກງານໃນແຕ່ລະປະເພດ, ແຕ່ລະລະດັບເປັນແຕ່ລະໄລຍະທັງໄລຍະສັ້ນ, ໄລຍະຍາວ ແລະ ແຜນຍຸດທະສາດ.

3. ກໍ່ສ້າງ ແລະ ບຳລຸງ ຍົກລະດັບພະນັກງານຕິດພັນກັບການນຳໃຊ້ພະນັກງານໃຫ້ຖືກກັບຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນ ຂອງເຂົາເຈົ້າເຂົ້າໃນການປະຕິບັດໜ້າທີ່; ໝາຍຄວາມວ່າສ້າງເຂົາເຈົ້າເຂົ້າໄປຕາມແຜນການ, ຄວາມຕ້ອງການຂອງວຽກງານ ແລະ ໃຊ້ເຂົາເຈົ້າໃຫ້ເໝາະກັບຄວາມຮູ້, ຄວາມສາມາດ, ວິຊາສະເພາະ ແລະ ພອນສະຫວັນຕົວຈິງຂອງແຕ່ລະຄົນ.

4. ຄົ້ນຄ້ວາວິທີການ, ຮູບການໃນການຈັດແບ່ງທຶນ ແລະ ຄັດເລືອກເປົ້າໝາຍເພື່ອກໍ່ສ້າງ ບຳລຸງພະນັກງານ.

5. ຕິດຕາມຊຸກຍູ້ປະເມີນຜົນກ່ຽວກັບວຽກງານກໍ່ສ້າງ - ບຳລຸງພະນັກງານ.

6. ສັບຊ້ອນພະນັກງານໃຫ້ແທດເໝາະກັບຄວາມຮູ້, ຄວາມສາມາດ, ວິຊາສະເພາະ ແລະ ພອນສະຫວັນ; ກຳນົດແຈ້ງວຽກທີ່ຈະໃຫ້ເຮັດ.

7. ຍົກລະດັບຄວາມສາມາດ ກ່ຽວກັບວຽກງານຕົວຈິງໃຫ້ສູງຂຶ້ນ, ປະຕິບັດລະບອບການເຄື່ອນຍ້າຍບ່ອນປະຈຳການພະນັກງານ ແລະ ທົດສອບພະນັກງານໃນຂະບວນການວຽກງານຕົວຈິງ.

8. ແບ່ງຄວາມຮັບຜິດຊອບ, ຄຸ້ມຄອງພະນັກງານໃຫ້ລະອຽດຈະແຈ້ງ.

9. ຕີລາຄາຜົນງານການເຄື່ອນໄຫວຂອງພະນັກງານໄດ້ຢ່າງຊັດເຈນ ແລະ ພາວະວິໄສ.

<u>ຄຳຖາມ </u>31: ເຮັດວຽກງານກວດກາແມ່ນວຽກງານແນວໃດ ແລະ ເຮັດຫຍັງແດ່ ?

<u>ຕອບ</u>: ວຽກງານກວດກາແມ່ນການຊອກໃຫ້ເຫັນຈຸດດີ, ຈຸດອ່ອນໃນການຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ-ແຜນພັດທະນາເສດຖະກິດ-ສັງຄົມຂອງພະນັກງານ, ການຈັດຕັ້ງພັກ, ສະມາຊິກພັກແຕ່ລະຄົນເພື່ອປຸກລະດົມຂະບວນການໃຫ້ທັນເວລາ, ສາມາດເສີມຂະຫຍາຍດ້ານດີ, ດ້ານຕັ້ງໜ້າຂອງຂະບວນການ, ສະກັດກັ້ນ, ຈຳກັດ ແລະ ແກ້ໄຂບັນຫາດ້ານທີ່ຍັງອ່ອນ, ຊ່ວຍໃຫ້ການຈັດຕັ້ງພັກ, ສະມາຊິກພັກເຮັດສຳເລັດໜ້າທີ່ ທີ່ໄດ້ມອບໝາຍ; ຊອກເຫັນສະມາຊິກພັກຜູ້ທີ່ສວຍໂອກາດ, ເສຍທາດຂາດຄຸນ, ຜູ້ທີ່ບໍ່ມີມາດຖານຄົບຖ້ວນເພື່ອເອົາອອກຈາກພັກເຮັດໃຫ້ການຈັດຕັ້ງພັກຂາວສະອາດ, ເຂັ້ມແຂງ. ການເຮັດວຽກງານກວດກາດີຈຶ່ງຊອກເຫັນພະນັກງານຜູ້ທີ່ດີ, ມີຄວາມສາມາດ, ມີຄຸນສົມບັດ. ສະນັ້ນ, ວຽກງານກວດກາຈຶ່ງມີຄຸນປະໂຫຍດຕໍ່ການຍົກສູງບົດບາດການນຳພາຂອງພັກ ແລະ ເພີ່ມທະວີກຳລັງແຮງສູ້ຮົບຂອງການຈັດຕັ້ງພັກ ແລະ ຖັນແຖວສະມາຊິກພັກ.

( ເຮັດວຽກງານກວດກາແມ່ນເຮັດບາງວຽກດັ່ງນີ້:

1. <u>ພັກນຳພາຕໍ່ວຽກງານກວດກາ.</u>

- ວຽກງານກວດກາແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ດັ່ງນັ້ນ ຄະນະພັກທຸກຂັ້ນຕ້ອງມີຄວາມຮັບຜິດຊອບ ແລະ ນຳພາໂດຍກົງຕໍ່ວຽກງານກວດກາ, ຖືວ່າວຽກ ງານກວດກາເປັນໜ້າວຽກທີ່ຕ້ອງເຮັດເປັນປະຈຳຂອງຕົນ, ໂດຍປະຕິບັດຕາມທິດນຳທີ່ວ່າ: “ບໍ່ມີການກວດກາກໍບໍ່ມີການນຳພາ”.

- ການກວດກາຈະແມ່ນໃນຮູບການໃດ, ຢູ່ບ່ອນໃດ, ເປົ້າໝາຍໃດກໍຕ້ອງອີງໃສ່ແນວທາງນະໂຍບາຍຂອງພັກ, ລະບຽບຂອງພັກ ແລະ ກົດໝາຍຂອງລັດ; ກຳລັງແຮງທີ່ເປັນແກ່ນສານຫຼັກແຫຼ່ງນຳພາໃນການກວດກາ, ການແກ້ໄຂຜົນຂອງການກວດກາກໍແມ່ນສະມາຊິກພັກ, ໜ່ວຍພັກ ແລະ ຄະນະພັກນັ້ນເອງ.

2. <u>ການກວດກາຕ້ອງຮອບດ້ານ, ຄົບຊຸດ, ເລິກເຊິ່ງເຖິງຖອງ</u>.

- ກວດກາຮອບດ້ານ ແມ່ນການດຳເນີນກວດກາໃນທຸກຂົງເຂດວຽກງານ, ກວດກາທຸກກົງຈັກການຈັດຕັ້ງຂອງພັກ, ລັດ, ມະຫາຊົນ, ແນວລາວສ້າງຊາດຕະຫຼອດຮອດການຈັດຕັ້ງສັງຄົມອື່ນໆ, ກວດກາແຕ່ລຸ່ມ

ຂັ້ນເທິງ, ກວດກາແຕ່ເທິງລົງລຸ່ມ, ກວດກາໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ ເພື່ອສົ່ງເສີມ, ກວດກາໃຫ້ເຫັນດ້ານອ່ອນ, ດ້ານຫຍໍ້ທໍ້ເພື່ອແກ້ໄຂ.

- ຄົບຊຸດ: ໝາຍຄວາມວ່າໃນການກວດກາແຕ່ລະເປົ້າໝາຍນັ້ນຈະຕ້ອງປະກອບມີຫຼາຍ ພາກສ່ວນທີ່ມີການກ່ຽວພັນເຖິງວຽກງານທີ່ຈະຕ້ອງໄດ້ກວດກາ, ພົວພັນເຖິງພາກສ່ວນທີ່ມີຄວາມ ຮັບຜິດຊອບໃນການແກ້ໄຂຜົນຂອງການກວດກາ.

- ເລິກເຊິ່ງເຖິງຖອງ: ໝາຍຄວາມວ່າຕ້ອງກວດກາໃຫ້ລະອຽດ, ຖີ່ຖ້ວນ, ຊອກໃຫ້ເຫັນອັນໃດຜິດ, ອັນໃດຖືກ, ເຫັນໄດ້ຜູ້ດີມີຜົນງານ, ເຫັນໄດ້ຜູ້ອ່ອນເສຍຫາດຂາດຄຸນ.

3. <u>ລັກສະນະມະຫາຊົນ</u>.

- ການກວດກາແມ່ນໜ້າທີ່ຂອງໝົດທຸກຄົນໃນສັງຄົມທີ່ຈະຕ້ອງເຂົ້າຮ່ວມ. ມີການກວດກາເຊິ່ງກັນ ແລະ ກັນ.

- ການກວດກາທີ່ມີຄຸນນະພາບ ຕ້ອງປຸກລະດົມໃຫ້ໄດ້ກຳລັງແຮງສັງລວມໃນສັງຄົມ.

- ມະຫາຊົນເປັນກຳລັງຫຼວງທີ່ມີພັນຫູ ໝື່ນຕາ, ມະຫາຊົນເປັນຜູ້ຮູ້, ເປັນ ຜູ້ເຫັນ ແລະ ເປັນຜູ້ຮ່ວມກວດກາຈຶ່ງມີປະສິດທິຜົນດີ.

4. <u>ກວດກາຕ້ອງຊັດເຈນ, ຖືກຕ້ອງ ແລະ ພາວະວິໄສ</u>.

- ເວລາດຳເນີນການກວດກາຕ້ອງຄົ້ນຄວ້າ, ຕົກລົງບັນຫາໃຫ້ຊັດເຈນ, ຖືກຕາມຄວາມເປັນຈິງຂອງເຫດການ, ສອດຄ່ອງກັບແນວທາງ, ກົດລະບຽບຂອງພັກ, ກົດໝາຍຂອງລັດ.

- ການສະຫຼຸບຕີລາຄາຕ້ອງໃຫ້ຖືກຕ້ອງ, ເປັນທຳ, ມີຂໍ້ມູນ ແລະ ຫຼັກຖານຢັ້ງຢືນ, ການກຳ ນົດທິດທາງແກ້ໄຂຕ້ອງແທດເໝາະ, ສົມເຫດ, ສົມຜົນ.

- ການແກ້ໄຂຕ້ອງມີຄວາມເດັດຂາດ, ບໍ່ລຳອຽງ, ບໍ່ພ້ອມພຸ້ນພ້ອມພີ້, ບໍ່ມະລຸມມະລ້ອຍເຫັນໃຈກັນ, ຕ້ອງປະຕິບັດໃຫ້ຖືກຕ້ອງຕາມການຕົກລົງ, ຖືກຕາມການຊີ້ນຳຂອງຂັ້ນເທິງ.

5. <u>ການກວດກາຕ້ອງເປີດເຜີຍ</u>.

- ການກວດກາຕ້ອງດຳເນີນຢ່າງເປີດເຜີຍ, ຕ້ອງເຮັດໃຫ້ມະຫາຊົນໄດ້ຮັບຮູ້, ໄດ້ເຊື່ອມຊຶມເຂົ້າໃຈ, ໄດ້ເຂົ້າຮ່ວມການປະກອບຄວາມເຫັນຕໍ່ຈຸດປະສົງ, ເນື້ອໃນ ແລະ ຂັ້ນຕອນໃນການປະຕິ ບັດແຜນການກວດກາ.

- ພາຍຫຼັງສຳເລັດການກວດກາເປົ້າໝາຍໃດໜຶ່ງ ຕ້ອງໄດ້ເຜີຍແຜ່ຜົນຂອງການກວດກາໃຫ້ມະຫາຊົນ, ພະນັກງານ, ສະມາຊິກພັກຢູ່ໃນເປົ້າໝາຍ ຫຼື ນອກເປົ້າໝາຍການກວດກາຊາບທັງ ດ້ານດີຕັ້ງໜ້າ, ດ້ານອ່ອນຫຍໍ້ທໍ້ ພ້ອມທັງວິທີການປັບປຸງແກ້ໄຂຕໍ່ໜ້າ ເພື່ອເປັນການສຶກສາອົບຮົມດ້ານການເມືອງ - ແນວຄິດ, ເປັນການບອກຂ່າວກ່າວເຕືອນໃຫ້ທຸກຄົນມີສະຕິເປັນເຈົ້າການ.

<u>ຄຳຖາມ</u> 32: ການຄຸ້ມຄອງ- ປ້ອງກັນພັກ ແມ່ນແນວໃດ ແລະ ຕ້ອງເຮັດຫຍັງແດ່ ?

<u>ຕອບ</u>: ຄຸ້ມຄອງພັກຕ້ອງເຮັດບາງວຽກດັ່ງນີ້:

1. ຕ້ອງຈັດຕັ້ງເຜີຍແຜ່ແນະນຳລະບຽບການ ແລະ ວິທີການຕ່າງໆໃນການຄຸ້ມຄອງສະມາຊິກພັກໃຫ້ບັນດາໜ່ວຍພັກທີ່ຂຶ້ນກັບຕົນ.

2. ຄຸ້ມຄອງໂດຍກົງປື້ມຊີວະປະຫັວດ, ປື້ມສະມຸດບັນຊີ ແລະ ສະຖິຕິສະມາຊິກພັກ, ປື້ມຕິດຕາມການໂຍກຍ້າຍ ແລະ ສຳນວນອື່ນໆ ຂອງສະມາຊິກພັກໃນທົ່ວອົງຄະນະພັກ, ກົມກອງ ຫຼື ພາກສ່ວນທີ່ຂັ້ນເທິງແບ່ງຂັ້ນມອບໝາຍໃຫ້ຄຸ້ມຄອງ.

3. ເກັບມ້ຽນສຳເນົາ ຫຼື ທຳລາຍຖິ້ມເອກະສານຕ່າງໆ ຂອງສະມາຊິກພັກ ທີ່ເຫັນວ່າບໍ່ຈຳເປັນຮັກສາໄວ້.

4. ຄຸ້ມຄອງ ແລະ ຕິດຕາມການໂຍກຍ້າຍຮ່ວມຊີວິດພັກ, ຕົກລົງສັບຊ້ອນຈັດວາງສະມາຊິກພັກ, ອະນຸມັດຮັບເອົາມະຫາຊົນກ້າວໜ້າເຂົ້າພັກ ແລະ ຕົກລົງຍ້ອງຍໍ, ປະຕິບັດວິໄນຕໍ່ສະມາຊິກພັກ ຕາມລະບຽບການທີ່ໄດ້ລະບຸໄວ້ໃນກົດລະບຽບຂອງພັກ.

5. ເປັນຜູ້ຈັດຕັ້ງການເປີດຊຸດບຳລຸງຍົກລະດັບທາງດ້ານການເມືອງ-ແນວຄິດ ແລະ ໜ້າທີ່ວຽກງານໃຫ້ແກ່ສະມາຊິກພັກໃນທົ່ວອົງຄະນະພັກຂອງຕົນ.

6. ມີຄວາມຮັບຜິດຊອບເກັບກຳຂໍ້ມູນ, ສະຫຼຸບຕີລາຄາການຈັດຕັ້ງພັກ ແລະ ສະມາຊິກພັກ ຂອງຕົນ ຫຼື ກົມກອງຕົນເອງ ແລະ ສ່ອງແສງລາຍງານໃຫ້ຄະນະພັກຂັ້ນເທິງເປັນປະຈຳ.

7. ຊ່ວຍຄຸ້ມຄອງສະມາຊິກພັກ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂັ້ນເທິງທີ່ເຄື່ອນໄຫວວຽກງານຢູ່ອົງຄະນະພັກ ແລະ ກົມກອງຕົນເອງ.

( <u>ວຽກງານປ້ອງກັນພັກມີດັ່ງນີ້:</u>

1. ເອົາໃຈໃສ່ຄົ້ນຄ້ວາເຊື່ອມຊືມລັດທິມາກ-ເລນິນ, ແນວທາງນະໂຍບາຍຂອງພັກ ແນໃສ່ຍົກສູງສະຕິລະວັງຕົວປະຕິວັດ ແລະ ຍົກສູງບົດບາດເປັນແກນນຳຂອງຄະນະພັກ ເພື່ອປົກປັກຮັກສາພັກ ແລະ ຮັກສາໝາກຜົນຂອງການປະຕິວັດ. ດຳເນີນການສຶກສາອົບຮົມດ້ານການເມືອງ-ແນວຄິດ ຕິດພັນກັບການສຳຫຼວດກວດກາ, ຕຳນິຕົນເອງ ແລະ ຕຳນິຢ່າງເປັນປະຈຳແນໃສ່ສະກັດກັ້ນ ແລະ ຕ້ານບັນດາປະກົດການຫຍໍ້ທໍ້ ແລະ ບັນດາແນວຄິດທັດສະນະທີ່ຜິດເຂວຈາກແນວທາງການເມືອງຂອງພັກຢ່າງສຸດຂີດ; ເພີ່ມທະວີຄວາມສາມັກຄີເປັນເອກະພາບຢູ່ພາຍໃນພັກ, ສ້າງຄວາມເປັນເອກະພາບທາງດ້ານແນວຄິດ, ຄວາມຮັບຮູ້ ແລະ ການກະທຳຕົວຈິງບົນພື້ນຖານແນວທາງນະໂຍບາຍຂອງພັກ.

2. ຄະນະພັກແຕ່ລະຂັ້ນ ຕ້ອງປັບປຸງແບບແຜນວິທີເຮັດວຽກ, ແບບແຜນວິທີນຳພາຂອງຄະນະພັກໃຫ້ຖືກຕ້ອງ, ປະຕິບັດຫຼັກການລວມສູນປະຊາທິປະໄຕ ຢ່າງເຂັ້ມງວດນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ. ການຕົກລົງ, ຕັດສິນບັນຫາຕ່າງໆ ທີ່ມີລັກສະນະຍຸດທະສາດ ແລະ ບັນຫາພະນັກງານ ຕ້ອງຕົກລົງເປັນໝູ່ຄະນະ, ຕ້ານທັດສະນະແບບແຜນອາດຍາສິດຜູ້ດຽວ ແລະ ບັນດາທ່າອ່ຽງກໍ່ພັກແຍກພວກ ຈະກ້າວໄປເຖິງການມ້າງເພຄວາມສາມັກຄີພາຍໃນຄະນະ ພັກດ້ວຍກັນ.

3. ປະຕິບັດລະບອບປະຊຸມ, ລາຍງານວຽກຕາມລະບຽບການ, ກວດກາວຽກງານທີ່ໄດ້ມອບໝາຍໃຫ້ແຕ່ລະສະຫາຍເປັນປົກກະຕິ, ດຳເນີນການຕິຊົມຕົນເອງ ແລະ ຕິຊົມກັນບົນພື້ນຖານໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍດ້ວຍຄວາມຈິງໃຈ, ສຳຫຼວດກວດກາ ຄວາມຮັບຜິດຊອບ, ການເປັນແບບຢ່າງນຳໜ້າຂອງແຕ່ລະສະຫາຍໃນຄະນະພັກ ໃນດ້ານວຽກງານ, ດ້ານຄຸນສົມບັດ; ສ້າງເງື່ອນໄຂໃຫ້ພະນັກງານ, ສະມາຊິກພັກ ແລະ ມະຫາຊົນໄດ້ດຳເນີນການຕິຊົມຄະນະພັກ.

( ສຳລັບສະມາຊິກພັກ, ພະນັກງານເອງ, ຢາກປ້ອງກັນພັກກໍຕ້ອງເອົາໃຈໃສ່ຮ່ຳຮຽນແນວທາງ, ແຜນນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ ແລະ ເອກະສານຕ່າງໆ ຂອງຄະນະພັກຂັ້ນເທິງແນໃສ່ຍົກສູງຄວາມຮູ້ທາງດ້ານການເມືອງ-ແນວຄິດ, ປັບປຸງທັດສະນະຫຼັກໝັ້ນການເມືອງໃຫ້ໜັກແໜ້ນ, ຈຳແນກມິດ-ສັດຕູຢ່າງຈະແຈ້ງ.

+ ຕ້ອງຍົກສູງສະຕິພັກ, ສະຕິຊາດ, ປົກປັກຮັກສາຄວາມສະຫງົບຂອງພັກ ຂອງລັດຢ່າງເຂັ້ມງວດ, ເຊີດຊູສະຕິລະວັງຕົວຕໍ່ກົນອຸບາຍຂອງສັດຕູໃຫ້ສູງຂຶ້ນ, ຕ້ານການກະທຳ ແລະ ການ ປາກເວົ້າຊະຊາຍທີ່ຜິດກັບລະບຽບກົດໝາຍ, ບໍ່ນັບຖືການຈັດຕັ້ງ, ຖືຜົນປະໂຫຍດຂອງຊາດ, ຂອງປະຊາຊົນສູງກ່ວາຜົນປະໂຫຍດຂອງຕົນ. ບໍ່ໃຫ້ຖືກການຊື້ຈ້າງຈອບອອຍຂອງກຸ່ມບໍ່ດີ, ຕ້ານການກະທຳປອມແປງເອກະສານສຳນວນປອມແປງປະຫວັດ ແລະອື່ນໆ; ເປັນເຈົ້າການຕ້ານທຸກປະກົດການຫຍໍ້ທໍ້ ແລະ ຖ້ອຍທຳນອງໃສ່ຮ້າຍຂອງສັດຕູເປັນຕົ້ນແມ່ນ ຕ້ອງເປັນເຈົ້າການຕອບຕ້ານກົນອຸບາຍທັນປ່ຽນໂດຍສັນຕິ.

+ ພະນັກງານ, ສະມາຊິກພັກ ຕ້ອງເດັດດ່ຽວຕ້ານແບບວິທີທຳມາຫາກິນ ທີ່ບໍ່ຊອບທຳ, ລັກໂລບ, ຍັກຍອກ, ສໍ້ໂກງ, ຮັບສິນບົນ, ສວຍໃຊ້ຖານະຕຳແໜ່ງທີ່ຈະນຳໄປເຖິງການສູນເສຍບົດບາດ ແລະ ອິດທິພົນຂອງພັກ.

+ ສະມາຊິກພັກ ຕ້ອງຊອກຮູ້ຮ່ຳຮຽນ ແລະ ໃກ້ຊິດຕິດແທດກັບມະຫາຊົນ ນຳເອົາແນວທາງນະໂຍບາຍຂອງພັກລົງສູ່ມະຫາຊົນ, ພ້ອມກັນນັ້ນ ກໍຊອກຮູ້ ແລະ ກຳໄດ້ແນວຄິດຈິດໃຈ, ຄວາມມຸ່ງມາດປາຖະໜາຂອງມະຫາຊົນ ສ່ອງແສງໃຫ້ຄະນະພັກຂັ້ນເທິງເປັນປະຈຳ; ຕ້ານການສວຍໃຊ້ຄຳສັ່ງຂອງພັກມາບຊູ່ປະຊາຊົນ ແລະ ການຂົ່ມຂວາຍຊວນເຊື່ອ ແລະ ຊັກດຶງປະຊາຊົນໃຫ້ເຄື່ອນໄຫວໃນທາງບໍ່ດີ.

<u>ຄຳຖາມ </u>33: ພັກເປັນແກ່ນສານແຫ່ງຄວາມສາມັກຄີເປັນເອກະພາບທົ່ວປວງຊົນລາວ ມີຄວາມໝາຍວ່າແນວໃດ ?

<u>ຕອບ</u>: ຄວາມໜັກແໜ້ນຂອງພັກ ຢູ່ທີ່ຄວາມສາມັກຄີເປັນເອກະພາບ, ຫາກບໍ່ມີຄວາມສາ ມັກຄີເປັນເອກະພາບ, ພັກກໍຈະແຕກ. ຄວາມສາມັກຄີພາຍໃນພັກ ຕ້ອງຢູ່ບົນພື້ນຖານຂອງຄວາມເປັນເອກະພາບດ້ານອຸດົມການ ແລະ ຈຸດໝາຍຄືແນວທາງນະໂຍບາຍຂອງພັກ. ແກ່ນສານຂອງຄວາມສາມັກຄີພາຍໃນພັກແມ່ນຄວາມສາມັກຄີເປັນເອກະພາບພາຍໃນອົງການນຳສູງສຸດຂອງພັກຄື: ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ສຳລັບຢູ່ທ້ອງຖິ່ນກໍແມ່ນຄະ

ນະບໍລິຫານງານພັກແຂວງ, ແລະ ຄະນະປະຈຳພັກແຂວງ, ເມືອງ; ຢູ່ຮາກຖານພັກແມ່ນຄວາມສາມັກຄີພາຍໃນຄະນະພັກໜ່ວຍ ແລະ ສະມາຊິກພັກ ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ຄວາມສາມັກຄີເປັນເອກະພາບພາຍໃນພັກພາຍໃນຄະນະນຳສູງສຸດ, ພາຍໃນໜ່ວຍ ແລະ ພາຍໃນຄະນະພັກຂັ້ນ ຕ່າງໆແມ່ນພື້ນຖານແກ່ນສານໃຫ້ແກ່ຄວາມສາມັກຄີທົ່ວປວງຊົນລາວ.

ຄວາມສາມັກຄີເປັນເອກະພາບພາຍໃນພັກຕ້ອງໜັກແໜ້ນບົນພື້ນຖານຫຼັກລວມສູນປະຊາ ທິປະໄຕ ແລະ ການຕຳນິສິ່ງຂ່າວ ກໍ່ສ້າງຊຶ່ງກັນ ແລະ ກັນແບບສະຫາຍ, ກ້າຫານ ແລະ ຈິງໃຈ.

<u>ຄຳຖາມ </u>34: ພັກເປັນແກນນຳໃນລະບົບການເມືອງແມ່ນແນວໃດ ?

ຕອບ: ລະບົບການເມືອງຂອງປະເທດເຮົາລວມມີ: ພັກປະຊາຊົນປະຕິວັດລາວ, ບັນດາ ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຊຶ່ງເຄື່ອນໄຫວບົນພື້ນຖານພັນທະມິດລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວນາ ແລະ ຊັ້ນຄົນປັນຍາຊົນເປັນພື້ນຖານ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ເພື່ອປະຕິບັດສິດເປັນເຈົ້າຂອງປະຊາຊົນຢ່າງເຕັມສ່ວນ, ສ້າງ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນ ຕາມເສັ້ນທາງສັງຄົມນິຍົມ. ຢູ່ໃນລະບົບການເມືອງດັ່ງກ່າວການເປັນແກນນຳຂອງພັກສະແດງອອກຄື: ພັກກໍຄືຄະນະພັກຂັ້ນຕ່າງໆ ເປັນຜູ້ວາງແນວທາງ, ທິດທາງ, ແຜນນະໂຍບາຍ, ນະໂຍບາຍອອກມາທີ່ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດກໍຄືຂອງທ້ອງຖິ່ນ ແລະ ຮາກຖານເພື່ອເປັນທິດຊີ້ນຳໃຫ້ແກ່ການເຄື່ອນໄຫວຂອງອຳນາດການປົກຄອງ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງການເມືອງ-ສັງຄົມເພື່ອຈັດຕັ້ງປະຕິບັດຕົວຈິງ, ພັກເປັນຜູ້ສຶກສາອົບຮົມສະມາຊິກພັກ, ພະນັກງານ ແລະ ມະຫາຊົນໃຫ້ເຂົ້າໃຈ ແລະ ກຳແໜ້ນແນວທາງນະໂຍບາຍຂອງພັກ, ເປັນຜູ້ກໍ່ສ້າງ, ຈັດວາງ, ບັນຈຸ, ເປັນຜູ້ສະເໜີພະນັກງານ, ສະມາຊິກພັກທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດເຂົ້າໃສ່ກົງຈັກຂອງອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນ. ພ້ອມກັນນັ້ນ, ພັກປະຕິບັດການກວດກາ ການເຄື່ອນໄຫວຂອງອຳນາດການປົກຄອງ ແລະ ບັນດາອົງການຈັດຕັ້ງການເມືອງ-ສັງຄົມ. ພັກເປັນແກນນຳດ້ວຍຄວາມເປັນແບບຢ່າງຂອງສະມາຊິກພັກ.

ຄຳຖາມ 35: ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຂອງພັກ ມີຄວາມສຳຄັນແນວ ໃດ ?

ຕອບ: ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຂອງພັກ ແມ່ນກອງປະຊຸມຂອງການຈັດຕັ້ງສູງສຸດຂອງພັກ, ແມ່ນບ່ອນເຕົ້າໂຮມບັນດາຕົວແທນ ຫຼື ຜູ້ແທນຂອງສະມາຊິກພັກ, ອົງຄະນະພັກຂັ້ນຕ່າງໆໃນທົ່ວປະເທດ. ເນື່ອງຈາກວ່າຈຳນວນສະມາຊິກໃນທົ່ວປະເທດມີຫຼາຍ, ບໍ່ສາມາດພ້ອມກັນມາຮ່ວມກອງປະຊຸມບາດດຽວໄດ້, ສະນັ້ນ ຄະນະພັກແຕ່ລະຂັ້ນ ຈຶ່ງໄດ້ເລືອກເອົາຕົວແທນຂອງຕົນ ໄປຮ່ວມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຈຶ່ງເອີ້ນວ່າ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ.

ກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ເປັນເຫດການສຳຄັນເພື່ອທົບທວນຄືນ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກຄັ້ງຜ່ານມາ ແລະ ແຜນການພັດທະນາເສດ ຖະກິດ-ສັງຄົມ 5 ປີ ຂອງລັດ ມີຜົນສຳເລັດຂໍ້ຄົງຄ້າງ ແລະ ບົດຮຽນຈາກພຶດຕິກຳຕົວຈິງແນວ ໃດ?. ກອງປະຊຸມໃຫຍ່ຄົ້ນຄ້ວາ, ກຳນົດທິດທາງແນວທາງ, ແຜນນະໂຍບາຍລວມ ແລະ ຄາດໝາຍສູ້ຊົນແຕ່ລະດ້ານເພື່ອຈັດຕັ້ງປະຕິບັດໃນຊຸມປີຕໍ່ໜ້າ. ຢູ່ໃນທິດທາງແນວທາງຂອງພັກນັ້ນ ລ້ວນແຕ່ໄດ້ບັນຈຸເນື້ອໃນຮັບໃຊ້ສິດ ແລະ ຜົນປະໂຫຍດອັນແທ້ຈິງຂອງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ.

ນອກຈາກນັ້ນ ກອງປະຊຸມໄດ້ພິຈາລະນາຮັບຮອງເອົາການປັບປຸງກົດລະບຽບຂອງພັກ ແລະ ເລືອກເອົາຄະນະບໍລິຫານງານສູນກາງພັກຊຸດໃໝ່ ເພື່ອນຳພາປະຊາຊົນໃນການພັດທະນາປະເທດ ຊາດໃນຊຸມປີຕໍ່ໜ້າ. ຫາກຮັບຮູ້, ເຊື່ອມຊຶມກຳແໜ້ນ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກໄດ້ດີເທົ່າໃດກໍຈະນຳເອົາຜົນປະໂຫຍດມາໃຫ້ປະຊາຊົນບັນດາເຜົ່າ ແລະ ປະເທດຊາດດີຂຶ້ນເທົ່ານັ້ນ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງພັກແຕ່ລະຄັ້ງ ແມ່ນມີຄວາມໝາຍສຳຄັນຍິ່ງ ໃນການກຳນົດໂຊກຊາຕາຂອງປະເທດຊາດ ແລະ ນຳເອົາຜົນປະໂຫຍດອັນແທ້ຈິງມາໃຫ້ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ໃນທົ່ວປະເທດ.

ຄຳຖາມ 36: ກອງປະຊຸມຄະນະບໍລິຫານງານສູນກາງພັກເຮັດຫຍັງແດ່ ແລະ ມີຄວາມ ສຳຄັນແນວໃດ ?

ຕອບ: ກອງປະຊຸມຄະນະບໍລິຫານງານສູນກາງພັກ ມີຄວາມສໍາຄັນຫຼາຍ ເພາະວ່າ ກອງປະຊຸມຄະນະບໍລິຫານງານສູນກາງພັກ ແຕ່ລະຄັ້ງເຮັດໜ້າທີ່ສະຫຼຸບຕີລາຄາສະພາບການພາຍໃນ ແລະ ຂອງໂລກ, ການຈັດຕັ້ງປະຕິບັດໂຄງການ, ແຜນການ ແລະ ແຜນນະໂຍບາຍຕ່າງໆທີ່ຄະນະບໍລິຫານງານສູນກາງພັກໄດ້ຕົກລົງເປັນມະຕິໃນກອງປະຊຸມຄັ້ງຜ່ານມາ; ຄົ້ນຄ້ວາປຶກສາຫາລື ແລະ ອອກມະຕິກ່ຽວກັບຫຼາຍບັນຫາສໍາຄັນເຊັ່ນ: ປຶກສາຫາລືກ່ຽວກັບການກໍານົດໂຄງການ, ແຜນງານ ແລະ ມາດຕະການຕ່າງໆ ທີ່ຈໍາເປັນໃນການພັດທະນາເສດຖະກິດ-ວັດທະນະທໍາ-ສັງຄົມ, ປຶກສາ ຫາລືອອກມະຕິກ່ຽວກັບງົບປະມານປະຈໍາປີ, ກໍານົດແຜນນະໂຍບາຍຕ່າງໆ ຕໍ່ພະນັກງານ, ສໍາຫຼວດ ກວດກາການນໍາພາຂອງບັນດາສະຫາຍກໍາມະການສູນກາງພັກ ທີ່ໄດ້ຮັບການມອບໝາຍໃຫ້ຮັບຜິດຊອບນໍາພາແຕ່ລະຂົງເຂດ; ຕໍານິຕິຊົມຊ່ວຍເຫຼືອກໍ່ສ້າງເຊິ່ງກັນ ແລະ ກັນ ນອກນັ້ນກໍປຶກສາຫາລືແຕ່ງຕັ້ງ ຫຼື ໂຍກຍ້າຍພະນັກງານຂັ້ນສູງໄປຮັບຜິດຊອບນໍາພາໃນອົງການພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນ; ກໍານົດທິດທາງວຽກງານເພື່ອຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ຄໍາຖາມ 37: ປະກົດການຫຍໍ້ທໍ້ພາຍໃນພັກແມ່ນຫຍັງ ?

ຕອບ: ປະກົດການຫຍໍ້ທໍ້ພາຍໃນພັກແມ່ນ:

- ການລະເມີດກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ຖືຕົນເອງເປັນໃຫຍ່, ອາດຍາສິດ, ເອກະຊົນເຫັນແກ່ແຕ່ຜົນປະໂຫຍດສ່ວນຕົວ.

- ຂາດຄວາມຮັບຜິດຊອບ, ເຮັດວຽກບໍ່ເອົາຈິງເອົາຈັງ, ບໍ່ເຂັ້ມງວດໃນການປະຕິບັດມະຕິຄໍາສັ່ງ, ອັນໃດມັກ, ອັນໃດມີຜົນດີແກ່ຕົນຈຶ່ງເຮັດ, ອັນໃດບໍ່ຖືກໃຈ ແລະ ບໍ່ມີຜົນປະໂຫຍດແລ້ວບໍ່ເຮັດ, ບໍ່ຈິງໃຈ ແລະ ບໍ່ກ້າຫານຮັບຄວາມບົກຜ່ອງ, ແຕ່ພັດຢາກໄດ້ແຕ່ຄວາມດີຄວາມຊອບ; ປະຈົບປະແຈງຂັ້ນເທິງ ເພື່ອໃຫ້ໄດ້ດີ.

- ອວດຮັ່ງອວດມີ, ໃຊ້ຈ່າຍຟຸມເຟືອຍ, ໂລບມາກໂລພາ, ສໍ້ໂກງ, ຍັກຍອກເອົາເງິນ, ເອົາດິນ, ເອົາເຮືອນ, ເອົາຊັບສິນຂອງລັດຂອງປະຊາຊົນ, ສວຍໂອກາດສ້າງຄວາມລໍ້າລວຍ, ຫຼິ້ນການພະນັນ, ເຣຣາມ່ວນຊື່ນ ຫຼິ້ນແສ້ພານສາວ, ຄ້າຂາຍສິ່ງເສບຕິດ.

- ເຫັນແກ່ກຸ່ມກ້ອນ, ພັກພວກ, ຈຸ້ມເຈື້ອ, ເຊື້ອສາຍ, ຄົນທ້ອງຖິ່ນ ແລະ ຊົນເຜົ່າຂອງຕົນເອງ, ອະຄະຕິຕໍ່ຜູ້ອື່ນ, ບໍ່ຢາກໃຫ້ຜູ້ອື່ນໄດ້ດີລື່ນໂຕ, ອິດສາບັງບຽດ ແລະ ປັກປໍ້າຜູ້ອື່ນ...

ປະກົດການຫຍໍ້ທໍ້ເຫຼົ່ານີ້ ເປັນໄພອັນຕະລາຍໃຫຍ່ຫຼວງ ສໍາລັບການຄົງຕົວ ແລະ ຄວາມເຂັ້ມແຂງຂອງພັກ.

ສະນັ້ນ, ໜ່ວຍພັກ ແລະ ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ພາຍໃນໜ່ວຍພັກ, ຕ້ອງຖືການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ເປັນໜ້າທີ່ການເມືອງອັນສໍາຄັນ ຂອງໜ່ວຍພັກແຕ່ລະໜ່ວຍ ແລະ ສະມາຊິກພັກແຕ່ລະຄົນ.

ຄໍາຖາມ 38: ລັດທິອາດຍາສິດແມ່ນແນວໃດ ແລະ ສະແດງອອກແນວໃດ ?

ຕອບ: ລັດທິອາດຍາສິດເກີດຂຶ້ນມາໄດ້ຫຼາຍສະຕະວັດແລ້ວ, ມັນເກີດຂຶ້ນກ່ອນລະບອບໃໝ່ຂອງພວກເຮົາ. ພາຍຫຼັງສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແລ້ວ, ລັດທິອາດຍາສິດກໍຍັງຄົງຕົວ ແລະ ແກ່ຍາວຢູ່ ຊຶ່ງໄດ້ກາຍເປັນໄພອັນຕະລາຍໃຫ້ແກ່ສັງຄົມພວກເຮົາຕະຫຼອດ. ດັ່ງນັ້ນ, ເຮົາມາຮຽນຮູ້ນໍາກັນວ່າ ລັດທິອາດຍາສິດແມ່ນຫຍັງ? ສະແດງອອກແນວໃດ ?.

ປະທານ ໂຮ່ຈີມິນ ເວົ້າວ່າ: "ອາດຍາສິດແມ່ນການຫ່າງເຫີນຕົວຈິງ, ຫ່າງເຫີນປະຊາຊົນ, ຫ່າງເຫີນອຸດົມຄະຕິຂອງພັກ" ພະຍາດອາດຍາສິດ ແມ່ນໄພອັນຕະລາຍຂອງພັກກຳອຳນາດ ແມ່ນ ສາເຫດຂອງຫຼາຍພະຍາດທີ່ແຕກຕ່າງກັນ.

ສຳລັບພະນັກງານ, ສະມາຊິກພັກ, ລັດຖະກອນ ພະຍາດອາດຍາສິດສະແດງອອກເຖິງການຫ່າງເຫີນຈາກມະຫາຊົນ, ແນວຄິດພາກສ່ວນ, ກຸ່ມກ້ອນ, ເສລີບໍ່ມີລະບຽບວິໄນ, ບໍ່ປະຕິບັດ ຄຳສັ່ງ ແລະ ຂໍ້ກຳນົດກົດລະບຽບຂອງພັກ ແລະ ກົດໝາຍ, ສວຍໃຊ້ວິຊາສະເພາະເພື່ອຫາຜົນປະໂຫຍດ, ເພື່ອຂັດຂວາງຂໍ້ຕົກລົງຂອງຂັ້ນເທິງ, ສວຍໃຊ້ຖານະຕຳແໜ່ງ, ໂດຍສະເພາະ ໃນຂົງເຂດເສດຖະກິດເພື່ອກອບໂກຍ; ພົວພັນນຳແຕ່ຜູ້ລ້ຳລວຍ, ສ້າງເງື່ອນໄຂຕ່າງໆ ເພື່ອອຳນວຍຄວາມສະດວກທາງດ້ານຜົນປະໂຫຍດ ໃຫ້ແກ່ໝູ່ເພື່ອນຍາດຕິພີ່ນ້ອງຂອງຕົນເອງ ໂດຍບໍ່ມີຫຼັກການ ເພື່ອຜົນຕອບແທນ, ບໍ່ສົນໃຈນຳຜູ້ທຸກຍາກ, ນຳພະນັກງານ, ລັດຖະກອນທີ່ມີຄວາມຫຍຸ້ງຍາກ ແລະ ເບິ່ງເບົາພາກສ່ວນເສດຖະກິດຂອງລັດ.

ແນວຄິດຄອນແຄນບໍ່ໜັກແໜ້ນ, ຂາດຄວາມເຊື່ອໝັ້ນຕໍ່ຈຸດໝາຍ ແລະ ອຸດົມຄະຕິປະຕິວັດ, ຄ່ອຍໆຫ່າງເຫີນຈາກອຸດົມຄະຕິປະຕິວັດ, ສວຍໂອກາດໃຊ້ກົງຈັກລັດ ເພື່ອເປັນບ່ອນອີງຫາຜົນປະໂຫຍດສ່ວນຕົວ, ບໍ່ຫ່ວງໄຍນຳວຽກງານຂອງລັດ ແລະ ລວມໝູ່, ແລ່ນນຳແຕ່ຜົນປະໂຫຍດສ່ວນຕົວເປັນໃຫຍ່, ຊອກຊ່ອງຫວ່າງເພື່ອສໍ້ລາດບັງຫຼວງ.

ລັດທິອາດຍາສິດ ແລະ ລັດທິເອກະຊົນແມ່ນມີຄວາມຄ້າຍຄືກັນ ແລະ ມີການພົວພັນກັນ. ດັ່ງນັ້ນ, ລັດທິເອກະຊົນໃນທຸກຮູບແບບສະແດງອອກຢູ່ໃນແນວຄິດຄັບແຄບ, ແນວຄິດພາກສ່ວນ, ສ່ວນຕົວ, ທ້ອງຖິ່ນ, ແນວຄິດເສລີ, ບໍ່ມີລະບຽບວິໄນ, ບໍ່ນັບຖືການຈັດຕັ້ງ, ແນວຄິດມັກໃຫຍ່ໄຝ່ສູງ, ມັກຊື່ສຽງ, ແຍ່ງຊີງຖານະຕຳແໜ່ງທັງໆທີ່ຕົນເອງບໍ່ມີຄວາມຮູ້ ແລະ ຄວາມສາມາດພຽງພໍທີ່ເໝາະກັບຕຳແໜ່ງດັ່ງກ່າວ, ແນວຄິດຢາກໄດ້ສິດ ແລະ ຜົນປະໂຫຍດພິເສດ, ອາດຍາສິດທຸກຮູບແບບ ແລະ ອື່ນໆ.

<u>ຄຳຖາມ </u>39: ປະຢັດ ແລະ ຟຸມເຟືອຍແມ່ນຫຍັງ, ສະມາຊິກພັກຄວນມີທັດສະນະທ່າທີແນວໃດ ຕໍ່ບັນຫາດັ່ງກ່າວ ?

<u>ຕອບ: </u>- ປະຢັດແມ່ນການນຳໃຊ້ແຫຼ່ງເງິນ, ຄຳ, ແຮງງານ, ເວລາ ແລະ ແຫຼ່ງເສດຖະກິດ ອື່ນໆຖືກຕາມກຳນົດໝາຍ, ມາດຖານ ແລະ ລະບຽບການທີ່ກຳນົດໄວ້ ຫຼື ຕໍ່າກວ່າ, ແຕ່ປະສິດທິຜົນພັດບັນລຸໄດ້ເທົ່າກັບ ຫຼື ສູງກວ່າຄາດໝາຍທີ່ວາງໄວ້.

- ປະຢັດແມ່ນວິທີການຄຸ້ມຄອງເສດຖະກິດ-ສັງຄົມ ຊຶ່ງປະກອບດ້ວຍບັນດາວິທີການທາງດ້ານເສດຖະກິດ, ການຈັດຕັ້ງ, ເຕັກນິກ ແລະ ການສຶກສາອົບຮົມ ແນໃສ່ເຮັດໃຫ້ການໃຊ້ບັນດາແຫຼ່ງແຮງງານ, ເວລາ, ວັດຖຸ ແລະ ການເງິນ ເພື່ອຜົນປະໂຫຍດລວມຢ່າງສົມເຫດສົມຜົນ.

- ການປະຢັດບໍ່ແມ່ນຂີ້ຖີ່, ບໍ່ແມ່ນບັງຄັບໃຫ້ທຸກຄົນຕ້ອງອົດກິນ, ອົດໃຊ້, ອົດນຸ່ງຫົ່ມ. ປະຢັດແມ່ນການຮູ້ຄິດໄລ່, ຮູ້ຈັ່ງຍອມໃຊ້ສອຍເພື່ອມີທຶນຮອນຊ່ວຍໃຫ້ການຜະລິດຂະຫຍາຍຕົວ, ເພື່ອຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນຂຶ້ນຢ່າງໝັ້ນທ່ຽງ. ປະຢັດແມ່ນການສະສົມ ເພື່ອຄວາມກ້າວໜ້າ.

+ ການຟຸມເຟືອຍແມ່ນການນໍາໃຊ້ແຫຼ່ງເງິນ, ຄໍາ, ແຮງງານ, ເວລາ ແລະ ແຫຼ່ງເສດຖະກິດອື່ນໆບໍ່ຖືກຕາມຈຸດປະສົງ, ລື່ນກາຍກໍານົດໝາຍ, ມາດຖານ ແລະ ລະບຽບການທີ່ອົງການມີສິດອໍານາດຂອງລັດໄດ້ກໍານົດໄວ້, ແຕ່ປະສິດທິຜົນບັນລຸໄດ້ຕໍ່າກວ່າ.

- ປະຢັດບໍ່ໝາຍຄວາມວ່າ ຈະຕັດຮອນລາຍຈ່າຍທີ່ເປັນຜົນສະທ້ອນເຖິງປະລິມານ ແລະ ຄຸນນະພາບຂອງຂົງເຂດໃຊ້ຈ່າຍໃຫ້ແກ່ການໃຊ້ສອຍສັງຄົມ. ອາດຈະຕັດຮອນລາຍຈ່າຍໃນການໃຊ້ສອຍສັງຄົມທີ່ເຫັນວ່າບໍ່ທັນມີຄວາມຈໍາເປັນແທ້, ແຕ່ບໍ່ໄດ້ຕັດຮອນບັນດາຮ່ວງລາຍຈ່າຍທີ່ມີລັກສະນະຄຸນນະພາບ, ເງິນເດືອນ, ເງິນອຸດໜູນທີ່ຈໍາເປັນ ແລະ ບັນດາຮ່ວງລາຍຈ່າຍທີ່ມີລັກສະນະວິຊາການ. ປະຢັດຕ້ອງບົນພື້ນຖານມີມາດຕະການ, ມີກໍານົດການໃຊ້ສອຍທີ່ສອດຄ່ອງກັບແຕ່ລະປະເພດໃນຂົງເຂດໃຊ້ສອຍສັງຄົມ, ສອດຄ່ອງກັບແຕ່ລະບໍລິເວນ. ເຮັດແນວນີ້ ການປະຢັດຈຶ່ງມີຄວາມໝາຍພຶດຕິກໍາ.

ສະນັ້ນ, ພະນັກງານ, ສະມາຊິກພັກພວກເຮົາຕ້ອງເອົາໃຈໃສ່ການປະຢັດ ດັ່ງນີ້:

1. ປະຢັດແຮງງານຢ່າງຖືກຕ້ອງ.

ຕາມທັດສະນະຂອງພັກເຮົາ ແຮງງານແມ່ນບໍ່ເກີດຂອງວັດຖຸສິ່ງຂອງທຸກຢ່າງ ໃນສັງຄົມ. ຖ້າພວກເຮົາບໍ່ຮູ້ປະຢັດແຮງງານແລ້ວ ຈະເປັນການຟຸມເຟືອຍອັນໃຫຍ່ຫຼວງ, ບໍ່ສາມາດເຮັດໃຫ້ວັດຖຸສິ່ງຂອງເກີດອອກມາຢ່າງຫຼວງຫຼາຍໄດ້. ໃນການປະຢັດຕ້ອງເອົາໃຈໃສ່ປຸກລະດົມແຮງງານຕົ້ນຕໍ, ແຮງງານສໍາຮອງເຂົ້າໃສ່ການຜະລິດ ແລະ ການເຮັດວຽກງານທີ່ມີຜົນປະໂຫຍດໃຫ້ແກ່ທຸກຄົນກໍຄື ໃຫ້ແກ່ສັງຄົມຢ່າງສຸດຂີດ. ຕ້ອງແກ້ໄຂປະກົດການປະປ່ອຍໃຫ້ແຮງງານພັກຜ່ອນຢູ່ລ້າ, ໄປທ່ຽວຫຼິ້ນ ຫຼື ຫາກິນຊຸມແຊວແບບຟຸມເຟືອຍ.

2. ປະຢັດເວລາເຮັດວຽກ ແລະ ໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ.

ພວກເຮົາເຄີຍເວົ້ານໍາກັນວ່າ ເວລາເປັນເງິນເປັນຄໍາ, ແຕ່ວ່າໃນຕົວຈິງແລ້ວ ສ່ວນຫຼາຍພວກເຮົາໄດ້ປະເວລາອັນມີຄ່ານັ້ນ ເສຍໄປລ້າໆບໍ່ຈັກວ່າເທົ່າໃດ. ປະຢັດເວລາຕ້ອງເອົາໃຈໃສ່ເຮັດໃຫ້ດີບາງບັນຫາສໍາຄັນຄື: ຕ້ອງຮູ້ສັບຊ້ອນ, ດັດແປງວິທີເຮັດວຽກ ເພື່ອຮອນເວລາເຮັດວຽກອັນໜຶ່ງໃຫ້ສັ້ນເຂົ້າ, ໝາຍວ່າແຕ່ກ່ອນເຮັດວຽກໜຶ່ງ ຕ້ອງໃຊ້ເວລາ 4 ຊົ່ວໂມງ, ປະຢັດແມ່ນຕ້ອງດັດແປງວິທີເຮັດວຽກ ເພື່ອໃຫ້ເວລາສັ້ນເຂົ້າຍັງເຫຼືອແຕ່ 3 ຫລື 2 ຊົ່ວໂມງ ແລ້ວນໍາເອົາຊົ່ວໂມງເຫຼືອນັ້ນໄປເຮັດວຽກອື່ນຕື່ມ. ປະຢັດເວລາຕ້ອງໃຊ້ເວລາຫວ່າງທີ່ຕົນມີໃຫ້ເປັນປະໂຫຍດ, ຖ້າເຮົາຮູ້ນໍາໃຊ້ດີຈະນໍາປະໂຫຍດມາໃຫ້ເຮົາຢ່າງຫຼວງຫຼາຍທີ່ສຸດ. ປະຢັດເວລາຍັງໝາຍເຖິງການຈັບໂອກາດຍາດເວລາຢ່າງສຸດຂີດ ເພື່ອເຮັດວຽກງານທີ່ມີປະໂຫຍດໃຫ້ດີທີ່ສຸດ.

3. ປະຢັດເງິນຄໍາ.

ການສ້າງບ້ານແປງເມືອງ ມີຄວາມຈໍາເປັນຕ້ອງມີທຶນຮອນ ອັນຈໍາເປັນແນ່ນອນຈໍານວນໜຶ່ງຈຶ່ງເຮັດໄດ້. ປະເທດເຮົາຍັງທຸກຍາກຫຼ້າຫຼັງ, ຢາກສ້າງສາພັດທະນາບ້ານ, ເມືອງຕ້ອງໄດ້ຍົກສູງຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຕ້ອງເອົາໃຈໃສ່ສະສົມທຶນຮອນດ້ວຍຕົນເອງເປັນຕົ້ນຕໍ. ຢາກມີການສະສົມ, ກ່ອນອື່ນຕ້ອງອອກແຮງງານຜະລິດສິນຄ້າ ຜະລິດວັດຖຸສິ່ງຂອງອື່ນໆອອກມາໃຫ້ຫຼາຍເພື່ອຂາຍເອົາເງິນ, ເປັນຕົ້ນແມ່ນມີສິນຄ້າຂາອອກໃຫ້ຫຼາຍ ຫຼື ຕ້ອງເຮັດການບໍລິການໃຫ້ຫຼາຍ ເພື່ອມີລາຍຮັບຕົວຈິງນັບມື້ນັບເພີ່ມຂຶ້ນ. ເມື່ອມີເງິນແລ້ວກໍຕ້ອງມີການຄິດໄລ່ໃນການໃຊ້ຈ່າຍຢ່າງປະຢັດມັດທະຍັດ ເພື່ອສາມາດສະສົມທຶນຮັບໃຊ້ການເປີດກວ້າງການຜະລິດ. ຢາກປະຢັດເງິນຄໍາໄດ້, ກ່ອນອື່ນຕ້ອງມີການຄິດໄລ່ໃຫ້ຮັດກຸມ ກ່ຽວກັບ

ການໃຊ້ກຳລັງແຮງງານຂອງຄົນຈາກຫຼາຍມາເປັນໜ້ອຍກວ່າ, ຫຼຸດຜ່ອນເວລາເຮັດວຽກລົງຕື່ມ, ປະຢັດວັດຖຸດິບ, ເຊື້ອໄຟຕ່າງໆໃຫ້ດີກວ່າເກົ່າ, ຈາກນັ້ນ ຈະເຮັດໃຫ້ລາຍຈ່າຍຫຼຸດລົງ, ແຕ່ວຽກງານກໍຄືຜົນຜະລິດຍັງບັນລຸໄດ້ສ່ຳເກົ່າ ຫຼື ລື່ນເກົ່າ. ປະຢັດເງິນຄຳຍັງໝາຍເຖິງການປົກປັກຮັກສາບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ໃຊ້ຈ່າຍໃນທາງທີ່ບໍ່ເປັນປະໂຫຍດ.

4. ຕ້ອງສຶກສາອົບຮົມໃຫ້ທຸກຄົນຮູ້ປະຢັດ.

ປະຊາຊົນເຮົາສ່ວນຫຼາຍຍັງບໍ່ທັນຮູ້ປະຢັດຢ່າງແທ້ຈິງ, ການປະຢັດ ແມ່ນເພື່ອສ້າງໃຫ້ຕົນມີທຶນ ເພື່ອເຮັດການຜະລິດສຳເປີດກວ້າງ. ເວົ້າລວມແລ້ວ ເມື່ອເວົ້າເຖິງການປະຢັດແມ່ນຮຽກຮ້ອງໃຫ້ພວກເຮົາຕ້ອງເອົາໃຈໃສ່ຝຶກຝົນແອບຕົນເອງ ໃຫ້ຮູ້ຄົ້ນຄວ້າສັບຊ້ອນ ແລະ ຈັດຕັ້ງການເຮັດວຽກງານຕົວຈິງໃຫ້ມີປະສິດທິຜົນສູງ. ພ້ອມກັນນັ້ນກໍຕັ້ງໜ້າແກ້ໄຂການໃຊ້ຈ່າຍຟຸ່ມເຟືອຍ, ບໍ່ເອົາໃຈໃສ່ເຮັດວຽກງານການຜະລິດ, ໜັກໄປແຕ່ທາງເຮັດງານບຸນ, ຊຸມແຊວມືນເມົາເກີນຂອບເຂດ, ໃຊ້ຈ່າຍເກີນກວ່າລາຍຮັບຂອງຕົນ ຈົນບໍ່ສາມາດສະສົມເປີດກວ້າງການຜະລິດ ແລະ ບໍ່ສາມາດປະກອບສ່ວນເຂົ້າໃນລາຍຈ່າຍໃຊ້ສອຍທີ່ຈຳເປັນຂອງຄອບຄົວ ແລະ ສັງຄົມ, ຊ້ຳບໍ່ໜຳຍັງເຮັດໃຫ້ຕົນເອງບໍ່ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກຂາດເຂີນ, ຊີວິດການເປັນຢູ່ນັບມື້ນັບຝືດເຄືອງ. ຖ້າຍັງແກ່ຍາວແບບນີ້ ຈະເຮັດໃຫ້ປະເທດເຮົາຈົມເລິກໃນຄວາມທຸກຍາກ.

<u>ຄຳຖາມ</u> 40: ຄວາມທຸກຍາກແມ່ນແນວໃດ ແລະ ຈະມີວິທີແກ້ໄຂແນວໃດ ?

<u>ຕອບ</u>: ຄວາມທຸກຍາກສະແດງອອກດັ່ງນີ້:

- ມີລາຍໄດ້ໜ້ອຍບໍ່ພໍສຳລັບການກິນຢູ່ຂັ້ນພື້ນຖານ.
- ມີເຮືອນຢູ່ບໍ່ໝັ້ນຄົງຖາວອນ, ມີເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍພາຍໃນຄອບຄົວບໍ່ພຽງພໍກັບຄວາມຕ້ອງການຂັ້ນພື້ນຖານ, ສະພາບຄວາມເປັນຢູ່ຂາດສຸຂະອະນາໄມ.
- ມີລູກຫຼາຍຄົນ ແລະ ຂາດເງື່ອນໄຂເບິ່ງແຍງລ້ຽງດູທີ່ເໝາະສົມ, ໄດ້ຮຽນໜັງສືໜ້ອຍ ຫຼື ບໍ່ໄດ້ຮຽນໜັງສືເລີຍ; ມີບັນຫາດ້ານສຸຂະພາບ ແລະ ຂາດເງື່ອນໄຂໃນການຮັກສາ-ປິ່ນປົວ.
- ດຳລົງຊີວິດແບບຂາດຄວາມບຸກບືນຫ້າວຫັນ ແລະ ຂາດຄວາມຫວັງ; ບໍ່ຢາກເຂົ້າຮ່ວມໃນວຽກງານລວມຂອງບ້ານ ແລະ ຢາກແຍກຕົວອອກຈາກຜູ້ອື່ນ.

2. <u>ສາເຫດຂອງຄວາມທຸກຍາກ</u>:

ຄວາມທຸກຍາກເກີດຈາກຫຼາຍສາເຫດ; ແຕ່ຕົ້ນຕໍຍ້ອນບາງສາເຫດດັ່ງນີ້:

- ຍ້ອນບໍ່ມີດິນສຳລັບການທຳມາຫາກິນ ຫຼື ມີດິນແຕ່ບໍ່ເໝາະສົມໃນການທຳມາຫາກິນ, ຜະ ລິດໄດ້ຮັບຜົນໜ້ອຍ, ບໍ່ພຽງພໍກັບຄວາມຕ້ອງການພາຍໃນຄອບຄົວ ແລະ ບໍ່ມີສ່ວນເຫຼືອຂາຍ.
- ຍ້ອນດິນຟ້າອາກາດບໍ່ອຳນວຍ, ເກີດໄພພິບັດທາງທຳມະຊາດ ( ນ້ຳຖ້ວມ, ຟ້າແລ້ງ ) ທີ່ ສ້າງຄວາມເສຍຫາຍໃຫ້ແກ່ການຜະລິດຢ່າງຫຼວງຫຼາຍ.
- ເກີດຈາກຄວາມບໍ່ປະຢັດ, ໃຊ້ຈ່າຍຟຸ່ມເຟືອຍ; ເຈັບປ່ວຍ ແລະ ອອກແຮງງານບໍ່ໄດ້.
- ຍ້ອນຄວາມຂີ້ຄ້ານ, ຂາດຄວາມອົດທົນສູ້ຊົນໃນການທຳມາຫາກິນ; ບໍ່ຮຽນຮູ້ວິທີການ ຜະລິດແບບໃໝ່ທີ່ມີປະສິດທິຜົນ; ມີແຕ່ທຳມາຫາກິນຕາມຄວາມຊິນແບບເກົ່າດັ້ງເດີມ.

( ການຊອກຮູ້ສາເຫດທີ່ແທ້ຈິງຂອງຄວາມທຸກຍາກຂອງບຸກຄົນ ຫຼື ຄອບຄົວແມ່ນບັນຫາ ສຳຄັນ ສຳລັບການກຳນົດວິທີການ ແລະ ມາດຕະການເພື່ອຊ່ວຍເຫຼືອບຸກຄົນນັ້ນ ຫຼື ຄອບຄົວນັ້ນເພື່ອແກ້ໄຂ ຄວາມທຸກຍາກ.

3. <u>ມາດຕະຖານຄວາມທຸກຍາກ.</u>

- ຕາມດຳລັດ 201 / ລບ, ລົງວັນທີ 25 /4 / 2012 ຫົວໜ່ວຍ ຄິດໄລ່ມາດຕະຖານຄວາມທຸກ ຍາກແມ່ນຖືເອົາລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ເດືອນເປັນຂີດໝາຍ, ບໍ່ຈຳແນກເພດໄວ ແລະ ຖືເອົາເງິນກີບເປັນ ຫຼັກດັ່ງນີ້:

( ສະເລ່ຍທົ່ວປະເທດແມ່ນ 192.000 ກີບ / ຄົນ / ເດືອນ.

( ສຳລັບຊົນນະບົດແມ່ນ 180.000 ກີບ / ຄົນ / ເດືອນ.

( ສຳລັບຢູ່ເຂດຕົວເມືອງແມ່ນ 240.000 ກີບ / ຄົນ / ເດືອນ.

ຖ້າຫາກຜູ້ໃດມີລາຍໄດ້ໜ້ອຍກວ່າມາດຕະຖານທີ່ກຳນົດໄວ້ ຖືວ່າຜູ້ນັ້ນຍັງທຸກຍາກ.

4. <u>ວິທີແກ້ໄຂຄວາມທຸກຍາກມີດັ່ງນີ້</u>:

- ຜູ້ທຸກຍາກ - ຄອບຄົວທຸກຍາກ ຕ້ອງມີຄວາມຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ມີຄວາມສູ້ຊົນບຸກບືນ, ດຸ ໝັ່ນພາກພຽນໃນການແກ້ໄຂຄວາມທຸກຍາກດ້ວຍຕົວເອງຢ່າງເປັນເຈົ້າການ.
- ຊຸມຊົນພາຍໃນບ້ານ ຕ້ອງໃຫ້ການແນະນຳຊ່ວຍເຫຼືອ ແລະ ສາມັກຄີພ້ອມກັນແກ້ໄຂບັນ ຫາດັ່ງກ່າວ. ໃນນີ້ ຕ້ອງມີຜູ້ຊ່ວຍຊຸມຊົນທີ່ເຂັ້ມແຂງຈຶ່ງສາມາດປຸກລະດົມ ແລະ ຈັດຕັ້ງນຳພາຊາວ ບ້ານຢ່າງເປັນຂະບວນ.
- ລັດເປັນຜູ້ສ້າງເງື່ອນໄຂອັນຈຳເປັນ ເພື່ອໃຫ້ປະຊາຊົນແກ້ໄຂຄວາມທຸກຍາກຂອງຕົນເຊັ່ນ: ສ້າງເງື່ອນໄຂ ໃຫ້ປະຊາຊົນສາມາດປະກອບອາຊີບທຳການຜະລິດເປັນສິນຄ້າ, ເຮັດບໍລິການສ້າງລາຍໄດ້, ເຮັດໃຫ້ຜູ້ທຸກ ຍາກມີຢູ່ມີກິນພຽງພໍ ແລະ ດີຂຶ້ນເທື່ອລະກ້າວ
- ປະຊາຊົນຜູ້ທຸກຍາກຕ້ອງໄດ້ຮັບການສຶກສາອົບຮົມ, ປຸກລະດົມໃຫ້ເຂົາເຈົ້າມີຄວາມເປັນເຈົ້າການໃນການ ແກ້ໄຂຄວາມທຸກຍາກດ້ວຍຕົນເອງ, ຜູ້ທຸກຍາກຕ້ອງເພີ່ມຄວາມດຸໝັ່ນ, ມີຄວາມຕື່ນຕົວສູ້ຊົນເພື່ອໃຫ້ຕົນ ຫຼຸດພົ້ນຈາກຄວາມທຸກຍາກ ແລະ ພັດທະນາຄອບຄົວໃຫ້ດີຂຶ້ນ.

<u>ຄຳຖາມ </u>41: ໜ່ວຍພັກ ແລະ ສະມາຊິກພັກມີບົດບາດສຳຄັນ ໃນການປັບປຸງກໍ່ ສ້າງຮາກຖານການ ເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານແນວໃດ ?

<u>ຕອບ</u>: ໜ່ວຍພັກມີພາລະບົດບາດເປັນແກນນຳໃນລະບົບການເມືອງຢູ່ຮາກຖານ, ຄົ້ນຄ້ວາ, ນຳພາ ຈັດຕັ້ງປະຕິບັດທຸກແນວທາງແຜນນະໂຍບາຍຂອງພັກ, ມະຕິຄຳສັ່ງຂອງຂັ້ນເທິງ ແລະ ລະບຽບກົດໝາຍທີ່ລັດ ວາງອອກ, ສຶກສາອົບຮົມຈິດໃຈເປັນເຈົ້າຂອງປະເທດຊາດ ແລະ ຄວາມຕື່ນຕົວທາງການເມືອງຂອງສະມາຊິກ ພັກ ແລະ ປະຊາຊົນຊັ້ນຄົນຕ່າງໆ; ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ໃນຂອບ ເຂດຕົນຮັບຜິດຊອບ; ດຳເນີນການກໍ່ສ້າງ ແລະ ຂະຫຍາຍພັກ; ຕິດຕາມກວດກາການເຄື່ອນໄຫວຂອງສະມາ ຊິກພັກ, ຂອງອຳນາດການປົກຄອງ ແລະ ຂອງບັນດາອົງການຈັດຕັ້ງມະຫາຊົນທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ.

*ບົດບາດນຳພາຂອງໜ່ວຍພັກໃນການພັດທະນາຊົນນະບົດ ມີດັ່ງນີ້:*

- ເຮັດໃຫ້ປະຊາຊົນລາວບັນດາເຜົ່າໃນເຂດຊົນນະບົດມີຄວາມຮັບຮູ້ກ່ຽວກັບແນວທາງ ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມີຄວາມຕື່ນຕົວການເມືອງ ແລະ ເສີມຂະ ຫຍາຍສິດເປັນເຈົ້າປະເທດຊາດ, ສາມັກຄີ, ຊ່ວຍເຫຼືອກັນ ພ້ອມພຽງກັນພັດທະນາບ້ານຊ່ອງ ແລະ ເຮັດໃຫ້ທຸກຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກ.

- ຍູ້ແຮງການຜະລິດ ແລະ ການບໍລິການຢູ່ຊົນນະບົດ ເພື່ອເຮັດໃຫ້ການຜະລິດກະສິກຳ-ປ່າໄມ້ເປັນການຜະລິດສິນຄ້າ, ສ້າງລາຍໄດ້ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຢ່າງຈະແຈ້ງ.

- ຮັບປະກັນເຮັດໃຫ້ຊົນນະບົດ ລວມທັງເຂດທີ່ມີຄວາມຫຍຸ້ງຍາກມີຄວາມສະຫງົບບົນພື້ນຖານການປະກອບສ່ວນຂອງປະຊາຊົນ ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຮາກຖານຂອງຕົນ.

- ກໍ່ສ້າງ ແລະ ປັບປຸງລະບົບການເມືອງຢູ່ຮາກຖານບ້ານໃຫ້ເຂັ້ມແຂງ, ເປັນແບບຢ່າງນຳໜ້າຊາວບ້ານໃນການປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ.

<u>ຄຳຖາມ</u> 42: ການຂະຫຍາຍພັກໂດຍຖືເອົາຄຸນນະພາບເປັນກົກແມ່ນເຮັດແນວໃດ ?

<u>ຕອບ</u>: ການຂະຫຍາຍພັກໂດຍຖືເອົາຄຸນນະພາບເປັນກົກແມ່ນການກໍ່ສ້າງພັກ ທີ່ແນໃສ່ຍົກສູງຄວາມສາມາດ ໃນການນຳພາຂອງພັກຢູ່ໃນແຕ່ລະບ່ອນ, ແຕ່ລະຂົງເຂດວຽກງານ; ສ້າງໃຫ້ຄະນະພັກ, ໜ່ວຍພັກ ແລະ ສະມາຊິກພັກມີຄວາມເປັນແບບຢ່າງ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີອຸດົມການທີ່ຖືກຕ້ອງ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ, ມີຄຸນສົມບັດສິນທຳປະຕິວັດກາຍເປັນຜູ້ນຳໜ້າພາທາງ, ສາມາດເປັນແກນນຳ-ນຳພາທຸກຂະບວນ ການ ແລະ ເຮັດຫຼ້ອນໜ້າທີ່ການເມືອງຂອງພັກ; ຫຼີກເວັ້ນການຂະຫຍາຍພັກ ທີ່ເອົາແຕ່ຈຳນວນ- ປະລິມານເປັນຈຸດໜັກ, ການຂະຫຍາຍພັກຕ້ອງດຳເນີນໃຫ້ຖືກຕ້ອງຕາມເງື່ອນໄຂ, ມາດຖານ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ.

<u>ຄຳຖາມ</u> 43: ການສ້າງພັກໃນຂະບວນການຂອງມະຫາຊົນ ແລະ ການເອົາມະຫາຊົນສ້າງພັກແມ່ນແນວໃດ ?

<u>ຕອບ</u>: ການສ້າງພັກໃນຂະບວນການຂອງມະຫາຊົນ ແລະ ການເອົາມະຫາຊົນສ້າງພັກແມ່ນມີດັ່ງນີ້:

+ <u>ສ້າງພັກໃນຂະບວນການມະຫາຊົນ.</u>

- ພັກປະຊາຊົນປະຕິວັດລາວ ແມ່ນພັກຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ລາວບັນດາເຜົ່າ. ສະນັ້ນ, ຢາກໃຫ້ພັກມີຄວາມເຂັ້ມແຂງ, ໜັກແໜ້ນມີນ້ຳໃຈຮັບໃຊ້ປະຊາຊົນຢ່າງບໍລິສຸດໃຈ, ສະມາຊິກພັກຕ້ອງເຂົ້າຮ່ວມສ້າງຕົນເອງໃນຂະບວນການຂອງມະຫາຊົນ. ຢູ່ໃນສັງຄົມມີຫຼາຍ ຂະບວນການປະຕິວັດຂອງມະຫາຊົນເຊັ່ນ: ຂະບວນການຕໍ່ສູ້ປົດປ່ອຍຊາດ (ໃນເມືອກ່ອນ) , ຂະບວນການຜະລິດກະສິກຳເປັນສິນຄ້າ, ຂະບວນການລຶບລ້າງຄວາມທຸກຍາກ, ຂະບວນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂະບວນການລຶບລ້າງຄວາມບໍ່ຮູ້ໜັງສື, ຂະບວນການອະນາໄມກັນພະຍາດ ແລະ ອື່ນໆ. ສະມາຊິກພັກແຕ່ລະສະຫາຍຢາກໃຫ້ຕົນເອງມີຄວາມເຕີບໃຫຍ່ຮອບ ດ້ານ ຕ້ອງເຊື່ອມເຂົ້າໃນທຸກຂະບວນການປະຕິວັດຂອງມະຫາຊົນ, ທັງເປັນຜູ້ນຳພາ ແລະ ທັງເປັນແບບຢ່າງໃນການຈັດຕັ້ງປະຕິບັດຕົວຈິງ.

- ສະມາຊິກພັກຕ້ອງໄດ້ຮ່ວມກັບມະຫາຊົນພ້ອມກັນສ້າງແຜນການ, ສ້າງໂຄງການ, ມາດຕະການຕ່າງໆກ່ຽວກັບການຈັດຕັ້ງບັນຈຸສັບຊ້ອນກໍາລັງ, ພາຫະນະຮັບໃຊ້ໃນຂະບວນການຈັດຕັ້ງປະ ຕິບັດຕົວຈິງ. ທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດຕ້ອງມີການກວດກາ, ມີການສະຫຼຸບຖອດຖອນບົດຮຽນດ້ານດີ-ດ້ານອ່ອນເພື່ອເສີມຂະຫຍາຍດ້ານດີ ແລະ ແກ້ໄຂຈຸດອ່ອນໃນຂັ້ນຕໍ່ໄປ.

- ສະມາຊິກພັກຜູ້ທີ່ໄດ້ຜ່ານບັນດາຂະບວນການຂອງມະຫາຊົນແລ້ວ ໃນຕົວແມ່ນໄດ້ຜ່ານການທົດສອບຫຼາຍຢ່າງ ເຮັດໃຫ້ສະມາຊິກພັກມີປະສົບການ, ມີບົດຮຽນໃນການນໍາພາຄຸ້ມຄອງໄດ້ດີ, ພ້ອມກັນນັ້ນ ກໍໄດ້ຮຽນຮູ້ຫຼາຍຢ່າງໃນພຶດຕິກໍາຕົວຈິງ, ເຮັດໃຫ້ສະມາຊິກພັກເຕີບໃຫຍ່ທາງດ້ານຄວາມຮູ້ ແລະ ປະສົບການກໍຄືຄວາມສາມາດຕົວຈິງ, ໄດ້ຝຶກຝົນຫຼໍ່ຫຼອມຕົນເອງດ້ານຄຸນສົມ ບັດສິນທໍາປະຕິວັດ, ມີທັດສະນະຫຼັກໝັ້ນການເມືອງທີ່ທີ່ຖືກຕ້ອງ ແລະ ວິທະຍາສາດ, ສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນ, ສັດຈະທໍາທີ່ວ່າ: ມະຫາຊົນເປັນຜູ້ສ້າງປະຫວັດສາດຈຶ່ງໄດ້ຖືກຢືນຢັນ ແລະ ໝູນໃຊ້ເຂົ້າໃນການປະຕິວັດລາວ. ພັກເຮົາກໍໄດ້ເນັ້ນໜັກວ່າພັກເປັນຜູ້ນໍາພາ, ສ່ວນພາລະກິດປະຕິວັດເປັນຂອງມະຫາຊົນ. ສະນັ້ນ, ພັກຈຶ່ງມີຄວາມເຊື່ອໝັ້ນກໍາລັງແຮງ, ຄວາມສາມາດປະດິດສ້າງທີ່ຊະນະເລີດຂອງມະຫາຊົນ.

+ <u>ເອົາມະຫາຊົນສ້າງພັກ.</u>

- ໃນເວລາສະມາຊິກພັກເຂົ້າຮ່ວມນໍາພາ ແລະ ຈັດຕັ້ງປະຕິບັດໃນຂະບວນການມະຫາຊົນນັ້ນແນ່ນອນວ່າ ຜູ້ເຮັດວຽກດີມີຜົນງານມະຫາຊົນກໍຍ້ອງຍໍສັນລະເສີນ ອັນໃດທີ່ສະມາຊິກພັກເຮັດບໍ່ໄດ້ດີກໍຈະໄດ້ຮັບການຕໍາຕິຊົມຊຶ່ງກັນ ແລະ ກັນ ດ້ວຍຄວາມຈິງອົກຈິງໃຈ ເພື່ອໃຫ້ສະມາຊິກພັກແຕ່ລະສະຫາຍໄດ້ປັບປຸງແກ້ໄຂ.

<u>ຄໍາຖາມ</u> 44: ຢຶດໝັ້ນໃນຈຸດໝາຍ ແລະ ອຸດົມການສັງຄົມນິຍົມແມ່ນແນວໃດ ?

<u>ຕອບ</u>: ສັງຄົມນິຍົມ ແມ່ນສັງຄົມທີ່ຊົນຊັ້ນກໍາມະກອນ ແລະ ຊາວຜູ້ອອກແຮງງານເປັນເຈົ້າປະເທດຊາດ, ມີພື້ນຖານເສດຖະກິດຂະຫຍາຍຕົວສູງ ບົນພື້ນຖານກໍາລັງການຜະລິດທີ່ທັນສະໄໝ ແລະ ມີລະບອບກໍາມະສິດສ່ວນລວມຕໍ່ພາຫະນະການຜະລິດຕົ້ນຕໍ, ເປັນສັງຄົມທີ່ປາສະຈາກການກົດຂີ່ຂູດຮີດ, ມີຄວາມສະເໝີພາບ, ປະຊາທິປະໄຕ, ເສລີພາບ, ສັນຕິພາບ ແລະ ມີມະນຸດສະທໍາຢ່າງແທ້ຈິງ; ມີນະໂຍບາຍສະຫວັດດີການ-ສັງຄົມທີ່ຈົບງາມ, ສົມເຫດສົມຜົນສໍາລັບຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດເຊັ່ນ: ວິລະຊົນ, ນັກຮົບແຂ່ງຂັນຜູ້ອອກກິນເບັ້ຍບໍານານ, ຄອບຄົວຜູ້ທີ່ເສຍຊີວິດຕໍ່ປະເທດຊາດ, ຜູ້ເສຍອົງຄະປ່ຽວພອຍ..., ມີພື້ນຖານວັດທະນະທໍາທີ່ກ້າວໜ້າ ແລະ ອຸດົມສົມບູນໄປດ້ວຍເອກະລັກຂອງຊາດ. ແຕ່ລະຄົນມີເງື່ອນໄຂພັດທະນາຕົນເອງຢ່າງຮອບດ້ານ, ບັນດາຊົນເຜົ່າມີຄວາມສະເໝີພາບ, ສາມັກຄີປອງດອງຊ່ວຍເຫຼືອກັນ ພ້ອມກັນກ້າວໜ້າ, ຮ່ວມກັນສ້າງສາພັດທະນາປະຊາຊາດໃຫ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ມີການພົວພັນມິດຕະພາບ ແລະ ຮ່ວມມືກັບບັນດາປະເທດຊາດໃນໂລກ.

ດັ່ງນັ້ນ, ຢາກຢຶດໝັ້ນຈຸດໝາຍ ແລະ ອຸດົມການສັງຄົມນິຍົມຕ້ອງຢຶດໝັ້ນບາງບັນຫາດັ່ງນີ້:

- ຢຶດໝັ້ນໃນແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ. ເດັດດ່ຽວສ້າງ ແລະ ບູລະນະລະບອບ ປະຊາທິປະໄຕ ປະຊາຊົນ, ສ້າງບັນດາປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມ.

- ຍຶດໝັ້ນລັດທິມາກ-ເລນິນ ຢ່າງສະເໝີຕົ້ນສະເໝີປາຍ ແລະ ໝູນໃຊ້ລັດທິມາກ-ເລນິນ ຢ່າງປະດິດສ້າງ, ສອດຄ່ອງກັບຄວາມເປັນຈິງຂອງປະເທດຊາດ.

- ຍຶດໝັ້ນການນຳພາຂອງພັກປະຊາຊົນປະຕິວັດລາວ ຕິດພັນກັບການຕໍ່ສູ້ເພື່ອສ້າງລະບອບໃໝ່, ລະບອບສັງຄົມນິຍົມ.

- ຍຶດໝັ້ນໃນຫຼັກການລວມສູນປະຊາທິປະໄຕ ປະຕິບັດການນຳພາເປັນໝູ່ຄະນະແບ່ງງານໃຫ້ບຸກຄົນຮັບຜິດຊອບ.

- ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ສ້າງກ້ອນກຳລັງສາມັກຄີທົ່ວປວງຊົນ ແລະ ການເປັນປຶກແຜ່ນຂອງຊາດລາວເອກະລາດ, ເອກະພາບ.

ສະນັ້ນ, ສິ່ງທີ່ກ່າວມາເທິງນີ້ ແມ່ນຄວາມຕ້ອງການຂອງປະຊາຊົນລາວບັນດາເຜົ່າ ເປັນເວລາດົນນານມາແລ້ວ. ພັກນຳພາປະຊາຊົນເຮົາລຸກຮື້ຂຶ້ນຕໍ່ສູ້ເຮັດການປະຕິວັດຢ່າງທໍລະຫົດອົດທົນ, ເສຍສະຫຼະບໍ່ຈັກວ່າເທົ່າໃດຕະຫຼອດໄລຍະກວ່າເຄິ່ງສະຕະວັດມານີ້ ກໍເພື່ອຢາກມີສັງຄົມນິຍົມທີ່ເປັນຈິງ. ຍ້ອນແນວນັ້ນ, ສັງຄົມນິຍົມຈຶ່ງເປັນອຸດົມການອັນສູງສົ່ງ ແລະ ເປັນຈຸດໝາຍສູ້ຊົນອັນບໍ່ລົດລະຂອງປະຊາຊົນລາວບັນດາເຜົ່າຕະຫຼອດມາ.

**ຄຳຖາມ 45: ບົດບາດນຳພາ ແລະ ຄວາມຮັບຜິດຊອບຂອງພັກໃນໄລຍະໃໝ່ມີແນວໃດ?.**

**ຕອບ**: ບົດບາດນຳພາ ແລະ ຄວາມຮັບຜິດຊອບຂອງພັກສະແດງອອກດັ່ງນີ້:

①. ປັດຈຸບັນພັກປະຊາຊົນປະຕິວັດລາວ ເປັນພັກກຳອຳນາດ, ພັກມີຄວາມຮັບຜິດຊອບຕໍ່ທຸກຂົງເຂດໃນທົ່ວສັງຄົມ, ພັກເປັນຜູ້ວາງ ແລະ ບູລະນະແນວທາງນະໂຍບາຍ ທີ່ມີລັກສະນະກຳນົດທິດຂະຫຍາຍຕົວຂອງປະເທດຊາດ ໃຫ້ສອດຄ່ອງກັບກົດເກນຂະຫຍາຍຕົວຂອງສັງຄົມ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງປະເທດຊາດ, ຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນລາວບັນດາເຜົ່າ, ເຕົ້າໂຮມຄວາມສາມັກຄີເປັນເອກະພາບທົ່ວປວງຊົນລາວທັງຊາດ.

②. ພັກເປັນແກນນຳໃນລະບົບການເມືອງແຫ່ງລະບອບປະຊາທິປະໄຕປະຊາຊົນ, ເສີມຂະຫຍາຍພາລະບົດບາດຄຸ້ມຄອງຂອງລັດ, ຂອງແນວລາວສ້າງຊາດ, ຂອງອົງການຈັດຕັ້ງມະຫາຊົນ ແລະ ຂອງອົງການຈັດຕັ້ງສັງຄົມອື່ນໆ.

③. ພັກນຳພາກໍ່ສ້າງກົງຈັກລັດໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເປັນລັດຂອງປະຊາຊົນໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ; ນຳພາອົງການຈັດຕັ້ງທັງພາກລັດ, ເອກະຊົນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆໃນການຫັນເອົາແນວທາງ, ແຜນນະໂຍບາຍທີ່ພັກວາງອອກເປັນແຜນການ, ແຜນງານ, ໂຄງການອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ເປັນຈິງ.

④. ພັກເປັນຜູ້ກວດກາລັດ ແລະ ທຸກການຈັດຕັ້ງໃນລະບົບການເມືອງໃນການເຜີຍແຜ່ຈັດຕັ້ງປະຕິບັດ ແລະ ຫັນເອົາແນວທາງນະໂຍບາຍຂອງພັກເປັນຂໍ້ກຳນົດກົດໝາຍ, ເປັນຄຳສັ່ງ, ຂໍ້ຕົກລົງຕ່າງໆ ເພື່ອຄຸ້ມຄອງສັງຄົມ.

⑤. ພັກຮັບຜິດຊອບການກໍ່ສ້າງ, ການບຳລຸງ, ການບັນຈຸສັບຊ້ອນ, ນຳໃຊ້ພະນັກງານໃນຕຳແໜ່ງງານທີ່ສຳຄັນຂອງອົງການພັກ-ລັດ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຖືກຕ້ອງ, ເໝາະສົມ.

⑥. ພັກມີຄວາມຮັບຜິດຊອບນຳພາບັນດາການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຕະຫຼອດຮອດປະຊາຊົນບັນດາເຜົ່າ ໃນການປົກປັກຮັກສາຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ.

⑦. ນຳພາການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງຕ່າງໆ ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງເສດ ຖະກິດ-ສັງຄົມ ແລະ ວັດທະນະທຳເຊັ່ນ: ຂະຫຍາຍຕາໜ່າງການສຶກສາ, ສາທາລະນະສຸກ, ກິລາກາຍຍະກຳ, ໄຟຟ້າ, ເສັ້ນທາງ ແລະ ອື່ນໆລົງສູ່ຮາກຖານປະຊາຊົນໃຫ້ທົ່ວເຖິງ.

⑧. ຮັບຜິດຊອບນຳພາປະຊາຊົນຫັນປ່ຽນແບບແຜນດຳລົງຊີວິດແບບທຳມະຊາດ ແລະ ເຄິ່ງທຳມະຊາດໄປສູ່ການຜະລິດເປັນສິນຄ້າ, ເຮັດການບໍລິການສ້າງລາຍຮັບເຂົ້າຄອບຄົວ ແກ້ໄຂຄວາມທຸກຍາກ, ສ້າງຄວາມພໍຢູ່, ພໍກິນ ແລະ ຄວາມຮັ່ງມີແກ່ຄອບຄົວ.

**ຄຳຖາມ 46: ຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຂອງສະມາຊິກພັກສະແດງອອກແນວໃດ?.**

**ຕອບ:** ຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຂອງສະມາ ຊິກພັກສະແດງອອກ ດັ່ງນີ້:

- ຕ້ອງເປັນຄົນມີຄວາມດຸໝັ່ນໃນການອອກແຮງງານ ເພື່ອທຳການຜະລິດ, ເຮັດທຸລະກິດຄ້າຂາຍ, ຕັ້ງໜ້າຫັນເອົາການຜະລິດແບບທຳມະຊາດໄປສູ່ການຜະລິດເປັນສິນຄ້າເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວຕົນເອງດີຂຶ້ນ.

- ຕ້ອງມີຈິດໃຈຖະນຸຖະໜອມສິ່ງທີ່ຕົນມີ, ສິ່ງທີ່ຕົນເຮັດໄດ້, ຜະລິດໄດ້, ມີຄວາມຮັກ ແລະ ນິຍົມຜະລິດຕະພັນສິນຄ້າທຸກປະເພດທີ່ຕົນຜະລິດໄດ້.

- ຕ້ອງສ້າງແນວຄິດນິຍົມຊົມໃຊ້ຜະລິດຕະພັນພາຍໃນໃຫ້ນັບມື້ນັບຫຼາຍຂຶ້ນ, ບໍ່ມີແນວຄິດ ເອື່ອຍອີງໃສ່ການຈັດຕັ້ງຂອງພັກ-ລັດ ແລະ ບໍ່ເອື່ອຍອີງໃສ່ການຊ່ວຍເຫຼືອຈາກຕ່າງປະເທດໃນການ ສ້າງສາພັດທະນາປະເທດຊາດ ແລະ ພັກພວກຕົນເອງ.

- ຕ້ອງເປັນເຈົ້າການຄົ້ນຄ້ວາຮ່ຳຮຽນ ແລະ ສະແຫວງຫາຄວາມຮູ້ດ້ວຍຕົນເອງ ເພື່ອພັດທະ ນາຕົນເອງ ແລະ ຄອບຄົວ ໃຫ້ຮັ່ງມີຜາສຸກ.

- ເປັນເຈົ້າການເຮັດການຜະລິດ ໂດຍອີງໃສ່ທ່າແຮງບົ່ມຊ້ອນຈາກຊັບພະຍາກອນທຳມະ ຊາດທີ່ມີຢູ່ຂອງທ້ອງຖິ່ນ ເພື່ອຜະລິດເປັນສິນຄ້າໃຫ້ນັບມື້ຫຼາຍຂຶ້ນ ເພື່ອສ້າງຄວາມຮັ່ງມີເຂັ້ມແຂງໃຫ້ ແກ່ປະເທດຊາດ.

<u>ຄຳຖາມ </u>47: ການຂະຫຍາຍພັກໃນເງື່ອນໄຂໃໝ່ຕ້ອງປະຕິບັດຕາມທິດທາງ ແລະ ທິດນຳແນວໃດ?

<u>ຕອບ: </u>ໜ້າທີ່ ແລະ ຄວາມຮັບຜິດຊອບທາງການເມືອງ ຂອງພັກເຮົານັບມື້ສູງຂຶ້ນ, ສະນັ້ນ ຈຶ່ງຮຽກຮ້ອງຕ້ອງການກຳລັງແຮງແຫ່ງການນຳພາຂອງພັກ ໃນທຸກຂະແໜງການ, ທຸກຂົງເຂດວຽກງານ, ມີຄວາມຈຳເປັນຕ້ອງມີກຳລັງສະມາຊິກພັກ ເປັນຜູ້ນຳພາຈັດຕັ້ງປະຕິບັດ ບັນດາມະຕິ, ຄຳສັ່ງຂອງພັກ ໃຫ້ເປັນຈິງ. ດັ່ງນັ້ນ, ຕ້ອງເພີ່ມທະວີເຮັດວຽກງານຂະຫຍາຍພັກຢ່າງຕັ້ງໜ້າ ແລະ ເລິກເຊິ່ງເຖິງຖອງ. ການຂະຫຍາຍພັກ ຕ້ອງຕິດພັນກັບການປັບປຸງ ແລະ ຍົກສູງຄຸນນະພາບຂອງສະມາຊິກພັກ ບົນພື້ນຖານຖືກຕ້ອງຕາມກົດລະບຽບຂອງພັກ, ຖືກຕ້ອງຕາມຂັ້ນຕອນການຂະຫຍາຍພັກ ແລະ ຖືກຕາມທິດນຳຂອງການຂະຫຍາຍພັກ, ເປັນຕົ້ນ

ແມ່ນ ຕ້ອງຮັບປະກັນຄຸນນະພາບ, ຂະຫຍາຍໃຫ້ໄດ້ຜູ້ທີ່ໜຸ່ມແໜ້ນຫ້າວຫັນ, ຜູ້ເຮັດວຽກມີປະສິດທິຜົນສູງ, ມີຄຸນສົມບັດປະຕິວັດ, ມີລະດັບຄວາມຮູ້, ຄວາມສາມາດມີຄວາມໜັກແໜ້ນໃນອຸດົມການສັງຄົມນິຍົມ ເພື່ອແບກຫາບພາລະກິດອັນໜັກໜ່ວງຂອງພັກ.

*ການຂະຫຍາຍພັກໃນໄລຍະໃໝ່ ຕ້ອງກຳແໜ້ນ 3 ທິດນຳ ດັ່ງນີ້:*

1. <u>ຂະຫຍາຍພັກ ຕ້ອງຖືເອົາຄຸນນະພາບເປັນກົກ.</u>

ຕ້ອງຮັບປະກັນເຮັດໃຫ້ຖັນແຖວສະມາຊິກພັກ ມີຄວາມໜັກແໜ້ນທາງດ້ານການເມືອງ, ມີອຸດົມການຖືກຕ້ອງ, ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ, ມີຄຸນສົມບັດສິນທຳປະຕິວັດ, ສາມາດເປັນແກນນຳ-ນຳພາທຸກຂະບວນການ, ຫຼີກເວັ້ນການຂະຫຍາຍພັກ ເອົາແຕ່ປະລິມານເປັນຈຸດໜັກ, ການຂະຫຍາຍພັກຕ້ອງດຳເນີນໄປໃຫ້ຖືກຕ້ອງຕາມມາດຖານ ແລະ ລະບຽບການທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ.

2. <u>ຂະຫຍາຍພັກ ຕ້ອງຕິດພັນກັບການປັບປຸງພັກ.</u>

ການຂະຫຍາຍພັກ ແມ່ນອີງຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ເຮັດໃຫ້ການເພີ່ມຂຶ້ນຂອງສະມາຊິກພັກ ເປັນການເພີ່ມກຳລັງແຮງຂອງພັກຢ່າງບໍ່ຢຸດຢັ້ງ, ຕິດພັນກັບການຂະຫຍາຍ ພັກຕ້ອງເອົາໃຈໃສ່ຍົກສູງຄຸນນະພາບຂອງສະມາຊິກພັກໃຫ້ສູງ ໂດຍເລີ່ມຈາກການບຳລຸງສິ່ງຊຸກຍູ້ເຂົ້າພັກໃຫ້ຖືກຕ້ອງ , ມີການສຶກສາອົບຮົມຍົກລະດັບດ້ານຕ່າງໆ ເປັນຕົ້ນແມ່ນ ຄວາມຮູ້ກ່ຽວກັບທາດແທ້ຂອງພັກ, ທັດສະນະຫຼັກໝັ້ນ, ການເປັນແບບຢ່າງ, ແບບແຜນດຳລົງຊີ ວິດ ແລະ ແບບວິທີນຳພາໃຫ້ສະມາຊິກພັກ ເປັນປົກກະຕິ, ພ້ອມກັນນັ້ນ ກໍຕ້ອງປັບປຸງເນື້ອໃນຮ່ວມຊີວິດການເມືອງຂອງໜ່ວຍພັກໃຫ້ດີ, ກວດກາການເຄື່ອນໄຫວຕົວຈິງຂອງສະມາຊິກພັກເປັນ ປະຈຳ, ເດັດດ່ຽວແກ້ໄຂທຸກປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ ໃນຖັນແຖວສະມາຊິກພັກໃຫ້ໄດ້ຢ່າງທັນການ.

3. <u>ຂະຫຍາຍພັກ ໃນຂະບວນການຂອງມະຫາຊົນ.</u>

ໜ່ວຍພັກ, ສະມາຊິກພັກ ຕ້ອງນຳພາມະຫາຊົນສ້າງຂະບວນການຕ່າງໆ ໂດຍມອບວຽກງານໃຫ້ມະຫາຊົນເພື່ອທົດສອບ, ສ້າງໂອກາດໃຫ້ມະຫາຊົນໄດ້ຝຶກຝົນຫຼໍ່ຫຼອມຕົນເອງ. ຜ່ານຂະບວນການວຽກງານຕົວຈິງນັ້ນ ຕ້ອງຊອກໃຫ້ໄດ້ມະຫາຊົນຜູ້ທີ່ດີເດັ່ນ, ຫ້າວຫັນນຳໜ້າ, ເປັນແບບຢ່າງເພື່ອສ້າງເປັນເປົ້າໝາຍຂະຫຍາຍເຂົ້າພັກ.

ຂະຫຍາຍພັກໃນໄລຍະໃໝ່ ຕ້ອງເຮັດຢ່າງຕັ້ງໜ້າ, ຮອບຄອບ ແລະ ລະມັດລະວັງທີ່ສຸດ, ບໍ່ຂະຫຍາຍຊະຊາຍ, ຕ້ອງມີຈຸດສຸມ, ມີທິດເລັ່ງໃຫ້ຈະແຈ້ງ, ຖືກກັບແນວທາງຊົນຊັ້ນຂອງພັກ. ການຕົກລົງເປົ້າໝາຍເພື່ອຂະຫຍາຍພັກ ແລະ ການພິຈາລະນາຮັບເອົາມະຫາຊົນເຂົ້າພັກ ຕ້ອງຄົ້ນຄວ້າປຶກສາຫາລືຕົກລົງເປັນໝູ່ຄະນະ ແລະ ກ່ອນພິຈາລະນາ ຕ້ອງໃຫ້ມະຫາຊົນປະກອບຄຳເຫັນ. ເປົ້າໝາຍໃດທີ່ເຫັນວ່າບໍ່ຈະແຈ້ງ ຕ້ອງຊອກຮູ້ ແລະ ກຳໃຫ້ໄດ້ເລິກເຊິ່ງກ່ອນ, ບໍ່ຄວນຟ້າວຟັ່ງ ເພາະວ່າ ຈະເຮັດໃຫ້ພວກຄົນບໍ່ດີເລັດລອດເຂົ້າໃນການຈັດຕັ້ງພັກ.

<u>ຄຳຖາມ</u> 48: ພັກນຳພາລັດສະແດງອອກແນວໃດ ?

<u>ຕອບ</u>: ພັກນຳພາລັດສະແດງອອກຜ່ານການເຄື່ອນໄຫວຂອງການຈັດຕັ້ງພັກ ແລະ ສະມາ ຊິກພັກທີ່ເຮັດວຽກຢູ່ໃນບັນດາອົງການລັດ ແລະ ອຳນາດການປົກຄອງຂັ້ນຕ່າງໆ, ແຕ່ບໍ່ແມ່ນພັກເຮັດໜ້າທີ່ແທນລັດ.

ຫາກແມ່ນພັກໃຫ້ຄວາມສຳຄັນຕໍ່ການເສີມຂະຫຍາຍບົດບາດຂອງລັດ ແລະ ອົງ ການປົກຄອງຂັ້ນດຽວກັນ, ພັກນຳພາລັດພາຍໃຕ້ຂອບເຂດລັດຖະທຳມະນູນ ແລະ ກົດໝາຍ; ຈັດ ວາງສັບຊ້ອນພະນັກງານ ຜູ້ທີ່ມີເງື່ອນໄຂ-ມາດຖານຖືກຕ້ອງ, ມີຄຸນສົມບັດສົມທຳປະຕິວັດ ແລະ ມີຄວາມຮູ້ຄວາມສາມາດ ເຂົ້າໃນຕຳແໜ່ງງານທີ່ສຳຄັນຂອງອົງການລັດ ແລະ ອຳນາດການປົກ ຄອງທ້ອງຖິ່ນ ເພື່ອເຮັດໃຫ້ລັດສາມາດຈັດຕັ້ງປະຕິບັດແນວທາງຂອງພັກໃຫ້ໄດ້ຮັບຜົນດີ ແລະ ໃຫ້ ພັກສາມາດນຳພາລັດ ແລະ ອົງການປົກຄອງຢ່າງໜັກແໜ້ນໂດຍຜ່ານພະນັກງານທີ່ໄດ້ຈັດວາງສັບ ຊ້ອນໃສ່ນັ້ນ.

<u>ຄຳຖາມ </u>49: ພັກກຳອຳນາດແມ່ນກຳອັນໃດແດ່ ?

<u>ຕອບ</u>: ປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະຊີ້ນຳກ່ຽວກັບການກຳອຳນາດ ຂອງ ພັກເຮົາໄວ້ດັ່ງນີ້:

1. ກຳແໜ້ນປະຊາຊົນບັນດາເຜົ່າ-ບັນດາຊັ້ນຄົນ, ຖືປະຊາຊົນເປັນກົກ-ເປັນກຳລັງຊະນະ ເລີດ ຂອງການປະຕິວັດ ແລະ ທັງເປັນເປົ້າໝາຍຮັບໃຊ້ ຂອງພັກ; ພັກຕ້ອງເຮັດທຸກສິ່ງທຸກຢ່າງ ເພື່ອເພີ່ມທະວີຄວາມສາມັກຄີປອງດອງ ລະຫວ່າງເຜົ່າ, ລະຫວ່າງຊັ້ນຄົນ ເພື່ອສ້າງຄວາມເປັນປຶກ ແຜ່ນ ແລະ ຄວາມເປັນເອກະພາບ ຂອງຊາດ; ຕ້ອງເສີມຂະຫຍາຍໃຫ້ໄດ້ກຳລັງແຮງສັງລວມ ຂອງ ປະຊາຊົນ ບັນດາຊັ້ນຄົນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

2. ຕ້ອງກຳແໜ້ນບັນດາການຈັດຕັ້ງທັງໝົດ ໃນລະບົບການເມືອງຂອງລະບອບປະຊາທິປະ ໄຕ ປະຊາຊົນ, ໂດຍສະເພາະ ແມ່ນບັນດາອົງການອຳນາດແຫ່ງລັດ ເພາະວ່າ ລັດແມ່ນອົງການປະຕິ ບັດສິດອຳນາດ, ທັງເປັນຜູ້ຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ໃຫ້ເປັນຈິງ.

3. ຕ້ອງກຳແໜ້ນວຽກງານການເມືອງແນວຄິດ ແລະ ທາງສຽງສັງຄົມ; ກຳແໜ້ນລະບົບສື່ ມວນຊົນ.

4. ກຳແໜ້ນເສດຖະກິດ, ພັດທະນາເສດຖະກິດ ໃຫ້ມີຜົນສຳເລັດ ເພື່ອເປັນພື້ນຖານທາງວັດ ຖຸ ໃຫ້ແກ່ການພັດທະນາດ້ານອື່ນໆ.

5. ຕ້ອງກຳແໜ້ນ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ກຳລັງປະກອບອາວຸດປະຊາຊົນ ເພື່ອ ມີຄວາມສາມາດພຽງພໍ ໃນການປົກປ້ອງອະທິປະໄຕຂອງຊາດ, ຮັບປະກັນສະຖຽນລະພາບ ຄວາມ ສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ໃຫ້ໜັກແໜ້ນ.

6. ກຳແໜ້ນວຽກງານຈັດຕັ້ງ ການຈັດວາງສັບຊ້ອນພະນັກງານ ຕິດພັນກັບການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານ, ກຳແໜ້ນວຽກງານຕິດຕາມກວດກາ ຂອງພັກ.

7. ຕ້ອງກຳແໜ້ນຍຸດທະສາດ ແລະ ຍຸດໂທບາຍການຕ່າງປະເທດ ໃນການພົວພັນຮ່ວມມື ກັບພາຍນອກຕາມທິດນຳເພີ່ມມິດ-ຫຼຸດຜ່ອນສັດຕູ.

ລວມຄວາມແລ້ວ ພັກກຳອຳນາດ ຕ້ອງຢຶດໝັ້ນທິດນຳທີ່ວ່າ: "ພັກນຳພາ, ລັດຄຸ້ມຄອງ, ປະ ຊາຊົນເປັນເຈົ້າ".

<u>ຄຳຖາມ </u>50: ພັກນຳພາເດັດຂາດໂດຍກົງ ແລະ ຮອບດ້ານຕໍ່ວຽກງານປ້ອງກັນ ຊາດ - ປ້ອງກັນຄວາມສະຫງົບໝາຍຄວາມວ່າແນວໃດ ?

ຕອບ: ພັກນໍາພາກໍາລັງກັນຊາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບເດັດຂາດ, ໂດຍກົງ ແລະ ຮອບດ້ານໝາຍຄວາມວ່າ: ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພາລະກິດຕໍ່ສູ້ປະຕິວັດ, ພັກເຮົາໄດ້ສ້າງຕັ້ງ, ນໍາພາ ແລະ ກໍາກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງ ເດັດຂາດໂດຍກົງ ແລະ ຮອບດ້ານ ບໍ່ອະນຸຍາດໃຫ້ໃຜກໍາ ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ, ພັກມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເອົາໃຈ ໃສ່ກໍ່ສ້າງ ແລະ ປັບປຸງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນເຂັ້ມ ແຂງ, ມອບໝາຍໜ້າທີ່ການເມືອງອັນໜັກໜ່ວງ, ຫຍຸ້ງຍາກ, ສັບສົນ ແລະ ເຕັມໄປດ້ວຍຄວາມເສຍສະຫຼະແຕ່ມີກຽດສະຫງ່າໃຫ້ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເພື່ອປົກປ້ອງພັກ, ປົກປ້ອງອໍານາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມຢູ່ດີກິນດີຂອງປະຊາຊົນລາວບັນດາເຜົ່າ.

ຄໍາຖາມ 51: ພັກນໍາພາສ້າງຄວາມໝັ້ນຄົງໃຫ້ແກ່ລະບອບປະຊາທິປະໄຕ ປະຊາຊົນ ມີແນວໃດ ?

ຕອບ: ພັກນໍາພາສ້າງຄວາມໝັ້ນຄົງໃຫ້ແກ່ລະບອບປະຊາທິປະໄຕ ປະຊາຊົນ ດ້ວຍການ ນໍາພາ ສ້າງຄວາມໝັ້ນຄົງໃນ 5 ດ້ານ ຄື: ຄວາມໝັ້ນຄົງທາງດ້ານການເມືອງ, ດ້ານເສດຖະກິດ, ດ້ານສັງຄົມ, ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມໝັ້ນຄົງດ້ານການພົວພັນຮ່ວມມືກັບນາໆຊາດ.

ໜຶ່ງ: ຄວາມໝັ້ນຄົງທາງດ້ານການເມືອງ: ຄະນະພັກທຸກຂັ້ນຕ້ອງເພີ່ມທະວີການສຶກສາອົບ ຮົມປະຊາຊົນບັນດາເຜົ່າໃຫ້ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ອຸດົມການສັງຄົມນິຍົມ; ເອົາໃຈໃສ່ຊີ້ນໍາ-ນໍາພາປັບປຸງກົງຈັກການຈັດຕັ້ງຂອງບັນດາອົງການອໍານາດແຫ່ງລັດ ແລະ ບັນດາອົງການຈັດຕັ້ງທາງການເມືອງ-ສັງຄົມ ໃຫ້ໜັກແໜ້ນເຂັ້ມແຂງ ຮັບປະກັນການປະຕິບັດພາລະບົດບາດຂອງຕົນໃຫ້ບັນລຸຜົນສໍາເລັດ, ຕັ້ງໜ້າສຶກສາອົບຮົມພົນລະເມືອງລາວທຸກຄົນ ໃຫ້ມີຄວາມຕື່ນຕົວສູງ ແລະ ເປັນເຈົ້າການເຂົ້າຮ່ວມໃນວຽກງານຂອງພັກ, ຂອງລັດ.

ສອງ: ຄວາມໝັ້ນຄົງທາງດ້ານເສດຖະກິດ: ພັກເຮົາຕ້ອງນໍາພາການສ້າງລະບົບເສດຖະກິດ ແຫ່ງຊາດໃຫ້ຂະຫຍາຍຕົວຢ່າງໝັ້ນທ່ຽງ ຕາມທິດທີ່ຍືນຍົງບົນພື້ນຖານໂຄງປະກອບເສດຖະກິດ ທີ່ມີຫຼາຍພາກສ່ວນ ແລະ ຮູບການກໍາມະສິດ, ຫຼາຍຂະແໜງການຜະລິດ ແລະ ຫຼາຍປະເພດຜະລິດ ຕະພັນ; ຫຼາຍຮູບການຈັດຕັ້ງທຸລະກິດການຜະລິດ ແລະ ການບໍລິການທີ່ຕອບສະໜອງຜົນປະໂຫຍດ ຂອງແຕ່ລະພາກສ່ວນຢ່າງສົມເຫດ ແລະ ເປັນທໍາ.

ສາມ: ຄວາມໝັ້ນຄົງທາງສັງຄົມ: ພັກເຮົາ ກໍຄື ຄະນະພັກທຸກຂັ້ນຕ້ອງເອົາໃຈໃສ່ສຶກສາອົບຮົມໃຫ້ປວງຊົນລາວທັງຊາດມີຄວາມສາມັກຄີປອງດອງ, ດໍາລົງຊີວິດ, ທໍາມາຫາກິນດ້ວຍຄວາມສະເໝີພາບ ແລະ ຍຸຕິທໍາ, ຕັ້ງໜ້າປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ມີຄວາມສີວິໄລທາງດ້ານວັດຖຸ ແລະ ຈິດໃຈ.

ສີ່: ຄວາມເຂັ້ມແຂງດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ພັກຕ້ອງນໍາພາສ້າງ ແລະ ປັບປຸງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມເຂັ້ມແຂງສາມາດປົກປັກຮັກສາອໍາ ນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ຢ່າງໝັ້ນຄົງ; ມີຄວາມເດັດຂາດໃນ ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນຢູ່ໃນສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

ຫ້າ: ຄວາມໝັ້ນຄົງດ້ານການພົວພັນຮ່ວມມືກັບສາກົນ: ພັກຕ້ອງຢຶດໝັ້ນ ແລະ ປະຕິບັດ ຢ່າງເໜີຕົ້ນສະເໝີປາຍແນວທາງການຕ່າງປະເທດເອກະລາດ ສັນຕິພາບ ມິດຕະພາບ ແລະ ຮ່ວມ ມືແນໃສ່ເສີມສ້າງໄມຕີຈິດ ມິດຕະພາບ ແລະ ຄວາມໄວ້ເນື້ອເຊື່ອໃຈກັບນາໆຊາດໃຫ້ນັບມື້ກວ້າງ ຂວາງ ເພື່ອເຊີດຊູບົດບາດອິດທິພົນຂອງ ສປປ ລາວ ແລະ ດຶງດູດເອົາການສະໜັບສະໜູນ, ຊ່ວຍເຫຼືອຂອງຕ່າງປະເທດ ໃຫ້ນັບມື້ຫຼາຍຂຶ້ນ.

ສັງລວມແລ້ວ: ເພື່ອສ້າງຄວາມໝັ້ນຄົງໃຫ້ແກ່ລະບອບປະຊາທິປະໄຕ ປະຊາຊົນ; ຄະນະພັກ-ອຳນາດການປົກຄອງທຸກຂັ້ນຕ້ອງເພີ່ມທະວີການຊີ້ນຳ-ນຳພາຂອງຕົນໃນການປະຕິບັດທິດນຳ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງເປັນຫົວ ໜ່ວຍພັດທະນາ ໃຫ້ເປັນຈິງ. ຕ້ອງເຂົ້າໃຈເປັນເອກະພາບນຳກັນວ່າ ການສ້າງຄວາມໝັ້ນຄົງໃຫ້ແກ່ລະບອບປະຊາທິປະໄຕ ປະຊາຊົນ ຕ້ອງເລີ່ມຈາກການກໍ່ສ້າງຮາກຖານຢູ່ຂັ້ນບ້ານໃຫ້ໜັກແໜ້ນເຂັ້ມ ແຂງ ຕິດພັນກັບການສ້າງບ້ານພັດທະນາ ແລະ ຖືອັນນີ້ເປັນມາດຕະການຍຸດທະສາດທີ່ຕ້ອງໄດ້ປະຕິບັດຕໍ່ໆໄປຢ່າງແຂງແຮງ, ຕໍ່ເນື່ອງ ແລະ ທົ່ວເຖິງທຸກຮາກຖານ.

<u>ຄຳຖາມ</u> 52: ພັກນຳພາສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ແມ່ນແນວ ໃດ ?

<u>ຕອບ</u>: ພັກນຳພາສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໝາຍຄວາມວ່າ ພັກຕ້ອງເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາຂອງຕົນເຂົ້າໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍເສດຖະກິດຕະຫຼາດ:

- ຢຶດໝັ້ນ ແລະ ຮັບຮູ້ການຄົງຕົວຂອງຫຼາຍພາກສ່ວນເສດຖະກິດຢ່າງຍາວນານ, ຖືທຸກພາກສ່ວນເສດຖະກິດເປັນກຳລັງແຮງຂອງຊາດ, ມີນະໂຍບາຍຊຸກຍູ້ສົ່ງເສີມ ແລະ ໃຫ້ຄວາມສະເໝີພາບຕໍ່ທຸກພາກສ່ວນເສດຖະກິດຢ່າງສະເໝີຕົ້ນສະເໝີປາຍ.

- ກຳນົດ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍເສດຖະກິດທີ່ຖືເອົາກຳມະສິດຂອງລັດເປັນພື້ນຖານ ໂດຍສະເພາະແມ່ນກຳມະສິດຂອງລັດຕໍ່ຊັບສິນສ່ວນລວມຂອງວົງຄະນະຍາດແຫ່ງຊາດ.

- ປະຕິບັດນະໂຍບາຍສ້າງ ແລະ ປັບປຸງເສດຖະກິດຂອງລັດ, ລັດວິສາຫະກິດໃຫ້ມີປະສິດ ທິຜົນສູງ ແລະ ມີຄວາມເຂັ້ມແຂງສາມາດເປັນກຳລັງແຮງພື້ນຖານໃນລະບົບເສດຖະກິດແຫ່ງຊາດ.

- ຍົກສູງບົດບາດ ແລະ ຄວາມສາມາດນຳພາລັດໃນການປະຕິບັດບົດບາດໃນການດັດ ສົມ ແລະ ຄຸ້ມຄອງຕະຫຼາດ ເພື່ອເສີມຂະຫຍາຍດ້ານຕັ້ງໜ້າ ແລະ ຈຳກັດດ້ານຫຍໍ້ທໍ້ຂອງເສດຖະ ກິດຕະຫຼາດ.

<u>ຄຳຖາມ</u> 53: ພັກນຳພາການເຊື່ອມໂຍງສາກົນແມ່ນແນວໃດ ?

<u>ຕອບ</u>: ສະພາບການຂອງໂລກ ແລະ ພາກພື້ນໃນປັດຈຸບັນທີ່ມີການຜັນແປໄປຢ່າງສັບສົນ, ໄວວາ ແລະ ສະຫຼັບສັບຊ້ອນ ໄດ້ສົ່ງຜົນສະທ້ອນຕໍ່ບົດບາດການນຳພາ ຂອງພັກເຮົາໃນການສ້າງ ສາພັດທະນາປະເທດຊາດ. ພັກເຮົາຖືວ່າການເຊື່ອມໂຍງສາກົນແມ່ນທ່າແຮງໜຶ່ງທີ່ເປັນພື້ນຖານ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ. ການເຊື່ອມ ໂຍງກັບສາກົນ ແມ່ນເລັ່ງໃສ່ເພື່ອສ້າງສະພາບແວດລ້ອມພາຍນອກອັນເປັນສິ່ງອຳນວຍໃຫ້ແກ່ ການດຳເນີນພາລະກິດການປ່ຽນແປງໃໝ່. ໝາຍຄວາມວ່າ: ມີການພົວພັນມິດຕະພາບ ແລະ ມີ ການຮ່ວມມືອັນເປັນປົກກະຕິດີກັບປະເທດຕ່າງໆໃນທົ່ວໂລກບົນພື້ນຖານ 5 ຫຼັກການຢູ່ຮ່ວມກັນ ໂດຍສັນຕິ, ສ້າງຄວາມໄວ້ເນື້ອເຊື່ອໃຈຕໍ່ກັນ.

ການເຊື່ອມໂຍງສາກົນ (ການພົວພັນກັບຕ່າງປະເທດ) ແມ່ນເສີມເພື່ອຂະຫຍາຍພາບພົດ ອັນດີງາມ ແລະ ເຊີດຊູບົດບາດຂອງ ສປປ ລາວ ໃຫ້ສູງຂຶ້ນໃນເວທີສາກົນ.

ການເຊື່ອມໂຍງສາກົນ ແມ່ນເພື່ອຍາດເອົາຄວາມເປັນມິດໄມຕີ, ການສະໜັບສະໜູນ, ການຮ່ວມມື ຊ່ວຍເຫຼືອຈາກບັນດາເພື່ອນມິດສາກົນນັບມື້ນັບກວ້າງຂວາງ, ເປັນຕົ້ນແມ່ນທຶນຮອນ, ເຕັກນິກ, ເຕັກໂນໂລຢີ, ບົດຮຽນຕ່າງໆເພື່ອມາພັດທະນາປະເທດເຮົາ.

ການເຊື່ອມໂຍງສາກົນ ແມ່ນການປະກອບສ່ວນອັນເໝາະສົມເຂົ້າໃນພາລະກິດສັນຕິພາບ ເອກະລາດແຫ່ງຊາດ ການຮ່ວມມືພັດທະນາ ແລະ ຄວາມກ້າວໜ້າທາງສັງຄົມຂອງບັນດາປະຊາຊາດໃນໂລກ.

ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ຢືນຢັນຢ່າງໜັກແໜ້ນວ່າ:

- ຍຶດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ຕັ້ງໜ້າເປັນເຈົ້າການ ສົ່ງເສີມການຮ່ວມມືກັບຕ່າງປະເທດ ແບບຫຼາຍທິດຫຼາຍຝ່າຍ, ຫຼາຍລະດັບ, ຫຼາຍຮູບ ບົນພື້ນຖານການເຄົາລົບເຊິ່ງກັນ ແລະ ກັນຕ່າງຝ່າຍຕ່າງມີ ຜົນປະໂຫຍດ.

- ປະຕິບັດນະໂຍບາຍການພົວພັນດ້ານການເມືອງ, ການທູດ ຕິດພັນກັບການຮ່ວມມືດ້ານເສດຖະກິດກັບສາກົນ, ສ້າງສະພາບແວດລ້ອມພາຍນອກທີ່ອຳນວຍໃຫ້ການພັດທະນາເສດຖະ ກິດ-ສັງຄົມ ແລະ ການປົກປັກຮັກສາປະເທດຊາດ.

ໃນທັດສະນະພື້ນຖານ, ການພົວພັນສາກົນ ທີ່ພະນັກງານ, ສະມາຊິກພັກເຮົາຕ້ອງກຳແໜ້ນ:

( ຕ້ອງເດັດຂາດໃນຫຼັກໝັ້ນຍຸດທະສາດ ໝາຍຄວາມວ່າ: ການເຄື່ອນໄຫວພົວພັນສາກົນທັງໝົດຕ້ອງຮັບໃຊ້ໃຫ້ແກ່ການປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດ ທະນາປະເທດຊາດ; ຮັບໃຊ້ໃຫ້ແກ່ການສ້າງທ່າ ແລະ ກຳລັງໃຫ້ເຂັ້ມແຂງ ບົນພື້ນຖານຈິດໃຈເອກະ ລາດແຫ່ງຊາດ ເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເດັດຂາດໃນການປົກປັກຮັກ ສາເອກະລາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ.

( ຕ້ອງຄ່ອງແຄ້ວນີ້ມນວນໃນຍຸດໂທບາຍ. ໝາຍຄວາມວ່າ: ເປັນເຈົ້າການຍາດແຍ່ງ ແລະ ສ້າງກາລະໂອກາດ, ກຳແໜ້ນເປົ້າໝາຍໃຫ້ຈະແຈ້ງ (ເປົ້າໝາຍໃດຈະຍາດແຍ່ງເອົາ ແລະ ເປົ້າໝາຍໃດຈະຕໍ່ສູ້) ເພີ່ມທະວີສາຍພົວພັນມິດຕະພາບ ແລະ ຮ່ວມມືກັບປະເທດຕ່າງໆ, ການຈັດ ຕັ້ງທີ່ກ້າວໜ້າ ບົນພື້ນຖານຢູ່ຮ່ວມກັນໂດຍສັນຕິ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ກຳແໜ້ນທິດນຳ “ເພີ້ມມິດຫຼຸດຜ່ອນສັດຕູ”.

<u>ຄຳຖາມ</u> 54: ແບບແຜນນຳພາຂອງພັກທີ່ແທດຕົວຈິງສະແດງອອກແນວໃດ ?

<u>ຕອບ</u>: ແບບແຜນນຳພາທີ່ແທດຕົວຈິງສະແດງອອກດັ່ງນີ້:

- ແບບແຜນນຳພາແທດຕົວຈິງ ແມ່ນແບບແຜນນຳພາທີ່ຕິດພັນກັບຮາກຖານປະຊາຊົນ (ມະຫາຊົນ) ຫຼື ຕິດພັນກັບການແກ້ໄຂບັນຫາ ຕົວຈິງທີ່ເປັນການກົດໜ່ວງຖ່ວງດຶງການນຳພາຂອງພັກ. ແມ່ນແບບແຜນການນຳພາທີ່ອີງໃສ່ກຳລັງແຮງຂອງປະຊາຊົນ (ມະຫາຊົນ) ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອນຳເອົາຜົນປະໂຫຍດຕົວຈິງມາໃຫ້ມະຫາຊົນ. ແບບແຜນນຳພາແທດຕົວຈິງແມ່ນມູນເຊື້ອອັນໜຶ່ງຂອງພັກເຮົາ, ໃນເງື່ອນໄຂໃໝ່ນີ້ແບບແຜນດັ່ງກ່າວຕ້ອງສະແດງອອກໃນການນຳພາ- ຊີ້ນຳຂອງພັກກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຫັນພະນັກງານສະມາຊິກພັກລົງສູ່ຮາກຖານ ເພື່ອນຳພາປະຊາຊົນທຳການຜະລິດ ເປັນສິນຄ້າ-ເຮັດການບໍລິການ ສ້າງລາຍໄດ້ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ສ້າງຄວາມພໍຢູ່ພໍກິນ ແລະ ຄວາມຮັ່ງມີແກ່ຄອບຄົວ ຕິດພັນກັບການພັດທະນາຊົນນະບົດ - ການສ້າງບ້ານພັດທະນາ.

ຄຳຖາມ 55: ເປົ້າໝາຍສະຫັດສະວັດດ້ານການພັດທະນາທີ່ຕ້ອງສູ້ຊົນຈັດຕັ້ງປະຕິ ບັດໃນປີ 2015 ມີອັນໃດ ແດ່ ?

ຕອບ: ເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015 ມີ 9 ເປົ້າໝາຍດັ່ງນີ້:

+ ເປົ້າໝາຍທີໜຶ່ງ: ຕ້ອງລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ, ແຕ່ລະບ້ານຕ້ອງສູ້ຊົນ ຫຼຸດຜ່ອນຈຳນວນຄອບຄົວທຸກຍາກລົງ ເພື່ອເຮັດໃຫ້ຄອບຄົວທຸກຍາກຢູ່ປະເທດເຮົາໃຫ້ຍັງເຫຼືອຕ່ຳ ກວ່າ 10% ຂອງຈຳນວນຄອບຄົວທັງໝົດໃນປີ 2015; ສ່ວນໄພອຶດຫິວນັ້ນແມ່ນພວກເຮົາສາມາດແກ້ໄຂໄດ້ໂດຍພື້ນຖານ.

+ ເປົ້າໝາຍທີສອງ: ໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ, ໝາຍຄວາມວ່າ ຕ້ອງໃຫ້ເດັກຢູ່ໃນເກນອາຍຸຮຽນໜັງສືໃນທົ່ວປະເທດຕ້ອງໄດ້ຈົບຊັ້ນປະຖົມ. ດັ່ງນັ້ນ, ແຕ່ລະຄອບ ຄົວ, ແຕ່ລະບ້ານຕ້ອງໃຫ້ເດັກເຖິງກະສຽນອາຍຸຮຽນໜັງສືແລ້ວໄປເຂົ້າໂຮງຮຽນ, ຕ້ອງປະຕິບັດລະ ບົບການສຶກສາຊັ້ນປະຖົມແບບບັງຄັບໃຫ້ເປັນຈິງ, ຕ້ອງເອົາໃຈໃສ່ການລຶບລ້າງຄວາມບໍ່ຮູ້ໜັງສື ຂອງຜູ້ໃຫຍ່ທີ່ມີອາຍຸແຕ່ 15 - 24 ປີ ແລະ ເຮັດໃຫ້ອັດຕາສ່ວນຄົນທີ່ຮູ້ໜັງສືເພີ່ມຂຶ້ນຮອດ 99%.

+ ເປົ້າໝາຍທີສາມ: ສົ່ງເສີມບົດບາດຍິງ - ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ສິ່ງທີ່ຕ້ອງເອົາໃຈໃສ່ຫຼາຍທີ່ສຸດ ສຳລັບການບັນລຸເປົ້າໝາຍນີ້ແມ່ນເຮັດ ໃຫ້ອັດຕາສ່ວນຂອງເດັກ ຍິງທີ່ ໄດ້ເຂົ້າຮຽນໜັງສືໃນທຸກລະບົບການສຶກສານັ້ນເພີ່ມຂຶ້ນເມື່ອທຽບກັບເດັກຊາຍ.

+ ເປົ້າໝາຍທີສີ່: ຫຼຸດຜ່ອນການເສຍຊີວິດຂອງເດັກ ໂດຍສະເພາະແມ່ນເດັກເກີດໃໝ່ທີ່ມີ ອາຍຸຕ່ຳກວ່າ 1 ປີ ແລະ ເດັກທີ່ມີອາຍຸຕ່ຳກວ່າ 5 ປີ. ສະນັ້ນ, ແຕ່ລະຄອບຄົວຕ້ອງເອົາເດັກໄປສັກ ຢາ - ຢອດຢາ, ແມ່ຍິງຖືພາໄດ້ໄປເກີດລູກຢູ່ໂຮງໝໍ, ຢູ່ສຸກສາລາ ແລະ ສະຖານທີ່ເກີດລູກທີ່ຈັດໄວ້ ສະເພາະໂດຍບໍ່ໄດ້ເສຍຄ່າ; ປະຕິບັດການສັກຢາ, ຢອດຢາກັນພະຍາດເດັກໃຫ້ທົ່ວເຖິງທຸກເປົ້າ ໝາຍ.

+ ເປົ້າໝາຍທີຫ້າ: ສົ່ງເສີມສຸຂະພາບຂອງແມ່; ໝາຍຄວາມວ່າ ແມ່ຍິງຖືພາເສຍຊີວິດ ໜ້ອຍທີ່ສຸດໃນເວລາເກີດລູກ. ພາຍຫຼັງເກີດແລ້ວຕ້ອງໄດ້ຮັບການດູແລເບິ່ງແຍງສຸຂະພາບເພື່ອມີ ເງື່ອນໄຂໄດ້ລ້ຽງດູລູກຂອງຕົນໃຫ້ເຕີບໃຫຍ່ເຂັ້ມແຂງ

+ ເປົ້າໝາຍທີຫົກ: ສະກັດກັ້ນການແຜ່ລະບາດຂອງພະຍາດເອດ (HIV), ໄຂ້ຍຸງ ແລະ ພະ ຍາດຕິດຕໍ່ອື່ນໆ. ແຕ່ລະບ້ານຕ້ອງສຸມໃສ່ກຳຈັດການລະບາດຂອງໄຂ້ຍຸງ (ໄຂ້ຍຸງລາຍ, ໄຂ້ເລືອດ ອອກ) ຕາມລະດູການ; ຕ້ອງເພີ່ມທະວີໂຄສະນາສຸຂະສຶກສາ ຕິດພັນກັບການປຸກລະດົມຈັດຕັ້ງ ຂະບວນການຕ້ານ ແລະ ກຳຈັດໄຂ້ຍຸງ, ພະຍາດຕິດຕໍ່ອື່ນໆຢ່າງເປັນປົກກະຕິ

+ ເປົ້າໝາຍທີເຈັດ: ຮັບປະກັນຄວາມຍືນຍົງຂອງສິ່ງແວດລ້ອມ. ສຳລັບການບັນລຸເປົ້າ ໝາຍນີ້, ສິ່ງທີ່ຕ້ອງໄດ້ເອົາໃຈໃສ່ແມ່ນການປົກປັກຮັກສາ - ຟື້ນຟູບູລະນະປ່າໄມ້, ການປູກໄມ້ເພີ່ມ ເນື້ອທີ່ສີຂຽວ ແລະ ຮັກສາສັດປ່າ - ສັດນ້ຳ ທີ່ພວກເຮົາມີຢູ່ໃນປັດຈຸບັນໃຫ້ເພີ່ມຄວາມອຸດົມຮັ່ງມີ ຂຶ້ນຕື່ມ, ບໍ່ໃຫ້ຫຼຸດໜ້ອຍລົງ. ພ້ອມກັນນັ້ນ ກໍຕ້ອງສ້າງເງື່ອນໄຂໃຫ້ປະຊາຊົນເຮົາໄດ້ຊົມໃຊ້ນ້ຳສະ ອາດໃຫ້ ຫຼາຍຂຶ້ນດ້ວຍການຂຸດສ້າງ,ເຈາະນ້ຳບາດານ, ສ້າງອ່າງເກັບນ້ຳ, ເຮັດນ້ຳປະປາຊຸມຊົນ ແລະ ອື່ນໆ ລວມທັງການນຳໃຊ້ວິດຖ່າຍ.

\+ ເປົ້າໝາຍທີແປດ: ສ້າງຄູ່ຮ່ວມງານດ້ານການພັດທະນາໃນຂອບເຂດທົ່ວໂລກ. ອັນນີ້ ແມ່ນ ພົວພັນເຖິງການປະຕິບັດເງື່ອນໄຂຕ່າງໆ ສຳລັບການຮ່ວມມືກັບຕ່າງປະເທດ ແລະ ອີງການ ຈັດຕັ້ງສາກົນເພື່ອ ໄດ້ຮັບການຊ່ວຍເຫຼືອສຳລັບການພັດທະນາ ແລະ ເຊື່ອມໂຍງເສດຖະກິດກັບ ຕ່າງປະເທດ.

\+ ເປົ້າໝາຍທີເກົ້າ: ຫຼຸດຜ່ອນກະທົບຈາກລູກລະເບີດບໍ່ທັນແຕກໃນ ສປປ ລາວ. ການແກ້ ໄຂ ບັນຫານີ້ມີຄວາມສຳຄັນທີ່ສຸດເພາະວ່າແຕ່ລະປີຍັງມີເດັກນ້ອຍ ແລະ ຜູ້ໃຫ່ຍໄດ້ຮັບເຄາະຮ້າຍ ຈາກລູກລະເບີດ ບໍ່ທັນແຕກເປັນຈຳນວນຫຼວງຫຼາຍ. ສະນັ້ນ, ຫຼຸດຜ່ອນຜົນກະທົບໄດ້ຫຼາຍເທົ່າໃດກໍ ຍິ່ງເປັນຜົນດີສຳລັບການ ສ້າງສາພັດທະນາປະເທດຊາດຂອງພວກເຮົາ.

<u>ຄຳຖາມ </u>56: ເນື້ອໃນສ້າງບາດກ້າວບຸກທະລຸທັງ 4 ດ້ານມີຫຍັງແດ່ ?

<u>ຕອບ</u>: ເນື້ອໃນສ້າງບາດກ້າວບຸກທະລຸທັງ 4 ດ້ານມີດັ່ງນີ້:

ໜຶ່ງ: ຕ້ອງບຸກທະລຸໃຫ້ໄດ້ທາງດ້ານຈິນຕະນາການ.

\- ການບຸກທະລຸທາງດ້ານຈິນຕະນາການ ກ່ອນອື່ນແມ່ນຕ້ອງລຶບລ້າງແນວຄິດຮັກສາເດີມ, ຂີ້ຄ້ານ, ມັກງ່າຍທີ່ເປັນກຳແພງອັດຕັນຄວາມກ້າວໜ້າໃນການທຳມາຫາກິນທີ່ກີດໜ່ວງຜົນສຳເລັດ ໃນການເຮັດວຽກ ງານ ຕົວຢ່າງ: ຄວາມຊິນເຄີຍບໍ່ປ່ຽນແປງໃນການເຮັດວຽກງານ, ເຄີຍເຮັດແນວໃດ ກໍເຮັດແນວນັ້ນ, ບໍ່ມີ ການພັດທະນາໃນການເຮັດວຽກງານ, ຜູ້ໃດແນະນຳມາກໍບໍ່ເອົາຕາມ, ເອົາແຕ່ ທັດສະນະຂອງຕົນເອງ.

ສອງ: ຕ້ອງບຸກທະລຸຢ່າງແຂງແຮງດ້ານການພັດທະນາຊັບພະຍາກອນມະນຸດ, ໂດຍສະ ເພາະ ດ້ານ ການກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້ຄວາມສາມາດໃນດ້ານຕ່າງໆຂອງພະນັກ ງານ ໃຫ້ສົມຄູ່ກັບຄວາມ ຮຽກຮ້ອງຕ້ອງການ ຂອງການພັດທະນາ.

\- ພະນັກງານມີບົດບາດຕັດສິນຕໍ່ຜົນໄດ້-ຜົນເສຍ ຂອງການຈັດຕັ້ງປະຕິບັດແນວທາງຂອງ ພັກ; ແນວທາງຂອງພັກຈະຖືກຕ້ອງປານໃດກໍຕາມ, ຖ້າພະນັກງານບໍ່ມີຄວາມຮູ້ຄວາມສາມາດນຳ ເອົາແນວທາງໄປ ຈັດຕັ້ງປະຕິບັດ ແນວທາງດັ່ງກ່າວກໍຖືກຢູ່ພຽງແຕ່ໃນໜ້າເຈ້ຍເທົ່ານັ້ນ. ສະນັ້ນ, ມີ ຄວາມຈຳເປັນຕ້ອງບຸກ ທະລຸຢ່າງແຂງແຮງ ໃນການພັດທະນາຊັບພະຍາກອນມະນຸດດ້ວຍ 3 ດ້ານ ຄື:

( ບຸກທະລຸດ້ານປະລິມານ ຫຼື ຈຳນວນໃຫ້ພຽງພໍໂດຍພື້ນຖານ.

( ບຸກທະລຸດ້ານຄຸນນະພາບ ໃຫ້ດີຂຶ້ນ, ສູງຂຶ້ນ.

( ບຸກທະລຸລະບຽບການຕ່າງໆກ່ຽວກັບພະນັກງານ ເປັນຕົ້ນ: ລະບອບການເລືອກເຟັ້ນ, ການນຳໃຊ້ ແລະ ການຄຸ້ມຄອງໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ສາມ: ຕ້ອງບຸກທະລຸໃນການແກ້ໄຂລະບຽບການບໍລິຫານ - ຄຸ້ມຄອງຂອງລັດທີ່ຍັງກີດໜ່ວງ ການ ທຳມາຫາກິນ ແລະ ການຜະລິດເປັນສິນຄ້າຂອງປະຊາຊົນ ກໍຄືການຜະລິດທຸລະກິດຂອງຜູ້ປະ ກອບການນັກ ລົງທຶນທັງພາຍໃນ ແລະ ຕ່າງປະເທດໃຫ້ຕົກໄປຢ່າງຂາດຕົວ, ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວ ຂອງເຂົາເຈົ້າ ເພື່ອສ້າງຜົນຜະລິດໃຫ້ນັບມື້ຫຼາຍຂຶ້ນ, ເປີດກວ້າງບໍລິການ ທີ່ມີຫຼາຍຮູບ ຫຼາຍສີ, ໃຫ້ຊາວກະ ສິກອນ ແລະ ຜູ້ທຳການຄ້າຂາຍສາມາດເອົາຂອງທີ່ຜະລິດໄດ້ໄປ ຂາຍຢ່າງສະດວກໂດຍບໍ່ມີສິ່ງກີດຂວາງ ແລະ ການເກັບຄ່າຕ່າງໆທີ່ບໍ່ຈຳເປັນ.

ສີ່: ຕ້ອງບຸກທະລຸໃນດ້ານແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍສຸມໃສ່ວຽກງານທີ່ສຳ ຄັນດັ່ງນີ້:

( ກຳແໜ້ນຈຳນວນຄອບຄົວທຸກຍາກແຕ່ລະແຂວງ, ແຕ່ລະເມືອງ ແລະ ແຕ່ລະບ້ານມີ ເທົ່າໃດ Â©¨¦½À²¾½Á´È-ªÉº¤¡¿Ä©É£¸¾´ê÷¡¨¾¡ÁªÈì½£º®£ö¸Á´È-ºñ-Ã©Áêû ´ó¡¾-

£í-£¸É¾¡ˆ-ö©¸óêó¡¾- Á¡ÉÄ¢Ã¹ÉÁê©ÀÏ¾½¡ñ®ÁªÈì½À¯í¾Ï¾¨, -
ÁªÈì½£º®£ö¸ª¾´À¤ˆº- Ä¢¢º¤ÁªÈì½®É¾-.

( ຕ້ອງສຶກສາອົບຮົມ ປຸກລະດົມຊີ້ແຈງໃຫ້ຄອບຄົວທຸກຍາກເຂົ້າໃຈ ແລະ ມີຄວາມຕື່ນຕົວ ເປັນເຈົ້າການໃນການແກ້ໄຂຄວາມທຸກຍາກພາຍໃນຄອບຄົວຂອງຕົນ, ບົນພື້ນຖານການສະໜັບ ສະໜູນຊ່ວຍເຫຼືອຂອງບ້ານກໍຄື ໜ່ວຍງານຕ່າງໆທີ່ກ່ຽວຂ້ອງ.

( ນຳເອົາຄວາມຮູ້ໄປໃຫ້ປະຊາຊົນ ໂດຍເລີ່ມຕົ້ນຈາກການສອນໃຫ້ຮູ້ອ່ານ, ຮູ້ຂຽນ, ຮູ້ອະ ນາໄມ, ຮູ້ປ້ອງກັນພະຍາດ, ຮູ້ຈັກເບິ່ງແຍງສຸຂະພາບ ແລະ ວິທີການທຳມາຫາກິນເປັນອາຊີບເຊັ່ນ: ຮູ້ວິທີການປູກຝັງ - ລ້ຽງສັດ ແລະ ຄວາມຮູ້ອື່ນໆ.

( ພັດທະນາພື້ນຖານໂຄ່ງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ບົນພື້ນຖານການຂຸດຄົ້ນເສີມຂະຫຍາຍທ່າແຮງຂອງແຕ່ລະທ້ອງຖິ່ນ, ແຕ່ລະບໍລິເວນ.

( ສົ່ງເສີມໃຫ້ມີການຈັດຕັ້ງການຜະລິດ ແລະ ການສ້າງລາຍຮັບໃຫ້ແກ່ຄອບຄົວ, ບົນພື້ນ ຖານການນຳໃຊ້ທ່າແຮງກັບທີ່ ແລະ ມີການຊ່ວຍເຫຼືອ, ແນະນຳຈາກພາຍນອກຢ່າງໃກ້ຊິດ.

( ມີການຈັດຕັ້ງຊີ້ນຳແຕ່ເທິງຮອດຮາກຖານ ແລະ ມີການກຳນົດເຂດຈຸດສຸມພັດທະນາ ແກ້ໄຂຄວາມທຸກຍາກໃຫ້ຈະແຈ້ງ, ເຂດຈຸດສຸມພັດທະນາທີ່ໝັ້ນການປະຕິວັດ, ເຂດຈຸດສຸມທາງ ດ້ານວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເຂດປ່າສະຫງວນຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ, ເຂດຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່.

( ສຸມໃສ່ຄົ້ນຄ້ວາອອກນະໂຍບາຍ ແລະ ມີມາດຕະການສົ່ງເສີມເປັນພິເສດຕໍ່ການລົງທຶນ ຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດໃນໂຄງການຕ່າງໆໂດຍສະເພາະແມ່ນໂຄງການປູກ ຝັງ, ລ້ຽງສັດ ແລະ ປຸງແຕ່ງຢູ່ໃນເຂດທີ່ຍັງທຸກຍາກ.

<u>ຄຳຖາມ 57</u>: ເນື້ອໃນສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍ ເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ.

<u>ຕອບ</u>: ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ແມ່ນເພື່ອເສີມຂະຫຍາຍສິດເປັນເຈົ້າ ແລະ ຍົກສູງຄວາມຮັບຜິດຊອບຂອງທ້ອງຖິ່ນ ແລະ ຮາກຖານໃນການຂຸດຄົ້ນ, ນຳໃຊ້ທ່າແຮງ ແລະ ຄວາມສາມາດບົ່ມຊ້ອນຂອງທ້ອງຖິ່ນ ເຂົ້າໃນການຄຸ້ມຄອງບໍລິການດ້ານການເມືອງ, ວັດທະນະທຳ-ສັງ ຄົມ, ການກໍ່ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມອື່ນໆ. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດໃນທ້ອງຖິ່ນ ບົນຈິດໃຈເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ:

+ ເຮັດໃຫ້ເສດຖະກິດ-ສັງຄົມຂອງແຕ່ລະທ້ອງຖິ່ນ ແລະ ເຂດແຄວ້ນມີການຂະຫຍາຍຕົວຕໍ່ເນື່ອງ, ຍົກລະດັບການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ແລະ ແກ້ໄຂຄວາມທຸກຍາກຂາດເຂີນຂອງປະຊາຊົນ ໂດຍສະເພາະ ແມ່ນປະຊາຊົນຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກໃຫ້ໄດ້ເປັນກ້າວໆ.

+ ນຳເອົາແນວທາງນະໂຍບາຍຂອງພັກ ແລະ ແຜນການຂອງລັດນຳໄປຈັດຕັ້ງປະຕິບັດຢູ່ຮາກຖານໃຫ້ແທດເຖິງ ໂດຍສົ່ງເສີມໃຫ້ປະຊາຊົນ ແລະ ຄອບຄົວຜູ້ເຮັດການຜະລິດ ແລະ ການບໍລິການໄດ້ມີສ່ວນຮ່ວມຢ່າງເປັນເຈົ້າການໃນການສ້າງສາພັດທະນາບ້ານຊ່ອງ, ທ້ອງຖິ່ນຂອງຕົນ ແລະ ປະເທດຊາດ; ສ້າງຫົວໜ່ວຍພື້ນຖານຂອງລະບອບປະຊາທິປະໄຕ ປະຊາຊົນໃຫ້ມີຄວາມເຂັ້ມແຂງ.

ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາມີເນື້ອໃນແຕ່ລະດ້ານລະອຽດດັ່ງນີ້:

+ ເນື້ອໃນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ມີດັ່ງນີ້:

1. ດ້ານການເມືອງ - ການປົກຄອງ: ທຸກການຈັດຕັ້ງໃນລະບົບການເມືອງຂອງແຂວງໄດ້ ຮັບການປັບປຸງໃຫ້ກະທັດຮັດ, ສອດຄ່ອງເໝາະສົມ ແລະ ເຄື່ອນໄຫວຕາມພາລະບົດບາດຂອງຕົນ ເອງຢ່າງມີປະສິດທິຜົນ ສາມາດເຕົ້າໂຮມຄວາມສາມັກຄີບັນດາຊັ້ນຄົນທັງປວງກາລະດົມ ແລະ ຈັດຕັ້ງ ນຳພາເຂົາເຈົ້າເປັນກຳລັງແຮງໃນການສ້າງສາພັດທະນາເປັນຢ່າງດີ.

2. ດ້ານການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ: ແນວທາງປ້ອງກັນຊາດ - ປ້ອງກັນ ຄວາມສະຫງົບທົ່ວປວງຊົນຮອບດ້ານໄດ້ຮັບການຈັດຕັ້ງປະຕິບັດຢ່າງເລິກເຊິ່ງ ແລະ ເປັນຂະບວນ ກວ້າງຂວາງ; ກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຂອງແຂວງມີຄວາມໜັກແໜ້ນ, ສາ ມາດເປັນຫຼັກແຫຼ່ງແກ່ນສານໃຫ້ແກ່ການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບ ຮຽບຮ້ອຍໃນສັງຄົມ; ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ສົມທົບຢ່າງກົມກຽວກັບ ການພັດທະນາເສດຖະກິດ - ສັງຄົມ ແລະ ການພົວພັນຮ່ວມມືກັບແຂວງທີ່ມີຊາຍແດນຕິດຈອດ ກັບປະເທດໃກ້ຄຽງ.

3. ດ້ານເສດຖະກິດ: ຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ, ແຜນຍຸດ ທະສາດການພັດທະນາເສດຖະກິດ - ສັງຄົມຂອງຊາດ ເປັນແຜນຍຸດທະສາດ, ແຜນງານ, ໂຄງ ການພັດທະນາເສດຖະກິດ - ສັງຄົມ; ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບຂອງແຂວງ ສຳລັບແຕ່ລະໄລຍະຢ່າງສອດຄ່ອງກັບຈຸດພິເສດ ແລະ ທ່າແຮງທາງດ້ານເສດຖະກິດຂອງແຂວງ ແລະ ຈັດຕັ້ງປະຕິບັດເປັນຢ່າງດີ.

4. ດ້ານວັດທະນະທຳ - ສັງຄົມ: ມີພື້ນຖານໂຄງລ່າງ, ວັດຖຸອຸປະກອນ - ເຕັກນິກ ແລະ ວິ ຊາການດ້ານການສຶກສາ, ສາທາລະນະສຸກທີ່ໜັກແໜ້ນ ແລະ ມີຈຳນວນພຽງພໍຂັ້ນພື້ນຖານ, ມູນ ເຊື້ອວັດທະນະທຳ, ປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ໄດ້ຮັບການອະນຸລັກ ແລະ ເສີມ ຂະຫຍາຍ ເຕົ້າໂຮມໄດ້ຮັບຄວາມສາມັກຄີປອງດອງລະຫວ່າງປະຊາຊົນບັນດາເຜົ່າ.

5. ດ້ານການຕ່າງປະເທດ: ມີຄວາມສາມາດໃນການປະຕິບັດການພົວພັນກັບປະເທດໃກ້ ຄຽງຢ່າງມີໄຫວພິບ, ສາມາດປົກປັກຮັກສາຜົນປະໂຫຍດລວມຂອງປະເທດຊາດ ແລະ ຂອງທ້ອງ ຖິ່ນຕົນ, ສາມາດດຳເນີນການສົ່ງເສີມ, ດຶງດູດເອົາການຮ່ວມມືຈາກພາຍນອກ ແລະ ດຳເນີນການຕໍ່ ສູ້ແກ້ໄຂບັນຫາຕ່າງໆດ້ານການພົວພັນກັບບັນດາແຂວງຕິດຈອດຂອງປະເທດໃກ້ຄຽງ.

+ ເນື້ອໃນການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ມີດັ່ງນີ້:

ເນື່ອງຈາກວ່າເມືອງເປັນເຂດປະສານດ້ານການຄຸ້ມຄອງ - ບໍລິຫານ, ຊີ້ນຳບັນຊາຕາມການ ມອບໝາຍຂອງແຂວງ ຕໍ່ກັບບັນດາບ້ານ; ອີກດ້ານໜຶ່ງ ເມືອງຍັງຕ້ອງເປັນຫົວໜ່ວຍສູ້ຮົບເອກະ ລາດທີ່ເຂັ້ມແຂງໃນຮູບແຖວສູ້ຮົບ ບໍລິເວນປ້ອງກັນແຂວງ; ທັງຕ້ອງກຸ້ມຕົນເອງດ້ານສະບຽງອາ ຫານ ແລະ ການສູ້ຮົບ. ໃນການ

ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານນັ້ນ, ສິ່ງສຳຄັນກວ່າ ໝູ່ ແມ່ນການເສີມຂະຫຍາຍບົດບາດນຳພາຮອບດ້ານ ຂອງຄະນະພັກເມືອງຕິດພັນກັບການເພີ່ມ ທະວີບົດບາດຄຸ້ມຄອງ - ບໍລິຫານຮອບດ້ານ ຂອງອົງການປົກຄອງເມືອງນັ້ນເອງ, ການສ້າງເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ຈຶ່ງຕ້ອງດຳເນີນໄປດ້ວຍເນື້ອໃນ ດັ່ງນີ້:

1. ດ້ານການເມືອງ - ການປົກຄອງ: ອົງການຈັດຕັ້ງໃນລະບົບການເມືອງຂອງຂັ້ນຕົນ ມີຄວາມໜັກແໜ້ນເຂັ້ມແຂງດ້ານການຈັດຕັ້ງ, ບຸກຄະລະກອນ, ແບບແຜນວິທີເຮັດວຽກ ແລະ ການຊີ້ນຳ - ນຳພາ, ແຕ່ລະອົງການເຄື່ອນໄຫວຕາມພາລະບົດບາດຂອງຕົນຢ່າງມີປະສິດທິຜົນ ສາມາດເຕົ້າໂຮມຄວາມສາມັກຄີບັນດາຊັ້ນຄົນ, ບັນດາເຜົ່າ ທັງປຸກລະດົມ ແລະ ຈັດຕັ້ງນຳພາເຂົາ ເຈົ້າເປັນກຳລັງແຮງໃນການສ້າງສາພັດທະນາໄດ້ດີ.

2. ດ້ານປ້ອງກັນຊາດ - ປ້ອງກັນຄວາສະຫງົບ: ກຳລັງປ້ອງກັນຊາດ - ປ້ອງກັນຄວາມສະ ຫງົບ ມີຄວາມໜັກແໜ້ນ ທາງດ້ານການເມືອງ - ແນວຄິດ, ຄຸນສົມບັດສິນທຳປະຕິວັດ, ເຂັ້ມແຂງ ທາງດ້ານການຈັດຕັ້ງ, ການຊີ້ນຳບັນຊາ, ມີຄວາມສາມາດດ້ານວິຊາສະເພາະ, ສາມາດເປັນຫົວ ໜ່ວຍສູ້ຮົບເອກະລາດທີ່ເຂັ້ມແຂງໃນຮູບແຖວສູ້ຮົບບໍລິເວນປ້ອງກັນແຂວງ, ສາມາດບຳລຸງສ້າງ ແລະ ຈັດວາງສັບຊ້ອນ, ຊີ້ນຳບັນຊາໜ່ວຍກອງຫຼອນ ແລະ ໜ່ວຍ ປກສ ບ້ານໃນການເຄື່ອນໄຫວ ປ້ອງກັນ - ຮັກສາຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍ ຢູ່ຂັ້ນບ້ານ.

3. ດ້ານເສດຖະກິດ: ມີລະບົບໂຄງລ່າງດ້ານຄົມມະນາຄົມ - ຂົນສົ່ງ ແລະ ການສື່ສານ ທີ່ສະດວກເຂົ້າເຖິງບ້ານສ່ວນຫຼາຍ, ມີເງື່ອນໄຂອຳນວຍໃຫ້ກຳລັງການຜະລິດຂະຫຍາຍຕົວ; ຂະ ບວນການສົ່ງເສີມການຜະລິດເປັນສິນຄ້າ ແລະ ພັດທະນາຊົນນະບົດຮອບດ້ານ ໄດ້ຮັບການຈັດ ຕັ້ງປະຕິບັດຢ່າງກວ້າງຂວາງ; ໄດ້ຊຸກຍູ້ການນຳໃຊ້ແນວພັນ, ເຕັກນິກ ແລະ ວິທະຍາການໃໝ່ເຂົ້າ ໃນການຜະລິດຕິດພັນກັບການສ້າງຄອບຄົວຕົວແບບ ແລະ ການປຸງແຕ່ງຜົນຜະລິດກະສິກຳຢ່າງ ເໝາະສົມ, ຮັບປະກັນໄດ້ຄວາມໝັ້ນຄົງດ້ານສະບຽງອາຫານ.

4. ດ້ານວັດທະນະທຳ - ສັງຄົມ: ພື້ນຖານໂຄງລ່າງ ແລະ ພາຫານະ - ວັດຖຸ ດ້ານການສຶກ ສາ ໂດຍສະເພາະ ແມ່ນຂັ້ນປະຖົມສຶກສາແມ່ນຮັບປະກັນໃຫ້ເດັກນ້ອຍໃນເກນອາຍຸເຂົ້າຮຽນຂັ້ນ ປະຖົມໄດ້ມີເງື່ອນໄຂເຂົ້າຮຽນໝົດທຸກຄົນ; ດ້ານສາທາລະນະສຸກ ໂດຍສະເພາະແມ່ນການກັນພະຍາດ, ການສົ່ງເສີມສຸຂະພາບການປິ່ນປົວ ມີຄຸນນະພາບໃນລະດັບທີ່ແນ່ນອນ; ເມືອງໄດ້ມີມາດຕະ ການທີ່ເໝາະສົມໃນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຫຼຸດໜ້ອຍຖອຍລົງ ແລະ ເຮັດໃຫ້ສັງ ຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; ມູນເຊື້ອວັດທະນະທຳ - ປະເພນີອັນດີງາມ ຂອງປະຊາຊົນບັນດາເຜົ່າໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍ , ຄວາມສາມັກຄີປອງດອງລະ ຫວ່າງເຜົ່າ ແລະ ສະຕິຕໍ່ກົນອຸບາຍແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າ ແລະ ອື່ນໆ ໄດ້ຮັບການ ເສີມສ້າງ ແລະ ຍົກສູງ.

5. ດ້ານການຕ່າງປະເທດ: ມີຄວາມສາມາດປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບ ຮຽບຮ້ອຍຕາມຊາຍແດນ, ສ້າງຄວາມສາມັກຄີຮັກແພງ, ການພົວພັນຮ່ວມມື ແລະ ການແລກປ່ຽນ ຊື້ຂາຍນຳກັນລະຫວ່າງປະຊາຊົນຂອງເມືອງຕົນ ກັບເມືອງທີ່ມີຊາຍແດນຕິດຈອດກັນຂອງປະເທດ ເພື່ອນບ້ານເປັນຢ່າງດີ.

( ເນື້ອໃນການສ້າງບ້ານເປັນຫົວໜ່ວຍພັດທະນາ ມີດັ່ງນີ້:

ບ້ານໃນປະເທດເຮົາ ແມ່ນຫົວໜ່ວຍປົກຄອງລຸ່ມສຸດທີ່ຂຶ້ນກັບເມືອງ, ບ້ານໜຶ່ງປະກອບ ດ້ວຍຫຼາຍຄອບຄົວ, ບ້ານເປັນບ່ອນດຳລົງຊີວິດທຳມາຫາກິນຂອງຄົນສ່ວນໃຫຍ່, ການສ້າງບ້ານ ເປັນຫົວໜ່ວຍພັດທະນາ ແມ່ນເພື່ອເຮັດໃຫ້ບ້ານເປັນຫົວໜ່ວຍການປົກຄອງທີ່ເຂັ້ມແຂງ, ສາມາດ ປະຕິບັດພາລະໜ້າທີ່ບໍລິຫານລັດ ແລະ ຄຸ້ມຄອງເສດຖະກິດ - ສັງຄົມຕາມການແບ່ງຂັ້ນຄຸ້ມຄອງ ຢູ່ຂັ້ນບ້ານໄດ້ເປັນຢ່າງດີ. ການສ້າງບ້ານເປັນຫົວໜ່ວຍພັດທະນາ ຍັງໝາຍເຖິງການເຮັດໃຫ້ບ້ານ ມີການພັດທະນາ ກາຍເປັນຕົວເມືອງນ້ອຍໃນຊົນນະບົດ (ສຳລັບບ້ານຢູ່ຊົນນະບົດ) ໂດຍມີຈຸດປະ ສົງເພື່ອນຳພາຊາວບ້ານ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ.

ການສ້າງບ້ານເປັນຫົວໜ່ວຍພັດທະນາ ຕ້ອງດຳເນີນໄປຕາມເນື້ອໃນດັ່ງນີ້:

1. ດ້ານການເມືອງ - ການປົກຄອງ: ບ້ານມີລະບົບການເມືອງເຂັ້ມແຂງ, ມີອົງການປົກຄອງ ບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ເຄື່ອນໄຫວຕາມພາລະໜ້າທີ່ ຢ່າງ ເປັນປົກກະຕິ ສາມາດເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາຊັ້ນຄົນ, ບັນດາເຜົ່າພາຍໃນບ້ານ ເປັນກຳລັງແຮງໃນການສ້າງສາພັດທະນາບ້ານຊ່ອງ.

2. ດ້ານເສດຖະກິດ: ບ້ານມີພື້ນຖານໂຄງລ່າງ ຫຼື ພື້ນຖານວັດຖຸເຕັກນິກຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ໃນລະດັບທີ່ສາມາດຮັບປະກັນໃຫ້ປະຊາຊົນພາຍໃນບ້ານດຳເນີນການ ຜະລິດ ແລະ ການບໍລິການເປັນສິນຄ້າ ສ້າງລາຍໄດ້ເຂົ້າຄອບຄົວເປັນປົກກະຕິ; ທຸກຄອບຄົວລ້ວນ ແຕ່ມີພໍກິນພໍໃຊ້ ແລະ ມີຊີວິດການເປັນຢູ່ປົກກະຕິດີ

3. ດ້ານວັດທະນະທຳ - ສັງຄົມ: ປະຊາຊົນພານໃນບ້ານ ໄດ້ຮັບການສຶກສາອົບຮົມດ້ານ ການເມືອງ - ແນວຄິດ, ມີຄວາມຕື່ນຕົວດ້ານການເມືອງ ແລະ ມີຄວາມຫ້າວຫັນເປັນເຈົ້າການເຂົ້າ ຮ່ວມໃນວຽກງານລວມຂອງບ້ານ ກໍຄື ການທຳມາຫາກິນແກ້ໄຂຄວາມທຸກຍາກ, ສ້າງຄວາມຢູ່ດີກິນ ດີ ແລະ ຮັ່ງມີແກ່ຄອບຄົວ ທັງມີຄວາມສາມັກຄີປອງດອງ ແລະ ມີນ້ຳໃຈເອື້ອເຟື້ອຊ່ວຍເຫຼືອກັນ ເປັນຊຸມຊົນທີ່ມີການຄຸ້ມຄອງກັນແໜ້ນ, ຮູ້ໄກ່ເກ່ຍແກ້ໄຂບັນຫານຳກັນຢ່າງຖືກຕ້ອງເປັນທຳ. ເດັກ ໃນເກນອາຍຸເຂົ້າຮຽນ ລ້ວນແຕ່ເຂົ້າຮຽນບໍ່ຫຼຸດ 98%, ຜູ້ໃຫຍ່ມີອາຍຸ 15 ປີຂຶ້ນໄປ ຕ້ອງມີລະດັບ ການສຶກສາຈົບຊັ້ນປະຖົມບຳລຸງ ແລະ ມີແຜນຍົກລະດັບສູງຂຶ້ນເລື້ອຍໆ; ບ້ານໄດ້ຮັບການຢັ້ງຢືນ ເປັນບ້ານແບບຢ່າງດ້ານສາທາລະນະສຸກ, ທຸກຄອບຄົວຢູ່ກິນມີສຸຂະອານາໄມ ມີນ້ຳສະອາດໃຊ້ ແລະ ມີວິດຖ່າຍ, ເດັກໃນບ້ານໄດ້ຮັບການສັກຢາ ແລະ ຢອດຢາກັນພະຍາດ ບໍ່ຫຼຸດ 95%, ອັດຕາ ສ່ວນການຕາຍຂອງເດັກ ແລະ ຂອງແມ່ຕ້ອງຕ່ຳກວ່າຄາດໝາຍທີ່ລັດວາງອອກໃນແຕ່ລະໄລຍະ; ເປັນບ້ານທີ່ມີລະບຽບຈົບງາມ ແລະ ມີສິ່ງແວດລ້ອມທີ່ດີ.

4. ດ້ານການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ: ບ້ານມີຄວາມສະຫງົບ, ເປັນລະບຽບ ຮຽບຮ້ອຍ, ເປັນບ້ານປອດຢາເສບຕິດ ແລະ ບ້ານປອດຄະດີ ໂດຍມີຊາວບ້ານເອງເຂົ້າຮ່ວມເປັນ ກຳລັງຕົ້ນຕໍໃນໜ່ວຍກອງຫຼອນ ແລະ ໜ່ວຍປ້ອງກັນຄວາມສະຫງົບບ້ານ.

<u>ຄຳຖາມ </u>58: ຄວາມສາມັກຄີເປັນເອກະພາບພາຍໃນພັກສະແດງອອກແນວໃດ ?

<u>ຕອບ</u>: ຄວາມສາມັກຄີເປັນເອກະພາບພາຍໃນພັກ ແມ່ນມູນເຊື້ອຂອງພັກ, ແມ່ນເນື້ອໃນຕົ້ນຕໍອັນໜຶ່ງໃນການສ້າງພັກໃຫ້ມີຄວາມໜັກແໜ້ນທາງດ້ານການຈັດຕັ້ງ ແລະ ເປັນພື້ນຖານໃຫ້ ແກ່ຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນ.

- ຄວາມສາມັກຄີເປັນເອກະພາບພາຍໃນພັກຕ້ອງສະແດງອອກ ບົນພື້ນຖານຂອງຄວາມເປັນເອກະພາບດ້ານອຸດົມການ ແລະ ຈຸດໝາຍ ກໍຄື ແນວທາງນະໂຍບາຍຂອງພັກ.

- ຄວາມສາມັກຄີເປັນເອກະພາບພາຍໃນພັກຍັງຕ້ອງສະແດງອອກ ບົນພື້ນຖານຂອງຄວາມສາມັກຄີເປັນເອກະພາບພາຍໃນອົງການນໍາສູງສຸດ ກໍຄື ຄະນະພັກທຸກຂັ້ນ ແລະ ສະແດງອອກ ບົນພື້ນຖານການປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ການຕິຊົມຕົນເອງ, ຕິຊົມຊຶ່ງກັນ ແລະ ກັນ ແບບສະຫາຍ, ກ້າຫານ ແລະ ຈິງໃຈ.

<u>ຄໍາຖາມ</u> 59: ການຕິຊົມຕົນເອງ ແລະ ຕິຊົມຊຶ່ງກັນ ແລະ ກັນແມ່ນແນວໃດ ?

<u>ຕອບ</u>: - ໃນກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະໄໝທີ IX ໄດ້ກໍານົດໄວ້ຢູ່ໃນໜຶ່ງໃນ 5 ຫຼັກການ ກໍ່ສ້າງ ແລະ ປັບປຸງພັກ ວ່າພັກປະຊາຊົນປະຕິວັດລາວ ຖືເອົາການຕິຊົມຕົນເອງ, ຕິຊົມກັນເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ.

- ຕິຊົມຕົນເອງ, ຕິຊົມກັນ ໝາຍເຖິງໃນເວລາດໍາເນີນຊີວິດການເມືອງແຕ່ລະເດືອນ ສະມາ ຊິກພັກທຸກສະຫາຍຈິງໃຈຕໍານິຕົນເອງ ໂດຍບໍ່ປິດບັງຈຸດອ່ອນ ແລະ ຂໍ້ບົກຜ່ອງຂອງຕົນ, ບໍ່ຢ້ານກົວຕໍ່ການຕໍານິຕິຊົມ, ມີຄວາມຍິນຍອມຮັບເອົາຈຸດອ່ອນຂໍ້ບົກຜ່ອງ ແລະ ແກ້ໄຂຈຸດອ່ອນ, ຂໍ້ບົກຜ່ອງດ້ວຍຄວາມຈິງໃຈ, ປະກອບຄໍາຄິດຄໍາເຫັນໃຫ້ແກ່ສະຫາຍຢ່າງກົງໄປກົງມາ ເພື່ອອ້ອມກັນກ້າວ ໜ້າ ແລະ ເຮັດສໍາເລັດໜ້າທີ່ວຽກງານເປັນຢ່າງດີ ໂດຍຖືເອົາຜົນປະໂຫຍດຂອງຊາດ ແລະ ຂອງປະຊາຊົນເປັນກົກ.

<u>ຄໍາຖາມ</u> 60: ໃນ 60 ປີຜ່ານມາພັກປະຊາຊົນປະຕິວັດລາວໄດ້ມີຜົນງານ ແລະ ມູນເຊື້ອອັນສະຫງ່າງາມຫຍັງແດ່ ?

<u>ຕອບ</u>: ຜົນງານ ແລະ ມູນເຊື້ອຂອງພັກປະຊາຊົນປະຕິວັດລາວຕະຫຼອດໄລຍະ 60 ປີມີ ດັ່ງນີ້:

1. ຜົນງານພົ້ນເດັ່ນຂອງພັກປະຊາຊົນປະຕິວັດລາວ.

( ພັກໄດ້ວາງຍຸດທະສາດ, ຍຸດທະວິທີປະຕິວັດ ແຫ່ງການຕໍ່ສູ້ກູ້ຊາດຢ່າງຖືກຕ້ອງ, ມີຄວາມປະດິດສ້າງ ໃນການໝູນໃຊ້ຮູບການ ແລະ ວິທີການຕໍ່ສູ້ຢ່າງແທດເໝາະກັບຈຸດພິເສດໃນແຕ່ລະໄລຍະ, ທັງໄດ້ຈັດຕັ້ງນໍາພາຢ່າງຈິດຈໍ່ ຂະບວນການຕໍ່ສູ້ຂອງປະຊາຊົນ ແລະ ບັນດາກໍາ ລັງປະກອບອາວຸດ ຍາດເອົາໄຊຊະນະນີ້ໄປສູ່ໄຊຊະນະໃໝ່ໃຫຍ່ຫຼວງຂຶ້ນເລື້ອຍໆ, ອັນພົ້ນເດັ່ນແມ່ນໄດ້ກໍາແໜ້ນກາລະໂອກາດ ນໍາພາທົ່ວປວງຊົນລຸກຮື້ຂຶ້ນຍຶດອໍານາດໃນທົ່ວປະເທດແບບ “ປົວບໍ່ຊໍ້ານໍ້າບໍ່ຂຸ່ນ” ດ້ວຍ 3 ບາດຄ້ອນຍຸດທະສາດ ແລະ ສະຖາປະນາ ສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975, ພາປະເທດຊາດເຂົ້າສູ່ສັງກາດໃໝ່, ສັງ ກາດແຫ່ງການ “ສ້າງປະເທດສັນຕິພາບ ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ ແລະ ກ້າວໜ້າທາງສັງຄົມ...

( ພັກໄດ້ນໍາພາປະຊາຊົນທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດ ປົກປັກຮັກສາອໍາ ນາດອະທິປະໄຕປະຊາຊົນໄວ້ຢ່າງໝັ້ນຄົງ. ຮໍາບາດແຜສົງຄາມ; ຟື້ນຟູການຜະລິດ, ຂະຫຍາຍເສດຖະກິດ ແລະ ວັດທະນະທໍາຂອງລະບອບໃໝ່, ປ່ຽນແປງຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໃຫ້ເປັນປົກກະຕິ ແລະ ດີຂຶ້ນເປັນກ້າວໆ.

( ພັກໄດ້ເປັນເຈົ້າການ ວາງແນວທາງແນວທາງປ່ຽນແປງໃໝ່ອອກຢ່າງທັນການ, ທັງນໍາ ພາການຜັນຂະຫຍາຍຢ່າງຮອບດ້ານດ້ວຍບາດກ້າວອັນໜັກແໜ້ນ, ມີຫຼັກການ ແລະ ບັນລຸຜົນ ສໍາເລັດຫຼາຍປະການ; ພ້ອມກັນນັ້ນ ໄດ້ສະຫຼຸບຖອດຖອນບົດຮຽນ ຈາກພຶດຕິກໍາແຫ່ງການປ່ຽນແປງໃໝ່ ແລະ ສືບຕໍ່ບູລະນະແນວທາງໃຫ້ຄົບຖ້ວນສົມບູນຍິ່ງໆຂຶ້ນ, ພາປະເທດຊາດກ້າວຂຶ້ນ ດ້ວຍຖ່ວງທ່າໃໝ່.

2. <u>ມູນເຊື້ອຂອງພັກປະຊາຊົນປະຕິວັດລາວ.</u>

( ພັກເຮົາມີມູນເຊື້ອອັນສູງສົ່ງ ຍາມໃດກໍເດັດດ່ຽວຍຶດໝັ້ນລັດທິມາກ-ເລນິນ ແລະ ອຸດົມ ການສັງຄົມນິຍົມ, ມີມານະຈິດປະຕິວັດສຸດກົກສຸດປາຍ, ຜ່ານຜ່າການທົດສອບທຸກສິ່ງທຸກຢ່າງ ແລະ ຄວາມຫຍຸ້ງຍາກນາໆປະການ ເພື່ອນໍາພາປະຊາຊົນເຮັດສໍາເລັດໜ້າທີ່ໃນແຕ່ລະໄລຍະຂອງ ການປະຕິວັດ.

( ພັກເຮົາມີມູນເຊື້ອສາມັກຄີເອກະພາບໜັກແໜ້ນ, ຍາມໃດກໍເອົາໃຈໃສ່ເຮັດໃຫ້ຄວາມສາມັກຄີເປັນເອກະພາບພາຍໃນພັກເປັນແກ່ນສານ ໃຫ້ແກ່ຄວາມສາມັກຄີເປັນເອກະພາບໃນທົ່ວ ປວງຊົນລາວບັນດາເຜົ່າ.

( ພັກເຮົາມີມູນເຊື້ອປະດິດສ້າງໃນການໝູນໃຊ້ຫຼັກມູນທົ່ວໄປຂອງລັດທິມາກ-ເລນິນ ກໍຄືທິດສະດີວິທະຍາສາດ ແລະ ບົດຮຽນຂອງປະເທດຕ່າງໆເຂົ້າກັບເງື່ອນໄຂຕົວຈິງຂອງປະເທດເຮົາ; ພ້ອມກັນນັ້ນ ກໍມີຄວາມສະດຸ້ງໄວ ແລະ ເປັນເຈົ້າການປັບປຸງບູລະນະແນວທາງແຜນນະໂຍ ບາຍຂອງພັກໃຫ້ສອດຄ່ອງສົມບູນຂຶ້ນເລື້ອຍໆ.

( ພັກເຮົາມີມູນເຊື້ອອັນດີງາມໃນການພົວພັນກັບມະຫາຊົນ, ຖືປະຊາຊົນເປັນກົກ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດ ຂອງປະຊາຊົນສະແດງອອກໃນໄລຍະຕໍ່ສູ້ກູ້ຊາດ ກໍຄື ໄລ ຍະປົກປັກຮັກສາ ແລະ ສ້າງສາປະເທດຊາດ ແມ່ນເພື່ອປະໂຫຍດຂອງປະຊາຊົນ.

( ພັກເຮົາມີມູນເຊື້ອສາມັກຄີສາກົນ ແລະ ຍາມໃດກໍສົມທົບແໜ້ນກໍາລັງຂອງຊາດກັບກໍາລັງແຮງຂອງສາກົນ ເປັນຕົ້ນແມ່ນຄວາມສາມັກຄີພິເສດ ແລະ ຮ່ວມມືຮອບດ້ານກັບ ສສ ຫວຽດ ນາມ ແລະ ສປ ຈີນ.